# ຄູ່ມືຜູ້ນໍາ



# *PASTOR MANUAL*

By: Dr. James Oudom

# ຄູ່ມືອາຈານ

*ຄູ່ມືນີ້ໃຊ້ສຳຣັບອາຈານໃນເຄືອເພຣັສໄບທີຣຽນເພື່ອການທຳພິທີສິນຕ່າງໆ. ມັນເປັນສິ່ງຈຳເປັນທີ່ຜູ້ນຳເພຣັສໄບທີຣຽນທຸກຄົນຕ້ອງຮູ້ຈັກການທຳພິທີສິນຕ່າງໆ ແລະເຂົ້າໃຈເຖິງສິ່ງທີ່ຜູ້ນຳຊາວເພັຣສໄບທີຣຽນທັງຫຼາຍໄດ້ທຳ. ຫາກທ່ານຍັງຂ້ອງໃຈ ເຊີນຕິດຕໍ່ ແລະອ່ານປື້ມ ກົດຣະບຽບຂອງຊາວເພຣັສໄບທີຣຽນ.*

*ດ້ວຍຄວາມຮັກໃນພຣະຄຣິສ. ດຣ. ເຈມສ໌ ອຸດົມ*

1/ ຜູ້ຮັບໃຊ້ພຣະເຈົ້າ

2/ ພິທີແຕ່ງງານ

3/ ພິທີສິ່ງສະການ

4/ ພິທີໃຫ້ສິນບັບຕິສມາ

5/ ພິທີສິນມະຫາສະໜິດ

6/ ພິທີຖວາຍເດັກ

7/ ພິທີຕ້ອນຮັບສະມາຊິກ

8/ ພິທີແຕ່ງຕັ້ງເຈົ້າໜ້າທີ່ຄຣິສຕະຈັກ

9/ ພິທີສະຖາປະນາອາຈານ

10/ ພິທີຖວາຍຕົວເພື່ອຮັບໃຊ້ພຣະເຈົ້າ

11/ ພິທີກໍ່ສ້າງ ແລະຖວາຍຄຣິສຕະຈັກ

12/ ພິທີຖວາຍບ້ານ

## ຜູ້ຮັບໃຊ້ພຣະເຈົ້າ

ອາຈານ ແລະຜູ້ປົກຄອງຂອງຄຣິສຕະຈັກ ເປັນຜູ້ ຮັບໃຊ້ພຣະເຈົ້າ ຊຶ່ງມີໜ້າທີ່ອັນ ສູງສົ່ງ ແລະເປັນທີ່ ໜ້າເຄົາຣົບ ແລະນັບ ຖືຢ່າງຍິ່ງ. ພິທີການຕ່າງໆຂອງຄຣິສຕະຈັກ ໄດ້ຕົກຢູ່ໃຕ້ຄວາມຮັບຜິດຊອບອັນຍິ່ງ ໃຫຍ່ຂອງຜູ້ຮັບໃຊ້ພຣະເຈົ້າ. ໜ້າທີ່ອັນ ສູງສົ່ງເຊັ່ນນີ້ ເຮົາຈະທຳດ້ວຍຕົນເອງບໍ່ໄດ້ ຊຶ່ງນີ້ເປັນ ບັນຫາທີ່ຜູ້ຮັບໃຊ້ພຣະເຈົ້າ ຊຶ່ງຖືວ່າເປັນຜູ້ມີໃຈ ສັດທາ ຢ່າງແທ້ຈິງ ຕໍ່ພຣະເຈົ້າ ຕ້ອງໄດ້ທຳການ ໄຄ່ຄອນຮີນ ຕອງຢ່າງຄັກແນ່ເສັຽກ່ອນ.

**ປະການທຳອິດ** ອາຈານຈະຕ້ອງເປັນຜູ້ພິຈາຣະນາ ເບິ່ງສະພາບຈິດຂອງ ຕົນເອງເສັຽກ່ອນ. ອາຈານຕ້ອງທຳພາຣະກິດ ຕ່າງໆ ດ້ວຍຈິດດ້ວຍໃຈບໍ່ວ່າຈະເປັນ ການປະກອບ ພິທີການໃດໆ ກໍຕາມ ບໍ່ຄວນຖືວ່າເປັນພຽງໜ້າທີ່ປະຈຳວັນຂອງຕົນ ເທົ່ານັ້ນ ເພາະຄວາມ ຮູ້ສຶກຕ່າງໆທີ່ ສະແດງອອກ ມັນມີຄວາມໝາຍທີ່ສຳຄັນຕໍ່ຜູ້ທີ່ກ່ຽວຂ້ອງກັບພິທີ ນັ້ນໆ. ຜູ້ປະກອບພິທີຕ້ອງຖືວ່າ ທຸກໆ ພິທີການລ້ວນແຕ່ມີຄວາມ ສຳຄັນກັນທັງນັ້ນ ເພາະວ່າ ຖ້າຜູ້ປະກອບພິທີບໍ່ໃຫ້ຄວາມສຳຄັນກັບພິທີການນັ້ນອາດ ຈະເຮັດໃຫ້ຄົນອື່ນເຫັນວ່າ ພິທີການນັ້ນໆ ບໍ່ມີຄວາມສຳຄັນແລະສັກສິດ.

**ປະການທີສອງ** ອາຈານ ຕ້ອງໃຊ້ຄວາມຣະມັດຣະວັງ ໃນການແຕ່ງຕົວຂອງຕົນ ຕ້ອງໃຫ້ສຸພາບແລະເໝາະສົມກັບປະເພນີນິຍົມຂອງທ້ອງຖິ່ນນັ້ນໆ ອາຈານບໍ່ຈຳ ເປັນ ຕ້ອງສວມເສື້ອຜ້າຣາຄາແພງໆ ແຕ່ເສື້ອຜ້າຄວນໃຫ້ເປັນຣະບຽບຮຽບຮ້ອຍ. ຢ່າເຮັດໃຫ້ຄວາມໂອ່ໂຖງຂອງອາຈານ ເປັນສິ່ງດຶງດູດຄົນຟັງໃຫ້ໜີຈາກຄວາມສຳຄັນຂອງພຣະເຈົ້າ ຄວາມສະອາດເປັນຣະດັບຮອງລົງມາຈາກຄວາມບໍຣິສຸດທ່ານ ຈຶ່ງເປັນພາຊະນະທີ່ສະອາດຂອງພຣະເຈົ້ານີ້ຫາກຂາດຄວາມສະອາດ ມັນເປັນສິ່ງ ທີ່ໃຫ້ອະພັຍ ແກ່ອາຈານນັ້ນໆບໍ່ໄດ້.

**ປະການທີສາມ** ອາຈານ ຕ້ອງສຳຣວດອະຣິຍະບົດຂອງຕົນ ແລະເປັນຜູ້ ທີ່ຮູ້ຈັກ ກາລະເທສະ. ກິຣິຍາທ່າທາງຂອງອາຈານຈະຕ້ອງສະທ້ອນໃຫ້ເຫັນເຖິງຄວາມສຳຄັນຂອງພິທີ ນັ້ນໆ. ຜູ້ປະຕິບັດພາຣະກິດຂອງພຣະເຈົ້າຄວນທຳໜ້າທີ່ເປັນ ຕົວແທນຂອງພຣະເຈົ້າຢ່າງແທ້ຈິງ. ຄວາມສງ່າງາມຈຽມຕົວ ຄວາມອ່ອນສຸພາບ ຍ່ອມເປັນເຄື່ອງໝາຍຂອງຄວາມເປັນ ສຸພາບບຸຣຸດ ຫຼືສຸພາບສັດຕຣີອັນແທ້ຈິງ. ວຽກງານໃດໆ ທີ່ທຳໃຫ້ພິທີການນັ້ນບໍ່ເປັນທີ່ຮຽບຮ້ອຍ ເປັນເຫດໃຫ້ຄົນອື່ນ ບໍ່ເຫຼື້ອມໃສ ເຊັ່ນການ ມາບໍ່ທັນເວລາກຳໜົດປະຊຸມ ການປະກອບພິທີບໍ່ມີ ນ້ຳໜັກ ຫຼືການທຳພິທີການນັ້ນຍາວເກີນຄວນ ຍ່ອມເປັນການທຳລາຍຄວາມສັກສິດແລະ ເປັນຮອຍດ່າງໃຫ້ແກ່ພິທີ ການນັ້ນໆ. ອາຈານຈະບໍ່ທຳຄວາມເສັຽຫາຍໃຫ້ແກ່ບຸກ ຄົນຜູ້ໃດຄົນນຶ່ງບໍ່ວ່າ ໃນກໍຣະນີ ໃດໆກໍຕາມ. ອາຈານຄວນ ສຳນຶກຕົນເອງສເມີວ່າ ທ່ານຄືຜູ້ຮັບໃຊ້ພຣະເຈົ້າ ດັ່ງທີ່ພຣະຄຣິສ ໄດ້ຊົງບອກໄວ້ໃນພຣະທັມ ມາຣະໂກ10:43-45 *"ຖ້າຜູ້ໃດຢາກເກີດ ເປັນໃຫຍ່ໃນພວກທ່ານ ຜູ້ນັ້ນຈະຕ້ອງເປັນຜູ້ຮັບ ໃຊ້ທ່ານທັງຫຼາຍ. ແລະຖ້າຜູ້ໃດຢາກ ເປັນເອກເປັນຕົ້ນໃນພວກທ່ານຜູ້ນັ້ນຈະຕ້ອງ ເປັນຂ້ອຍໃຊ້ຂອງທ່ານທັງໝົດ. ເພາະບຸດມະນຸດນັ້ນບໍ່ໄດ້ມາໃຫ້ຄົນອື່ນປະຕິບັດຕົນ ແຕ່ມາເພື່ອປະຕິບັດເຂົາ ແລະ ປະທານຊີວິດຂອງຕົນໃຫ້ເປັນຄ່າໄຖ່ຄົນຈຳນວນ ຫຼາຍ"* ດັ່ງນັ້ນ ອາຈານ ບໍ່ແມ່ນຜູ້ມີອຳນາດພິເສດ ແຕ່ເປັນຜູ້ທີ່ພຣະເຈົ້າຊົງເລືອກ ມາໃຫ້ເປັນປາກກະບອກສຽງຂອງພຣະອົງ ແລະທຳໜ້າທີ່ປະຕິບັດວຽກງານຂອງພຣະອົງໃນໂລກ. ອາຈານທີ່ດີ ຈະຕ້ອງທຳການຮັກສາຕຳແໜ່ງອັນມີກຽດທີ່ ພຣະເຈົ້າຊົງມອບໃຫ້ນັ້ນຈົນຕາບເທົ່າຊົ່ວຊີວິດຂອງຕົນ.

# ພິທີແຕ່ງງານ

ພິທີການແຕ່ງງານ ຄວນທຳຢ່າງມີສງ່າຣາສີ ແລະສັກສິດ ເທົ່າໆ ກັນກັບພິທີສົມ ມະຫາສະໜິດ ແລະພິທີສົມບັບຕິສມາ. ຄວນທຳໃຫ້ຄູ່ສົມຣົດ ຮູ້ສຶກວ່າເຂົາທັງສອງ ກຳລັງທຳສັດສາບານສັນຍາຕໍ່ກັນ ຢູ່ຕໍ່ໜ້າພຣະພັກຂອງພຣະເຈົ້າ. ໃນສະໄໝນີ້ທີ່ມີການຢ່າຮ້າງຢ່າງຫຼວງຫຼາຍ ອາຈານຈຶ່ງສົມຄວນທີ່ຈະໃຫ້ພິທີແຕ່ງງານສົມຣົດນີ້ເປັນ ເຄື່ອງຜູກມັດຄູ່ບ່າວສາວ ໃຫ້ປະຕິບັດຕາມຄຳສັ່ງຂອງພຣະເຈົ້າ ແລະຄຳສັນຍາທີ່ ພວກເຂົາໃຫ້ແກ່ ກັນແລະກັນຢູ່ ຕໍ່ໜ້າພຣະພັກຂອງພຣະເຈົ້າ.

ອາຈານ ຄວນຫາຫຼັກປະກັນທາງດ້ານສວັດດີພາບໃຫ້ແກ່ ຄູ່ບ່າວສາວ. ການແຕ່ງງານຄວນອີງໃສ່ກົດໝາຍບ້ານເມືອງກ່ຽວກັບໃບແຕ່ງງານເພື່ອການທຳພິທີນັ້ນຈະ ສົມບູນ. ການທຳພິທີທາງສາສນາບໍ່ສາມາດຢັ້ງຢືນ ເຖິງຄວາມເປັນຜົວເມັຽກັນໃນ ດ້ານກົດໝາຍບ້ານເມືອງໄດ້ ດັ່ງນັ້ນ ກົດໝາຍ ແຕ່ລະທ້ອງຖິ່ນຄວນນຳມາສເນີ ເພື່ອໃຫ້ຄູ່ສົມຣົດຖຽມພ້ອມ .

ອາຈານຄວນໃຫ້ການປຶກສາຫາລືກັບຄູ່ບ່າວສາວ ກ່ອນທຳພິທີເຊັ່ນ:

1. ຄວາມສັກສິດ ແລະຂໍ້ຜູກພັນທີ່ຕ້ອງມີຕໍ່ ກັນພາຍຫຼັງການແຕ່ງງານ.

2. ຄວາມຈຳເປັນທີ່ທັງສອງຝ່າຍຕ້ອງປັບປຸງຕົວເອງໃຫ້ເຂົ້າຣະດັບມາດຕະຖານເພື່ອໃຫ້ການສົມຣົດມີຄວາມສຸກຕລອດໄປ.
3. ຖນອມຊີວິດສົມຣົດໄວ້ດ້ວຍຄວາມຮັກ ດ້ວຍຄວາມຄິດ ການໄຄ່ຄວນມີເຫດຜົນແລະໃຫ້ຄູ່ ສົມຣົດເຂົ້າໃຈໃນເຣື້ອງເພດດ້ວຍກັນ.
4. ຕຽມພ້ອມຮ່າງກາຍໃນຊີວິດການສົມຣົດໂດຍການ ປຶກສາຫາລືແພດໝໍ ຫຼືຜູ້ຊົງຄຸນວຸດທິທີ່ເຮົາໄວ້ໃຈໄດ້
5. ຄວາມເຂົ້າໃຈໃນດ້ານເສຖກິດຄອບຄົວ ການໃຊ້ຈ່າຍໃນບ້ານການທ້ອນທອມຊັພ ແລະການຖວາຍ.
6. ແນະນຳໃຫ້ມີການຖວາຍຕົວ ແລະຖວາຍຄອບຄົວໄວ້ກັບພຣະຄຣິສໃຫ້ພຣະອົງເປັນເອກໃນຈິດໃຈ ແລະໃນບ້ານເຮືອນ ຮູ້ຈັກຮັກສາວັນບໍຣິສຸດຂອງພຣະເຈົ້າ. ນອກນັ້ນ ຫາກອາຈານເຫັນວ່າມີອັນໆການສຳຄັນຫຍັງທີ່ຄວນນຳມາເພື່ອໃຫ້ ຄູ່ສົມຣົດ ໄດ້ສຶກສາຮັບໄວ້ເປັນບົດຮຽນ ອາຈານຄວນນຳມາ ບອກສອນແກ່ຄູ່ສົມຣົດ ກ່ອນທຳພິທີ.

ພິທີການ ແຕ່ງງານແບບກະທັດຮັດ ອາດທຳໄດ້ໂດຍມີຄູ່ ບ່າວສາວແລະພະຍານສອງ ສາມຄົນກໍໄດ້ ຫຼືຈະທຳພິທີຕໍ່ຈາກການນະມັສການເລີຍກໍໄດ້ ຫຼືຫາກຕ້ອງການໃຫ້ເປັນງານໃຫຍ່ ອາດທຳໃນບ້ານເຮືອນ ສະຖານທີ່ ຫຼືໃນຄຣິສຕະຈັກ ຊຶ່ງໄດ້ມີການ ຈັດຕຽມຮຽບຮ້ອຍແລ້ວ ທັງໄດ້ເຊີນບັນດາແຂກ ຍາດມິດສະຫາຍມາຮ່ວມໃນພິທີນັ້ນດ້ວຍ.

ພິທີການແຕ່ງງານ ບໍ່ວ່າຈະເປັນງານນ້ອຍຫຼືໃຫຍ່ກໍຕາມ ຈຸດມຸ້ງໝາຍສຳຄັນຂອງການແຕ່ງງານກໍຄືການໃຫ້ທັງສອງຄົນ ໄດ້ຮ່ວມສຳພັນກັນ ແລະປະຕິບັດຊຶ່ງກັນ ແລະກັນດ້ວຍ ຄວາມຮັກ.

ເປັນໜ້າທີ່ຂອງເຈົ້າບ່າວ ເຈົ້າສາວ ຜູ້ປົກຄອງ ຫຼືເຈົ້າພາບເປັນຜູ້ເລືອກວັນເວລາ ແລະສະຖານທີ່ສຳຣັບການແຕ່ງງານ. ຖ້າຈັດໃນສະຖານທີ່ໃຫຍ່ ຄວນປຶກສາຫາລື ວາງແຜນການ ແລະການຕົກລົງທຸກຢ່າງກັບອາຈານເສັຽກ່ອນ ກ່ອນທີ່ຈະເຖິງມື້ ປະກອບພິທີ ຄວນມີການຝຶກຊ້ອມໃຫ້ ທຸກຄົນທີ່ມີສ່ວນຮ່ວມ ຮູ້ຈັກໜ້າທີ່ຂອງ ຕົນວ່າຕ້ອງ ເຮັດສິ່ງໃດແດ່. ຮວມທັງນັກຮ້ອງ ນັກດົນຕຣີ ແລະຄະນະທີ່ຈະເຂົ້າ ຮ່ວມປະກອບພິທີ ກັບເຈົ້າສາວດ້ວຍ. ຂະບວນເຂົ້າພິທີ ອາດແຕກຕ່າງກັນໄປຕາມ ຈຳນວນຄົນທີ່ ມາຮ່ວມພິທີ ແລະສະຖານທີ່.

* ພໍ່ແມ່ເຈົ້າບ່າວ ຈະຕ້ອງມີຄົນນຳອອກ ມາໂດຍທີ່ແມ່ເຈົ້າບ່າວຈະເກາະແຂນ ຂອງຄົນນຳມາ ແລະພໍ່ຍ່າງຕາມຫຼັງແມ່ແລ້ວມານັ່ງຢູ່ທາງໜ້າເບື້ອງຂວາມື.
* ພໍ່ແມ່ເຈົ້າສາວ ມີຄົນນຳພາແມ່ຂອງເຈົ້າສາວອອກມາ ໂດຍທີ່ແມ່ນັ້ນເດີນເກາະ ແຂນຂອງຜູ້ນຳມາ ແລ້ວນັ່ງດ້ານຊ້າຍມື. ສຳຣັບພໍ່ຈະເປັນຕ້ອງເປັນຜູ້ນຳເຈົ້າສາວອອກມາ ເພື່ອມອບໃຫ້ ເຈົ້າບ່າວ. ຫຼັງຈາກມອບແລ້ວຈຶ່ງກັບໄປນັ່ງກັບແມ່ເຈົ້າສາວ.
* ອາຈານ ເຈົ້າບ່າວ ແລະເຈົ້າບ່າວລອງ ຈະເດີນອອກມາຈາກ ຫ້ອງຂ້າງໆຂອງໜ້າ ເວທີແລ້ວມາຢືນຢູ່ໜ້າເວທີ ຜູ້ປະກອບ ພິທີຈະຢືນ ຢູ່ທາງກາງ ເຈົ້າບ່າວແລະເຈົ້າ ບ່າວລອງຈະຢືນຢູ່ ເບື້ອງໜ້າ ດ້ານຊ້າຍມືຂອງຜູ້ປະກອບພິທີ. ທັງສາມຄົນຈະ ຢືນ ຫັນໜ້າ ໄປຫາແຂກຜູ້ຖືກເຊີນມາໃນງານ.

* ທາງດ້ານເຈົ້າສາວ ເຈົ້າສາວລອງຄົນນຶ່ງ ຫຼືສອງຄົນຈະເດີນ ອອກກ່ອນ ຈາກນັ້ນ ຕໍ່ມາຈະແມ່ນ ເດັກນ້ອຍຍິງ ເດີນອອກ ມາຊ້າໆ ແລະໂຮຍດອກໄມ້ໄປຕາມທາງຍ່າງ ແລ້ວຜູ້ສຸດທ້າຍ ຄືເຈົ້າສາວ ເດີນເກາະແຂນຊ້າຍຂອງພໍ່ ຫຼືຜູ້ປົກຄອງ ແລ້ວມາ ຢືນຢູ່ ເບື້ອງໜ້າດ້ານຂວາມືຂອງຜູ້ປະກອບພິທີ. ຜູ້ທີ່ມາກ່ອນ ໃຫ້ຢືນຢູ່ຫ່າງສຸດ ແລະຄົນຕໍ່ໆມາກໍຢືນຢູ່ໃກ້ຜູ້ປະກອບພິທີ ຕາມລຳດັບ ຈົນສຸດທ້າຍແມ່ນ ເຈົ້າສາວແລະພໍ່ຂອງ ເຈົ້າສາວ ມາຢຸດຢູ່ເບື້ອງຂວາມືຂອງຜູ້ປະກອບພິທີ ເຈົ້າບ່າວ ແລະເຈົ້າ ບ່າວລອງ ຢືນຢູ່ດ້ານຂວາມືຂອງເຈົ້າສາວ.
  ຕາມທຳນຽມທົ່ວໄປແລ້ວ ຂະນະທີ່ຂະບວນນຳເຈົ້າສາວເຂົ້າມາໃນສະຖານທີ່ປະ ກອບພິທີ ແຂກຜູ້ຮັບເຊີນຈະຢືນຂຶ້ນຕ້ອນຮັບເປັນການໃຫ້ກຽດ ຈົນກວ່າເຈົ້າສາວຈະມາ ຢືນຢູ່ຕໍ່ໜ້າຜູ້ປະກອບພິທີແລ້ວຈຶ່ງນັ່ງລົງ. ເມື່ອຈົບພິທີແລ້ວ ເຈົ້າບ່າວ ເຈົ້າສາວ ນຳຂະບວນ ຊຶ່ງຕິດຕາມດ້ວຍ ເຈົ້າບ່າວລອງ ເຈົ້າສາວລອງ ແລະເດັກຍິງ ໂຮຍດອກໄມ້ເດີນອອກໄປຈາກ ສະຖານທີ່ປະກອບພິທີ.

**ຂໍ້ແນະນຳກ່ຽວກັບຊ່າງພາບ.** ການຖ່າຍພາບອາດບໍ່ສົມຄວນ ທຳໃນເວລາປະກອບພິທີ ແຕ່ອາດທຳຫຼັງຈາກເຊັດພິທີແລ້ວ ໂດຍທີ່ຜູ້ປະກອບພິທີ ແລະເຈົ້າບ່າວ ເຈົ້າສາວ ສະແດງບົດ ເໝືອນກັບເຂົ້າພິທີອີກເທື່ອນຶ່ງ. ຜູ້ປະກອບພິທີຄວນກະກຽມໃນການປະສັຍໃຫ້ຢ່າງຈະແຈ້ງ ແລະບໍ່ໃຫ້ມີການເກີ້ເຂີນ. ຫາກມີຂໍ້ບົກພ່ອງ ຜູ້ປະກອບພິທີຄວນທຳການຂໍອະພັຍທັນທີ ແລ້ວດຳເນີນ ພິທີການນັ້ນຕໍ່ໄປ.

# ພິທີແຕ່ງງານແບບທີນຶ່ງ

*ຜູ້ປະກອບພິທີຈະກ່າວວ່າ:*
*"ຂໍໃຫ້ເຮົາຮ່ວມໃຈກັນອະທິຖານ"*
*ພຣະເຈົ້າຜູ້ຍິ່ງໃຫຍ່ ພຣະອົງເປັນພຣະເຈົ້າຜູ້ຊົງມີຄວາມຮັກ ອັນໝັ້ນຄົງ. ວັນນີ້ ຂໍພຣະອົງຊົງ ໃຫ້ຄວາມເມດຕາແກ່ທ່ານ..........................ແລະນາງ.......................... ຊຶ່ງພວກເຂົາໄດ້ເຂົ້າມາຫາພຣະເຈົ້າເພື່ອຂໍພຣະພອນຈາກພຣະອົງ ໃນວັນນີ້. ຂໍພຣະອົງຊົງ ໃຫ້ ພຣະວິນຍານບໍຣິສຸດຂອງພຣະອົງໄດ້ສະຖິດ ຢູ່ກັບພວກເຂົາເພື່ອຄຳປະຕິຍານສັນຍາຂອງພວກເຂົາ ໃນວັນນີ້ ຈະໄດ້ຖືກ ປະຕິບັດ ຕລອດໄປ ໃນພຣະນາມແຫ່ງພຣະມະຫາເຢຊູຄຣິສເຈົ້າ.... ອາແມນ.*

*ເຊີນທີ່ປະຊຸມນັ່ງລົງ ແລະອາຈານໃຫ້ໂອວາດ:*
***ສຳຣັບທ່ານ..........*** *ໃນຖານະເປັນສາມີ ພຣະເຈົ້າຊົງສອນທ່ານ ໃນພຣະທັມຂອງ ພຣະອົງວ່າ "ສາມີຈົ່ງຮັກພັຣຍາຂອງຕົນ ເໝືອນຢ່າງພຣະຄຣິສຊົງຮັກຄຣິສຕະຈັກ ແລະໄດ້ຊົງປະທານພຣະອົງ ເອງເພື່ອຄຣິສຕະຈັກນັ້ນ ເພື່ອພຣະອົງຈະໄດ້ຄຣິສຕະຈັກທີ່ ເຕັມໄປດ້ວຍສງ່າຣາສີ ບໍ່ມີທີ່ຕຳໜິ ຫຼືຮອຍເປິນທີນໃດໆ ແຕ່ເຕັມໄປດ້ວຍຄວາມບໍຣິສຸດ ແລະປາສຈາກ ສິ່ງຕຳໜິ ເຊັ່ນນີ້ແຫຼະ ທີ່ສາມີຄວນຮັກພັຣຍາຂອງຕົນ."*
***ສ່ວນນາງ................*** *ໃນຖານະເປັນພັຣຍາ ພຣະເຈົ້າຊົງສອນ ທ່ານ ໃນພຣະ ທັມຂອງພຣະອົງວ່າ "ສ່ວນພັຣຍາຈົ່ງຍອມຟັງ ສາມີຂອງຕົນ ເໝືອນຍອມຟັງ ອົງພຣະຜູ້ເປັນເຈົ້າ ເພາະສາມີເປັນສີສະຂອງພັຣຍາເໝືອນດັ່ງພຣະຄຣິສຊົງເປັນ ສີສະຂອງ ຄຣິສຕະຈັກ ໂດຍທີ່ພຣະອົງຊົງເປັນຜູ້ຊ່ວຍໃຫ້ລອດ. ຄຣິສຕະຈັກຍອມ ຟັງພຣະ ຄຣິສສັນໃດ ພັຣຍາກໍຄວນຍອມ ຟັງສາມີທຸກປະການສັນນັ້ນ"* ເອເຟໂຊ 5:21-28

*ສຳຣັບຄູ່ສົມຣົດທັງສອງ ພຣະເຈົ້າໄດ້ມີຄຳສອນໄວ້ດັ່ງນີ້:*

*"ເນື່ອງດ້ວຍພວກເຈົ້າມີຄວາມເກງກົວພຣະຄຣິສ ຈົ່ງຍອມຟັງ ຊຶ່ງກັນແລະກັນ"*

*"ພຣະຜູ້ເປັນເຈົ້າ ຊົງຜູກພັນມະນຸດເຂົ້າດ້ວຍກັນໂດຍການແຕ່ງງານ ແລະນີ້ໄດ້ ກາຍເປັນສູນກາງແຫ່ງຊີວິດ ເມື່ອຊາຍຍິງໄດ້ເລືອກຄູ່ຄອງຂອງຕົນແລ້ວ ແລະມາເຖິງອາຣະທີ່ເຂົາ ທັງສອງຍິນດີ ແລະເຕັມໃຈທີ່ຈະປະກາດຄວາມສຳພັນໄມຕຣີ ຢ່າງເປີດເຜີຍຕລອດຊີວິດຂອງເຂົາ ເວລານີ້ ເຂົາທັງສອງຈຶ່ງ ພ້ອມກັນເຂົ້າສູ່ແທ່ນ ບູຊາຊຶ່ງສົມຄວນແກ່ການຂາບໄຫວ້ ຢູ່ຕໍ່ໜ້າພຣະພັກພຣະເຈົ້າ ແລະຕໍ່ໜ້າເພື່ອນມະນຸດ ການກະທຳແບບນີ້ ຄູ່ສົມຣົດໄດ້ປະຕະບັດຕາມພຣະສັນຍາຂອງພຣະເຈົ້າ ແລະດຳເນີນ ໄປຕາມວິທີທາງທີ່ຈະນຳໄປສູ່ ຄວາມສຸກອັນແທ້ຈິງ. ການຜູກພັນ ທີ່ທ່ານທັງສອງໄດ້ທຳໃນວັນນີ້ ເປັນການຜູກພັນທີ່ໃກ້ຊິດສະໜິດສະໜົມທີ່ສຸດ ເປັນການຜູກພັນ ທີ່ສຸພາບອ່ອນຫວານ ແລະເປັນການສັນພັນທີ່ກໍ່ຮາກຂຶ້ນດ້ວຍ ປະສົບການແລະດ້ວຍ ຄວາມຮັກໄຄ່ຂອງແຕ່ລະຝ່າຍ ສຳຣັບບຸກຄົນທີ່ເຊື່ອພຣະເຈົ້າ ຍ່ອມເຊື່ອວ່າ ການສົມຣົດ ຄືການຜູກສຳພັນຕໍ່ອົງພຣະຜູ້ເປັນເຈົ້າ ພຣະອົງຊົງ ສະຖາປະນາ ການແຕ່ງງານເພື່ອໃຫ້ມະນຸດມີຄວາມສຸກ ແລະມີສວັດດີພາບ ອັນແທ້ຈິງ.*

## *ພຣະເຈົ້າຊົງສອນເລື້ອງຄວາມຮັກດັ່ງນີ້:*

*"ຄວາມຮັກນັ້ນກໍອົດທົນດົນນານ ຊອບໃນການເມດຕາ ກະຣຸນາ, ຄວາມຮັກ ບໍ່ເຫິງສາ, ບໍ່ອວດອ້າງ, ບໍ່ຈອງຫອງ, ບໍ່ເຮັດການອັນບໍ່ສຸພາບ, ບໍ່ຄຶດເຫັນແກ່ ປະໂຫຍດສ່ວນຕົວຝ່າຍດຽວ, ບໍ່ມີໃຈຮ້າຍງ່າຍ, ບໍ່ຊອບຈົດຈຳຄວາມຜິດ, ບໍ່ຍິນດີ ໃນການອະທັມ ແຕ່ຍິນດີໃນການສັດຈິງ, ບໍ່ຊອກຄົ້ນ ຫາຄວາມຜິດຂອງຄົນອື່ນ ແຕ່ເຊື່ອໃນສ່ວນດີ ຂອງເຂົາ, ຄວາມຮັກ ສູ້ທົນທຸກສິ່ງ, ເຊື່ອທຸກສິ່ງ, ໄວ້ວາງໃຈ ທຸກສິ່ງ, ແລະພຽນ ອົດທົນເອົາທຸກສິ່ງ"*

*"ຄວາມສຳພັນທາງໃຈແລະກາຍ ດ້ວຍອຸດົມຄະຕິອັນສູງສົ່ງເຊັ່ນນີ້ບໍ່ແມ່ນເປັນການ ຜູກພັນທີ່ມີຄວາມໝາຍແບບຕື້ນໆ ຫຼືໄຮ້ສະຕິຮັບຜິດຊອບ ແຕ່ເປັນໄປດ້ວຍຄວາມ ເຄົາຣົບນັບຖື ໄຕ່ຕອງຢ່າງສຸກຂຸມຮອບຄອບ ແລະດ້ວຍຄວາມຢຳເກັງ ພຣະເຈົ້າ. ບັດນີ້ ທ່ານທັງສອງກຳລັງກ້າວເຂົ້າສູ່ຄວາມສຳພັນ ດັ່ງໄດ້ກ່າວມາ ນີ້ແລ້ວ.*

**ການມອບເຈົ້າສາວ** (ຖ້າເຈົ້າສາວມີພໍ່ ຫຼືຜູ້ປົກຄອງເປັນຜູ້ມອບຕົວ ອາຈານຈະ ຖາມວ່າ:

*"ໃຜເປັນຜູ້ມອບນາງ.................. (ຊື່ ນາມສະກຸນ) ໃຫ້ແຕ່ງງານ ກັບທ່ານ................* (ຊື່ ນາມສະກຸນ)
ຜູ້ເປັນພໍ່ຈະຕອບວ່າ: "ຂ້າພະເຈົ້າເປັນຜູ້ມອບ" ຫຼື "ຂ້າພະເຈົ້າ ແລະພັຣຍາ ເປັນຜູ້ມອບ"
ຈາກນັ້ນ ພໍ່ ຫຼືຜູ້ປົກຄອງຂອງເຈົ້າສາວ ຈະຈັບມືຂອງເຈົ້າສາວ ວາງລົງເທິງມືຂອງ ເຈົ້າບ່າວແລ້ວກັບໄປນັ່ງຕາມບ່ອນທີ່ໄດ້ ກຳໜົດໄວ້.

***ອາຈານຈະກ່າວວ່າ*** *"ທ່ານ...................... ແລະນາງ.......................... ເນື່ອງຈາກຈຸດປະສົງອັນແຮງກ້າຂອງພວກທ່ານທີ່ຍິນດີເຂົ້າສູ່ ງານວິວານີ້ ຕໍ່ໜ້າພຣະພັກຂອງພຣະເຈົ້າ ແລະຕໍ່ໜ້າຍາດມິດສະຫາຍທີ່ມາເປັນສັກຂີພິຍານ. ຂ້າພະເຈົ້າ ໃນນາມອາຈານ ຜູ້ປະກອບພິທີນີ້ໃຫ້ພວກທ່ານ ຈະຂໍຖາມທ່ານອີກເປັນຄັ້ງ ສຸດທ້າຍວ່າ:*

*"ທ່ານ..... ............... ທ່ານຍິນດີຈະຮັບນາງ................. ໄວ້ເປັນພັຣຍາຂອງທ່ານຈະຮັກນາງ ໃຫ້ກຽດແລະພິທັກຮັກສານາງໄວ້ ເປັນສາມີທີ່ດີແລະຊື່ສັດຂອງນາງ ຕາບເທົ່າທີ່ ພວກທ່ານທັງສອງຍັງມີຊີວິດຢູ່*
*ທ່ານໃຫ້ສັນຍາໄດ້ຫຼື ?*

ຜູ້ຊາຍຕອບ: "ຂ້າພະເຈົ້າສັນຍາ"

**ຈາກນັ້ນ ອາຈານຈະອ່ອຍໜ້າມາຖາມເຈົ້າສາວ:**

*"ນາງ........... ທ່ານຍິນດີຈະຮັບເອົາ ທ່ານ............ ໄວ້ເປັນສາມີຂອງທ່ານ ສັນຍາວ່າຈະຮັກລາວ, ຊື່ສັດ ແລະເປັນພັຣຍາ ທີ່ດີຂອງລາວ ຕລອດເທົ້າທີ່ທ່ານ ທັງສອງຍັງມີຊີວິດຢູ່ ທ່ານໃຫ້ສັນຍາໄດ້ຫຼື?*

ຜູ້ຍິງຕອບ: "ຂ້າພະເຈົ້າໃຫ້ສັນຍາ"

ອາຈານ ປີ້ນໜ້າໄປຫາທີ່ປະຊຸມແລ້ວກ່າວ *"ຄຳປະຕິຍານນີ້ ໃຫ້ເປີດເຜີຍຕໍ່ໜ້າ ພວກທ່ານທີ່ມາຮ່ວມ ແລະຊ້ອງໜ້າ ພຣະພັກພຣະເຈົ້າແລ້ວ ໃນອັນນີ້ ຫາກໃຜຄິດວ່າ ຄູ່ນີ້ບໍ່ສົມຄວນ ແກ່ການວິວານີ້ ຂໍໃຫ້ທ່ານກ້າວອອກມາຂັດຂວາງ ຫຼືບໍ່ດັ່ງນັ້ນໃນຊົ່ວ ຊີວິດນີ້ ທ່ານຈະບໍ່ມີໂອກາດອີກ.* (ຢຸດບຶດນຶ່ງ ແລ້ວກ່າວວ່າ" *"ໃນເມື່ອພຣະເຈົ້າ ໃຫ້ທ່ານທັງເປັນ ອັນນຶ່ງອັນດຽວກັນ ກໍຢ່າໄດ້ໃຫ້ມະນຸດຄົນໃດ ແຍກທ່ານ ອອກຈາກກັນເລີຍ."*

ເຂົ້າສູ່ພິທີໃຫ້ຄຳສັດສັນຍາຂອງຄູ່ບ່າວສາວ.

ຈາກນັ້ນ ອາຈານໃຫ້ເຈົ້າສາວເຈົ້າບ່າວຈັບມືຂວາຊຶ່ງກັນແລະກັນ

*"ໃຫ້ພວກທ່ານຈັບມືຂວາ ຊຶ່ງກັນແລະກັນ ແລະກ່າວຄຳ ປະຕິຍານຕາມອາຈານດັ່ງນີ້:*

( ຄູ່ວິວາຕ້ອງປີ້ນໜ້າໃສ່ກັນ ແລະຈັບມືຂວາຊຶ່ງກັນແລະກັນ)

***ຜູ້ຊາຍ*** "ຕໍ່ໜ້າພຣະເຈົ້າ ແລະຕໍ່ໜ້າສັກຂີພິຍານທັງຫຼາຍ, ຂ້າພະເຈົ້າ ..........ຈະຮັບເອົານາງ..........ໄວ້ເປັນ ພັຣຍາຂອງຂ້າພະເຈົ້າ, ແລະສັນຍາວ່າ ຈະຮັກນາງ, ຈະເປັນສາມີທີ່ຊື່ສັດຕໍ່ນາງ, ຈະໃຫ້ກຽດນາງ, ຈະພິທັກຮັກສານາງ ບໍ່ວ່າຈະທຸກຫຼືສຸກ ຈະເຈັບເປັນຫຼືແຂງແຮງ ຈະມ່ວນຊື່ນຫຼືເສົ້າໂສກ ຂ້າພະເຈົ້າຂໍສັນຍາວ່າ ຈະຢູ່ກັບນາງ ຕາບເທົ້າທີ່ ພວກເຮົາທັງສອງຍັງມີຊີວິດຢູ່"

***ຜູ້ຍິງ*** "ຕໍ່ໜ້າພຣະເຈົ້າ ແລະຕໍ່ໜ້າສັກຂີພິຍານທັງຫຼາຍ,ຂ້າພະເຈົ້າ...........ຈະຮັບເອົາທ່ານ..........ໄວ້ເປັນ ສາມີຂອງຂ້າພະເຈົ້າ, ແລະສັນຍາວ່າ ຈະຮັກລາວ, ຈະເປັນພັຣຍາທີ່ດີ ແລະຊື່ສັດຕໍ່ລາວ, ຈະໃຫ້ກຽດລາວ, ບໍ່ວ່າຈະທຸກ ຫຼືສຸກຈະເຈັບ ເປັນ ຫຼືແຂງແຮງ ຈະມ່ວນຊື່ນຫຼືເສົ້າໂສກ ຂ້າພະເຈົ້າຂໍສັນຍາວ່າ ຈະຢູ່ກັບລາວຕາບ ເທົ້າທີ່ ພວກເຮົາ ທັງສອງຍັງມີຊີວິດຢູ່.

**ຫາກມີແຫວນແຕ່ງງານທີ່ຈະຕ້ອງແລກປ່ຽນກັນ ອາຈານຄວນ ຖາມຄູ່ສົມຣົດວ່າ:**

*" ພວກທ່ານມີຫຍັງເປັນສິ່ງຢັ້ງຢືນເຖິງຄຳປະຕິຍານສັນຍານີ້? "*

ຕອນນີ້ ເພື່ອນເຈົ້າບ່າວແລະເຈົ້າສາວຕ້ອງຢຽມຕືອຍື່ນແຫວນແຕ່ງງານໃຫ້ເຈົ້າບ່າວ ເຈົ້າສາວ ແລ້ວເຈົ້າບ່າວເຈົ້າສາວ ເອົາແຫວນນັ້ນມອບໃຫ້ອາຈານ. ຈາກນັ້ນ ອາຈານຈະກ່າວວ່າ:

*" ແຫວນນີ້ ເປັນວົງກົມເຊື່ອມເຂົ້າກັນ ບໍ່ມີຈຸດເລີ່ມຕົ້ນ ແລະບໍ່ມີທີ່ສິ້ນສຸດ ແລະເປັນທອງຄຳອັນ ບໍຣິສຸດແລະຖາວອນ ອັນເປັນຄວາມໝາຍ ຂອງຊີວິດສົມຣົດ ທີ່ບໍຣິສຸດ ແລະຢັ້ງຢືນ ຊຶ່ງຄູ່ບ່າວສາວໄດ້ມອບໃຫ້ແກ່ກັນແລະກັນ ເຄື່ອງໝາຍ ແຫ່ງການສົມຣົດນີ້ ຈະເປັນຕາປະທັບດວງໃຈ ຂອງທ່ານທັງສອງຕລອດ ກາລະນານເທົ້າ ແຕ່ບັດນີ້ແລະສືບໆໄປ ເປັນນິດ ".*

ອາຈານມອບແຫວນຄືນໃຫ້ເຈົ້າບ່າວເຈົ້າສາວ ແລ້ວໃຫ້ທັງສອງສວມແຫວນນັ້ນ ໃສ່ຄີ່ວນີ້ນາງເບື້ອງຊ້າຍຂອງກັນແລະກັນ ແລ້ວກ່າວຕາມອາຈານວ່າ *"ດ້ວຍແຫວນວົງນີ້ ຂ້າພະເຈົ້າ .. (ຊື່)... ຂໍແຕ່ງງານເປັນສັນຍາໝັ້ນໝາຍແກ່ ...(ຊື່)... ແລະຂໍສັນຍາວ່າ ຈະຮັກ ແລະເຫີດທູນ ຈະຊື່ສັດແລະດູ້ນຄອງທ່ານ ຈົນຊົ່ວຊີວິດ ".*

ຈາກນັ້ນອາຈານ ໃຫ້ຄູ່ສົມຣົດຊຸເຄົ່າລົງ ເພື່ອທຳການຖວາຍຕົວຮັບພຣະພອນ:
*"ດັ່ງທີ່ ທ່ານ............ ແລະນາງ............ ໄດ້ເຂົ້າພິທີສົມຣົດກັນ ໃນວັນນີ້ ໂດຍທີ່ມີພຣະເຈົ້າ ແລະແຂກຜູ້ມີກຽດມາເປັນສັກຂີພິຍານ ໂດຍອາສັຍອຳນາດອັນສັກສິດທີ່ມາແຕ່ພຣະເຈົ້າ ບັດນີ້ ຂ້າພະເຈົ້າ ໃນນາມຜູ້ຮັບໃຊ້ພຣະເຈົ້າຂໍປະກາດວ່າ ບຸກຄົນທັງສອງ ເປັນສາມີ ພັຣຍາກັນແລ້ວ ແລະໄດ້ຜູກພັນກັນດ້ວຍພິທີສົມຣົດອັນ ບໍຣິສຸດ ເມື່ອພຣະເຈົ້າຊົງ ໃຫ້ເຂົາທັງສອງ ເປັນຄູ່ຜູກພັນ ກັນແລ້ວ ກໍຢ່າໃຫ້ມະນຸດ ຄົນໃດແຍກເຂົາອອກຈາກກັນເຖີດ...ອາແມນ"*

ເຈົ້າບ່າວ ເຈົ້າສາວລຸກຂຶ້ນ. ອາຈານ ຍົກແຂນໃຫ້ພອນແກ່ຄູ່ສົມຣົດໃໝ່.
*"ຕັ້ງແຕ່ບັດນີ້ເປັນຕົ້ນໄປ ທ່ານທັງສອງ ຈົ່ງຮ່ວມຊີວິດ ຄຽງບ່າຄຽງໄລ່ກັນ ຈົ່ງໃຊ້ ຄວາມຮັກ ເປັນເຄື່ອງປະສານງານທຸກດ້ານ ແລະຈົ່ງ ໃຫ້ແຫວນຊຶ່ງທ່ານ ສວມ ໃຫ້ກັນແລະກັນນັ້ນ ເປັນສັນຍາລັກແຫ່ງຄວາມຮັກ ແລະຄວາມສຸກຕລອດໄປເຖີດ. ຂໍໃຫ້ພຣະຄຣິສ ຊົງເປັນປະມຸກ ໃນຄອບຄົວຂອງທ່ານ ແລະຂໍ ພຣະເຈົ້າຊົງອວຍພຣະພອນ ໃນຊີວິດຄູ່ຂອງທ່ານ ແຕ່ວັນນີ້ ແລະສືບໄປເປັນນິດ. ຂ້າພະອົງທູນຂໍ ສິ່ງເຫຼົ່ານີ້ ໃນພຣະນາມ ແຫ່ງພຣະບິດາ ພຣະບຸດ ແລະພຣະວິນຍານບໍຣິສຸດ ອາແມນ.*

ຕອນນີ້ ເປັນຈັງຫວະທີ່ ອາຈານ ແນະນຳຄູ່ສົມຣົດໃໝ່ ແກ່ທີ່ ປະຊຸມຮັບຊາບ: *"ທ່ານທີ່ມີກຽດທັງຫຼາຍ ຂ້າພະເຈົ້າຂໍແນະນຳທ່ານໃຫ້ ຮູ້ຈັກ ທ່ານ............... ແລະນາງ........................*(ໃສ່ນາມສະກຸນຜົວ)
ແຕ່ເວລານີ້ເປັນຕົ້ນໄປ.

***ຂໍພຣະເຈົ້າອວຍພອນທ່ານທຸກຄົນທີ່ມາຮ່ວມພິທີໃນວັນນີ້....................***
ເສັດພິທີແລ້ວ ເຈົ້າບ່າວເຈົ້າສາວເດີນອອກຈາກສະຖານທີ່ ໄປຄອຍຢູ່ໃນສະຖານ ທີ່ອັນ ສົມຄວນ ເພື່ອຮັບການສະແດງຄວາມຍິນດີຈາກແຂກທີ່ມາຮ່ວມ.

## ພິທີການແຕ່ງງານແບບທີສອງ

ດ້ວຍກຽດອັນສູງສົ່ງ ພວກເຮົາໄດ້ມາຮວມຊຸມນຸມກັນໃນວັນນີ້ ເພື່ອເປັນສັກຂີ ພິຍານ ໃນແກ່ການສົມຣົດຣະຫວ່າງທ່ານ......................(ຊື່ເຈົ້າບ່າວ ແລະນາງສາວ:.........................(ຊື່ເຈົ້າສາວ) ຊຶ່ງຈະເຂົ້າສູ່ການປະຕິຍານເປັນຫຸ້ນສ່ວນການ ຄວາມສຸກແຫ່ງການແຕ່ງງານໃນຄັ້ງນີ້. ຂໍພວກເຮົາເຂົ້າສູ່ພິທີນີ້ດ້ວຍການອະທິຖານຂໍການຊົງນຳຈາກພຣະເຈົ້າ. ຂໍເຊີນ ຮ່ວມໃຈກັນອະທິຖານ *"ຂ້າແດ່ພຣະເຈົ້າ ການສົມຣົດ ເປັນການເຂົ້າຮ່ວມກັນເປັນອັນນຶ່ງອັນ ດຽວກັນທັ້ງ ທາງກາຍ ແລະທາງ ໃຈຂອງທັ້ງສອງທ່ານ. ວັນນີ້ ຂໍພຣະອົງຊົງເປັນປະທານ ໃນພິທີອັນສັກສິດນີ້ດ້ວຍ. ອະທິຖານ ໃນພຣະນາມພຣະມະຫາເຢຊູຄຣິສເຈົ້າ.. ອາແມນ.*

ອາຈານ ໃຫ້ໂອວາດ:

*ທ່ານ:................. ແລະນາງສາວ:....................... ໄດ້ເຂົ້າມາ ຜູກພັນກັນໂດຍການສົມຣົດ ຊຶ່ງເປັນພິທີແຮກ ແລະເປັນພິທີທີ່ເກົ່າແກ່ຂອງໂລກ ພິທີສົມຣົດນີ້ ອົງພຣະຜູ້ເປັນເຈົ້າໄດ້ຊົງເປັນຜູ້ສະຖາປະນາຂຶ້ນເອງ ແລະຊົງປະກອບພິທີການຄັ້ງແຮກດ້ວຍພຣະອົງເອງ. ດັ່ງນັ້ນ ຈຶ່ງຫວັງວ່າ ທ່ານທັງສອງຈະເຂົ້າໃຈດີວ່າ ພິທີທີ່ທ່ານກ້າວເຂົ້າສູ່ການຮ່ວມຜູກພັນແບບນີ້ ເປັນພິທີທີ່ສັກສິດ. ເຖິງແມ່ນວ່າ ມະນຸດຈະທຳການຜິດບາບ ແຕ່ເນື້ອໃນຂອງການສົມຣົດນີ້ຍັງຄົງຢູ່ ເພາະພຣະເຈົ້າຊົງ ອວຍພຣະພອນການສົມຣົດຄັ້ງປະຖົມະການແບບໃດ ພຣະອົງກໍຈະຊົງອວຍພຣະພອນ ສຳຣັບການສົມຣົດຂອງພວກທ່ານຄັ້ງນີ້ເຊັ່ນກັນ. ອັນນີ້ ທ່ານຈຶ່ງຄິດສເມີວ່າ ການເສັຽສະຣະແກ່ກັນແລະກັນນັ້ນເປັນສິ່ງສຳຄັນໃນຊີວິດສົມຣົດ ພຣະເຈົ້າຊົງຫວັງສເມີວ່າພວກທ່ານຈະອຸທິດຕົວເອງ ໃຫ້ແກ່ກັນແລະ ກັນຕລອດເວລາ*

*ສຳຣັບທ່ານ:................... (ຊື່ເຈົ້າບ່າວ)ພຣະຄຣິສຊົງ ໃຫ້ໂອວາດທ່ານດັ່ງນີ້*
*"ສາມີຈົ່ງຮັກພັຣຍາຂອງຕົນ ເໝືອນຢ່າງພຣະຄຣິສຊົງຮັກຄຣິສຕະຈັກ ແລະໄດ້ຊົງປະທານພຣະອົງເອງເພື່ອຄຣິສຕະຈັກນັ້ນ ເພື່ອພຣະອົງຈະໄດ້ຄຣິສຕະຈັກຊຶ່ງມີ ສງ່າຣາສີ ບໍ່ມີທີ່ຕຳໜິຢ່າງນຶ່ງຢ່າງໃດເລີຍ ແລະໄຮ້ຈາກການມົນທິນ ແຕ່ບໍຣິສຸດ ນັ້ນແຫຼະສາມີຄວນຮັກພັຣຍາຂອງຕົນ"*

*ສ່ວນນາງສາວ:..................(ຊື່ເຈົ້າສາວ) ພຣະຄຣິສໄດ້ສອນທ່ານໄວ້ດັ່ງນີ້.*
*"ພັຣຍາຈົ່ງຍອມຟັງສາມີຂອງຕົນ ເໝືອນຍອມຟັງອົງພຣະຜູ້ເປັນເຈົ້າ ເພາະວ່າສາມີ ເປັນສີສະຂອງພັຣຍາ ເໝືອນພຣະຄຣິສເປັນສີສະຂອງຄຣິສຕະຈັກ ໂດຍທີ່ພຣະອົງ ເປັນຜູ້ຊ່ວຍໃຫ້ລອດ ຄຣິສຕະຈັກ ຄືພຣະກາຍຂອງພຣະອົງ ຄຣິສຕະຈັກຍອມຟັງ ພຣະຄຣິສສັນໃດ ພັຣຍາຄວນຍອມຟັງສາມີທຸກປະການສັນນັ້ນ"*

ພຣະຄຣິສທັມຄຳພີໄດ້ສອນທັງສາມີແລະພັຣຍາດັ່ງນີ້:
"ຈົ່ງຍອມຟັງຊຶ່ງກັນແລະກັນ ດ້ວຍຄວາມເກງກົວຕໍ່ພຣະຄຣິສ"

**ເຂົ້າສູ່ການໃຫ້ຄຳສັດສັນຍາ: ອາຈານກ່າວກັບເຈົ້າບ່າວວ່າ:**
*ທ່ານ:..............(ຊື່ເຈົ້າບ່າວ) ທ່ານຈະຮັບເອົານາງສາວ:.................... ໄວ້ເປັນພັຣຍາຂອງທ່ານ ແລະສັນຍາວ່າ ຈະລ້ຽງດູ ຖນຸຖນອມ ໃຫ້ການປົກປັກຮັກສາ ແກ່ນາງ ຈະເປັນສາມີທີ່ຊື່ສັດສຸດຈະຣິດຈົນຕລອດຊີວິດຂອງທ່ານທັງສອງ. ທ່ານຍິນດີສັນຍາຢ່າງນັ້ນຫຼື?*
ເຈົ້າບ່າວຕອບ: "ຂ້າພະເຈົ້າຂໍສັນຍາຢ່າງນັ້ນ"
ຈາກນັ້ນ ອາຈານຈະກ່າວກັບເຈົ້າສາວວ່າ:
*"ນາງສາວ:................ (ຊື່ເຈົ້າສາວ ທ່ານສັນຍາວ່າເອົາທ່ານ:...................ໄວ້ເປັນ ສາມີຂອງທ່ານ ແລະສັນຍາວ່າຈະຮັກລາວ ໃຫ້ກຽດລາວ ເຊື່ອຟັງລາວ ແລະຈະເປັນ ພັຣຍາທີ່ຊື່ສັດສຸດຈະຣິດຂອງລາວ ຈົນຕລອດຊີວິດຂອງທ່ານທັງສອງ ທ່ານຍິນດີ ສັນຍາຢ່າງນັ້ນຫຼື?*
ເຈົ້າສາວຕອບ: "ຂ້າພະເຈົ້າຍິນດີສັນຍາຢ່າງນັ້ນ"

ຈາກນັ້ນ ອາຈານຈະຖາມຕໍ່ວ່າ:
*"ໃຜເປັນຜູ້ມອບຍິງນີ້ໃຫ້ແຕ່ງງານກັບຊາຍຄົນນີ້?*
ພໍ່ເຈົ້າສາວ ຫຼືຜູ້ປົກຄອງຈະເວົ້າວ່າ:
*"ຂ້າພະເຈົ້າເປັນຜູ້ມອບ"* ແລ້ວຈັບມືເຈົ້າສາວໄປວາງໄວ້ໃນມືຂອງເຈົ້າບ່າວ. ຈາກນັ້ນເຂົ້າໄປນັ່ງໃນບ່ອນທີ່ຈັດຕຽມໄວ້.

ອາຈານ ໃຫ້ເຈົ້າບ່າວຫັນໜ້າໄປທາງເຈົ້າສາວ ແລ້ວຈັບມືຂວາຂອງເຈົ້າສາວໄວ້. ແລ້ວໃຫ້ເວົ້າຕາມອາຈານວ່າ:. "ຂ້າພະເຈົ້າ:................... (ຊື່ເຈົ້າບ່າວ) ຂໍຮັບນາງ:................... ໄວ້ເປັນພັຣຍາຂອງຂ້າພະເຈົ້າ ແລະຕັ້ງແຕ່ນີ້ເປັນຕົ້ນໄປ ຂ້າພະເຈົ້າ ຈະຮັບພິທັກຮັກ ສາຍິງຄົນນີ້ໄວ້ ບໍ່ວ່າຈະພະເຊີນກັບສະພາບການດີຫຼືຮ້າຍ ບໍ່ວ່າສຸກສະບາຍຫຼືເຈັບປ່ວຍ ບໍ່ວ່າຈະຍາກຈົນລົງຫຼືລ້ຳຣວຍ ຂ້າພະເຈົ້າຈະຮັກນາງ ແລະຈະຖນອມນາງ ດ້ວຍຄວາມຮັກຈົນກວ່າຈະສິ້ນຊີວິດຈາກກັນ. ຂ້າພະເຈົ້າຂໍໃຫ້ຄຳປະຕິຍານວ່າຈະ ປະຕິບັດຕາມບົດບັນຍັດ ຂອງອົງພຣະຜູ້ເປັນເຈົ້າ"

ເຈົ້າສາວຫັນໜ້າໄປທາງເຈົ້າບ່າວ ແລ້ວຈັບມືຂວາເຈົ້າບ່າວໄວ້ແລ້ວເວົ້າຕາມອາຈານ "ຂ້າພະເຈົ້າ....................(ຊື່ເຈົ້າສາວ) ຂໍຮັບເອົາທ່ານ:................ໄວ້ເປັນສາມີຂອງຂ້າພະເຈົ້າ ແລະຕັ້ງແຕ່ບັດນີ້ເປັນຕົ້ນໄປ ຂ້າພະເຈົ້າຈະຮັບພິທັກ ຮັກສາຊາຍຄົນນີ້ໄວ້ ບໍ່ວ່າຈະພະເຊີນກັບສະພາບການດີຫຼືຮ້າຍ ບໍ່ວ່າສຸກສະບາຍ ຫຼືເຈັບປ່ວຍ ບໍ່ວ່າຈະຍາກຈົນລົງຫຼືລ້ຳຣວຍ ຂ້າພະເຈົ້າຈະຮັກແລະຈະຖນອມລາວ ດ້ວຍຄວາມຮັກຈະເຊື່ອຟັງຈົນກວ່າຈະສິ້ນຊີວິດຈາກກັນ ຂ້າພະເຈົ້າຂໍປະຕິຍານວ່າຈະປະຕິບັດຕາມບົດບັນຍັດຂອງອົງພຣະຜູ້ເປັນເຈົ້າ"

ອາຈານຈະຖາມເຈົ້າບ່າວ: *"ທ່ານ:........... ທ່ານມີຫຍັງເປັນເຄື່ອງໝາຍສຳຣັບ ຄຳໝັ້ນສັນຍາຂອງທ່ານຄັ້ງນີ້?*
ເຈົ້າບ່າວຕອບ: "ຂ້າພະເຈົ້າມີແຫວນ" ເພື່ອນເຈົ້າບ່າວມອບແຫວນນັ້ນໃຫ້ອາຈານ.
ອາຈານ ຊູແຫວນຂຶ້ນແລ້ວກ່າວວ່າ "ແຫວນນີ້ ທຳດ້ວຍທອງຄຳບໍຣິສຸດ ເປັນຂອງ ມີຄ່າ ດັ່ງນັ້ນ ຈຶ່ງໃຫ້ຄວາມຮັກຂອງທ່ານທັງສອງມີຄວາມບໍຣິສຸດ ທັງຢັ້ງຢືນ ເໝືອນແຫວນວົງນີ້" ອາຈານມອບແຫວນນັ້ນໃຫ້ເຈົ້າບ່າວ ສວມທີ່ນິ້ວນາງມືຊ້າຍຂອງເຈົ້າສາວ.

ຫຼັງຈາກນັ້ນ ອາຈານຫັນມາຖາມເຈົ້າສາວວ່າ *"ນາງ:........ທ່ານມີຫຍັງເປັນເຄື່ອງໝາຍ ໃນຄຳໝັ້ນສັນຍາຂອງທ່ານ?*
ເຈົ້າສາວຕອບວ່າ: "ຂ້າພະເຈົ້າມີແຫວນ" ເພື່ອນເຈົ້າສາວມອບແຫວນໃຫ້ອາຈານ.
ອາຈານຈະກ່າວວ່າ "ຈົ່ງສວມແຫວນນີ້ ທີ່ດິ້ວນາງເບື້ອງຊ້າຍຂອງເຈົ້າບ່າວ" ຫຼັງຈາກນັ້ນອາຈານຈະກ່າວຕໍ່ "ແຫວນນີ້ເປັນແຫວນວົງກົມ ທາຮອຍຕໍ່ປະສານກັນ ບໍ່ມີ ເປັນສັນຍາລັກຂອງການບໍ່ມີວັນສິ້ນສຸດ ດັ່ງນັ້ນ ຂໍໃຫ້ຄວາມຮັກຂອງທ່ານທັງສອງຢັ້ງຢືນສືບໄປ...... ແຫວນນີ້ ເປັນສັນຍາລັກຂອງຄວາມບໍຣິສຸດ ຈຶ່ງໃຫ້ ຄຳໝັ້ນສັນຍາຂອງພວກທ່ານຢັ້ງຢືນຖາວອນ ສົມກັບເຄື່ອງໝາຍທີ່ພວກທ່ານໄດ້ ມອບໃຫ້ແກ່ກັນແລະກັນໃນວັນນີ້ເຖີດ........

ອາຈານ ນຳພາອະທິຖານ: ຂໍໃຫ້ເຮົາຮ່ວມໃຈອະທິຖານ.... *ຂ້າແດ່ພຣະເຈົ້າ ວັນນີ້ ທັງສອງຄົນນີ້ໄດ້ຮ່ວມກັນປະຕິຍານຈະຢູ່ຮ່ວມກັນຈະຮັກ ກັນເທົ້າສົ້ງງຊີວິດ ຂໍພຣະອົງຊົງເປັນພະຍານ ໃນຄຳສັດສາບານຂອງພວກເຂົານີ້ດ້ວຍ. ອະທິຖານໃນພຣະນາມ ພຣະມະຫາເຢຊູຄຣິສເຈົ້າ.... ອາແມນ.*

ອາຈານ ຈັບມືຂວາຂອງເຈົ້າບ່າວແລະເຈົ້າສາວປະສານກັນ ແລ້ວວາງມືຕົນເອງ ລົງເທິງມືຂອງພວກເຂົາແລະກ່າວວ່າ "ຕາມທີ່ທ່ານທັງສອງໄດ້ຮ່ວມໃຈກັນທຳສັດສາບານ ປະຕິຍານຕໍ່ກັນ ໃນພິທີການສົມຣົດອັນບໍຣິສຸດນີ້ ຕໍ່ໜ້າພຣະພັກຂອງພຣະເຈົ້າ ແລະຕໍ່ໜ້າພະຍານຂອງບັນດາຍາດພີ່ນ້ອງ ມິດສະຫາຍຂອງທ່ານທັງສອງ ພ້ອມທັງມີ ເຄື່ອງໝາຍຄືແຫວນເປັນສັນຍາລັກແຫ່ງຄຳໝັ້ນສັນຍາຕໍ່ກັນ ຂ້າພະເຈົ້າໃນຖານະເປັນຜູ້ຮັບໃຊ້ພຣະເຈົ້າຂໍປະກາດວ່າ ທ່ານທັງສອງເປັນສາມີພັຣຍາກັນຢ່າງຖືກຕ້ອງຕາມກົດບັນຍັດຂອງພຣະເຈົ້າແລ້ວ. ເມື່ອພຣະເຈົ້າຊົງຜູ້ ພັນທ່ານ ທັງສອງໃຫ້ເປັນອັນນຶ່ງອັນດຽວກັນແລ້ວກໍຢ່າໃຫ້ມະນຸດຄົນໃດກ້າສາມາດ ແຍກທ່ານ ອອກຈາກກັນເລີຍ. ຂໍພຣະເຈົ້າຊົງອວຍພຣະພອນ ໃນຊີວິດຊີວິດ ວິວາຂອງພວກທ່ານ"

ຂໍຮ່ວມໃຈກັນອະທິຖານ: "ຂ້າແດ່ພຣະເຈົ້າ ອັນນີ້ ຂ້າພະອົງຂໍມອບຄູ່ສົມຣົດໃໝ່ນີ້ ໄວ້ໃນການຊົງນຳຂອງພຣະອົງ ໃນພຣະນາມແຫ່ງພຣະບິດາ ພຣະບຸດ ແລະພຣະວິນ ຍານບໍຣິສຸດ.... ອາແມນ"

ຈາກນັ້ນ ອາຈານ ປະກາດວ່າ "*ພີ່ນ້ອງ ຂ້າພະເຈົ້າຂໍແນະນຳໃຫ້ທ່ານຮູ້ຈັກກັບ ທ່ານ:...................... ແລະນາງ:.................. (ນາມສະກຸນເພື່ອ)*

ຂໍພຣະເຈົ້າອວຍພຣະພອນແດ່ພທ່ານທຸກຄົນທີ່ມາຮ່ວມໃນວັນນີ້.... ສະບາຍດີ

# ພິທີການແຕ່ງງານແບບທີສາມ

ອາຈານກ່າວ: *"ອົງພຣະຜູ້ເປັນເຈົ້າຊົງກ່າວວ່າ ຊຶ່ງມະນຸດຈະຢູ່ໂດດດ່ຽວກໍບໍ່ເໝາະ ສົມ ເຮົາຈະສ້າງຂຶ້ນອີກຄົນນຶ່ງ ໃຫ້ເປັນຄູ່ຄຽງທີ່ເໝາະກັບລາວ ເຫດສັນນັ້ນ ຜູ້ຊາຍ ຈຶ່ງອອກຈາກບິດາມານດາຂອງຕົນ ໄປຜູກພັນຢູ່ກັບພັຣຍາ ແລະເຂົາທັງສອງຈະເປັນ ເນື້ອກາຍອັນດຽວກັນ".*

*"ຄົນໃດທີ່ໄດ້ພັຣຍາດີ ເຂົາກໍຈະໄດ້ຮັບການໂປດປານຈາກພຣະເຈົ້າ"*

*"ຄົນໃດໄດ້ພົບສັດຕຣີທີ່ເປັນແມ່ເຮືອນທີ່ດີ ກໍຈະມີຄວາມສຸກ ເພາະວ່າຄ່າຂອງນາງ ນັ້ນຫຼາຍກວ່າທັບທິມ ສັດຕຣີນັ້ນຈະເປັນທີ່ໄວ້ວາງໃຈຂອງສາມີ ແລະສາມີຂອງນາງ ຈະບໍ່ຂາດກຳໄຣເລີຍ ຕລອດອາຍຸຂອງນາງ ນາງຈະທຳໃຫ້ເກີດຄຸນງາມຄວາມດີແກ່ ສາມີ ແລະບໍ່ກໍ່ໃຫ້ເກີດ ຄວາມເສັຽຫາຍເລີຍ"*

*"ການສົມຣົດ ເປັນວາຣະທີ່ນຳຄວາມຊົມຊື່ນຍິນດີມາໃຫ້ສເມີ ແລະເຮົາຈະຍິນດີ ຫຼາຍຂຶ້ນໃນເວລາທີ່ພຣະເຢຊູສະເດັດມາປະທັບແລະອວຍພຣະພອນ ຂໍພຣະເຈົ້າໄດ້ຊົງປະທານກຽດຕິຍົດແລະສງ່າຣາສີແກ່ພິທີນີ້ ເພາະວ່າພຣະເຈົ້າຊົງມຸ້ງໝາຍທີ່ຈະປະທານ ພຣະພອນ ແລະຄວາມສຸກແກ່ທ່ານ ດັ່ງນັ້ນ ວັນນີ້ ຂໍໃຫ້ເຮົາອັນເຊີນ ພຣະອົງມາປະທັບ ແລະເປັນປະທານໃນທີ່ນີ້ ເພື່ອຊົງເປັນພະຍານ ແລະຊົງອວຍ ພຣະພອນໃຫ້ຄຳໝັ້ນ ສັນຍາຂອງທ່ານທັງສອງ ຕໍ່ໜ້າທີ່ປະຊຸມນີ້ມີປະສິດທິພາບ ແລະສົມບູນ"*

ຂໍໃຫ້ເຮົາຮ່ວມໃຈກັນອະທິຖານ:

*"ຂ້າແດ່ພຣະເຈົ້າ ວັນນີ້ ໃນພິທີອັນສັກສິດນີ້ ຂໍພຣະອົງຊົງລົງມາເປັນປະທານ ແລະເປັນພິຍານດ້ວຍເຖີດ.*

*ອະທິຖານໃນພຣະນາມແຫ່ງພຣະເຢຊູຄຣິສເຈົ້າ. ອາແມນ*

ອາຈານຈະກ່າວຕໍ່ໄປວ່າ *"ໃຜເປັນຜູ້ມອບນາງສາວ:............(ຊື່ເຈົ້າສາວ) ໃຫ້ແກ່ທ່ານ:...........(ຊື່ເຈົ້າບ່າວ)*

ພໍ່ຂອງເຈົ້າສາວ ຫຼືຜູ້ປົກຄອງຈະກ່າວຕອບວ່າ "ຂ້າພະເຈົ້າແລະພັຣຍາເປັນຜູ້ມອບ" ແລ້ວລົງໄປນັ່ງໃນສະຖານທີ່ກຳນົດໄວ້.

ຜູ້ປະກອບພິທີຈະກ່າວວ່າ: "*ທ່ານ:.......... (ຊື່ເຈົ້າບ່າວ) ທ່ານຈະຮັບ ເອົານາງ: ........... (ຊື່ເຈົ້າສາວ) ໄວ້ເປັນພັຣຍາຂອງທ່ານຫຼື? ..... ... ທ່ານສັນຍາຫຼື ວ່າທ່ານຈະຮັກແລະ ໃຫ້ກຽດແກ່ຍິງຄົນນີ້ ແລະຈະປົກປັກຮັກສານາງໄວ້ ໃຫ້ປອດພັຍ ຈະຖະນຸຖະນອມນາງໄວ້ດ້ວຍຄວາມຮັກ ຈະເລົ້າໂລມຈິດ ໃຈ ຈະຮັບນາງໄວ້ ບໍ່ວ່າຈະຮ່ຳຮວຍຫຼືຍາກຈົນ ບໍ່ວ່າຈະສຸກສະບາຍຫຼືເຈັບປ່ວຍ ທ່ານຈະຮັບພິທັກຮັກສານາງໄວ້ແຕ່ ວັນນີ້ເປັນຕົ້ນໄປ ແລະຈະຮັກຍິງຄົນນີ້ແຕ່ຜູ້ດຽວຈົນສິ້ນຊີວິດ. ທ່ານສັນຍາໄດ້ ຫຼື?*"

ເຈົ້າບ່າວຕອບ: "ຂ້າພະເຈົ້າຂໍໃຫ້ສັນຍາຢ່າງນັ້ນ"

ແລ້ວອາຈານຈະກ່າວກັບເຈົ້າສາວວ່າ: "*ນາງສາວ:.............. (ຊື່ເຈົ້າສາວ) ທ່ານຍິນດີຈະຮັບເອົາທ່ານ:................. (ຊື່ເຈົ້າບ່າວ) ເປັນສາມີຂອງ ທ່ານຫຼື?........ ທ່ານສັນຍາວ່າຈະຮັກລາວ ໃຫ້ກຽດລາວ ແລະຈະເຊື່ອຟັງລາວ ຈະຖະນຸຖະນອມລາວດ້ວຍ ຄວາມຮັກ ຈະເລົ້າໂລມຈິດ ໃຈລາວດ້ວຍຄວາມຮັກ ບໍ່ວ່າຈະ ຮ່ຳຮວຍຫຼືຍາກຈົນ ບໍ່ວ່າຈະສຸກສະບາຍຫຼືເຈັບປ່ວຍ ທ່ານສັນຍາວ່າຈະຜູກສມັກ ຮັກໃຄ່ ຢູ່ກັບລາວໄປຈົນສິ້ນຊີວິດ. ທ່ານສັນຍາໄດ້ຢ່າງນັ້ນຫຼື?*"

ເຈົ້າສາວຕອບ: "ຂ້າພະເຈົ້າຂໍສັນຍາຢ່າງນັ້ນ"

ອາຈານຈະຖາມວ່າ: *ທ່ານມີຫຍັງເປັນເຄື່ອງໝາຍແຫ່ງຄຳສັນຍານີ້?*"

ເຈົ້າບ່າວຈະຕອບວ່າ: "ຂ້າພະເຈົ້າມີແຫວນ" ເພື່ອນເຈົ້າບ່າວຈະມອບແຫວນໃຫ້ ເຈົ້າບ່າວ ຈາກນັ້ນ ເຈົ້າບ່າວຈະມອບແຫວນນັ້ນໃຫ້ອາຈານ. ອາຈານຈະກ່າວວ່າ

"*ນາງສາວ:................. ທ່ານຍິນດີ ແລະເຕັມ ໃຈຮັບແຫວນວົງນີ້ວ່າ ເປັນສັນ ຍາລັກແຫ່ງຄວາມຮັກດ້ວຍຄວາມຈິງ ໃຈຫຼື?*"

ເຈົ້າສາວຕອບ: "ຂ້າພະເຈົ້າຍິນດີຮັບ"

ອາຈານກ່າວວ່າ: "*ແຫວນວົງນີ້ເປັນວົງກົມ ທຳດ້ວຍທຳຄຳທີ່ບໍຣິສຸດ ວົງກົມ ເປັນສັນຍາລັກແຫ່ງຄວາມຄົບບໍຣິບູນ ຄວາມສະອາດບໍຣິສຸດ ຄວາມຖາວອນ ແລະຄວາມໄວ້ໃຈຊຶ່ງກັນແລະກັນ ສະນັ້ນ ຈົ່ງ ໃຫ້ຄວາມຮັກຂອງທ່ານທັງສອງ ເໝືອນກັບທອງຄຳທີ່ທົນຕໍ່ໄຟ ຕຣາບຈົນເທົ່າຄວາມຕາຍແຍກທ່ານອອກຈາກກັນ*"

ຜູ້ປະກອບພິທີມອບແຫວນໃຫ້ເຈົ້າບ່າວແລະສັ່ງວ່າ: "ຈົ່ງສວມແຫວນນີ້ ທີ່ນິ້ວຊ້າຍຂອງນາງແລະເອົ້າຕາມຂ້າພະເຈົ້າວ່າ "ຂ້າພະເຈົ້າ: ............... (ຊື່ເຈົ້າບ່າວ) ຂໍມອບແຫວນນີ້ໃຫ້ແກ່ນາງ: .............. ເພື່ອເປັນສັກຂີພິຍານວ່າ ຂ້າພະເຈົ້າ ຈະຮັກແລະຖນອມນາງໄວ້ສເມີດ້ວຍຊີວິດຈິດໃຈ"

ຖ້າເຈົ້າສາວມີແຫວນໃຫ້ເຈົ້າບ່າວ ອາຈານ ກໍຈະຖາມຄຳຖາມແບບດຽວກັນກັບຖາມ ເຈົ້າບ່າວ :

"*ທ່ານມີຫຍັງເປັນເຄື່ອງໝາຍແຫ່ງຄວາມຮັກ ໃນການແຕ່ງງານອັນນີ້?*"

ເຈົ້າສາວຕອບ: "ຂ້າພະເຈົ້າມີແຫວນ" ເພື່ອນເຈົ້າສາວມອບແຫວນໃຫ້ເຈົ້າສາວ ແລະເຈົ້າສາວມອບແຫວນນັ້ນໃຫ້ອາຈານ ແລ້ວອາຈານຍື່ນແຫວນນັ້ນຄືນໃຫ້ແກ່ ເຈົ້າສາວແລ້ວກ່າວວ່າ: "*ຈົ່ງສວມແຫວນນີ້ທີ່ນິ້ວຊ້າຍຂອງລາວ*

*ແລະ ໃຫ້ເອີ້ຕາມ ຂ້າພະເຈົ້າວ່າ "ຂ້າພະເຈົ້າ: .................. (ຊື່ເຈົ້າສາວ)ຂໍມອບແຫວນນີ້ໃຫ້ແກ່ ທ່ານ:.................. (ຊື່ເຈົ້າບ່າວ) ເພື່ອເປັນເຄື່ອງໝາຍແຫ່ງຄວາມຜູກພັນ ຂອງເຮົາທັງສອງຕລອດການ"*

ຈາກນັ້ນ ອາຈານຈະຈັບມືຂວາຂອງເຈົ້າບ່າວ ແລະເຈົ້າສາວປະສານກັນແລະກ່າວດັ່ງນີ້
*"ຕາມທີ່ທ່ານທັງສອງຕ່າງກໍຮ່ວມໃຈກັນ ໃຫ້ຄຳໝັ້ນສັນຍາ ປະຕິຍານຕໍ່ໜ້າພຣະພັກ ພຣະເຈົ້າ ແລະຕໍ່ໜ້າທີ່ປະຊຸມນີ້ ໃນຖານະທີ່ຂ້າພະເຈົ້າເປັນຜູ້ຮັບ ໃຊ້ພຣະເຈົ້າ ຂໍປະກາດວ່າ ທ່ານທັງສອງ ເປັນສາມີພັຣຍາກັນຢ່າງຖືກຕ້ອງ ໃນພຣະນາມແຫ່ງ ພຣະບິດາ ພຣະບຸດ ແລະພຣະວິນຍານບໍຣິສຸດ. ຜູ້ໃດທີ່ພຣະຜູ້ເປັນເຈົ້າຊົງ ໃຫ້ສຳພັນກັນແລ້ວ ກໍຢ່າໃຫ້ມະນຸດຄົນ ໃດແຍກທ່ານອອກຈາກກັນເສັຍ"*
"ຂໍໃຫ້ເຮົາຮ່ວມໃຈກັນອະທິຖານ"

ທັງເຈົ້າບ່າວ ແລະເຈົ້າສາວຂຸເຂົ່າລົງເພື່ອຮັບພຣະພອນ:
"ຂໍພຣະເຈົ້າອົງສູງສຸດ ຊົງໄດ້ອວຍພຣະພອນແກ່ທ່ານ:.................. ແລະນາງ:............ຂໍຊົງປົກປັກຮັກສາ ແລະອວຍພຣະພອນແກ່ຊີວິດຄູ່ຂອງ ເຂົາຕລອດໄປເຖີດ. ອະທິຖານໃນພຣະນາມແຫ່ງ ເຢຊູຄຣິສເຈົ້າ..... ອາແມນ ເມື່ອເສັດພິທີ ເດີນອອກໄປຢູ່ທີ່ສົນຄວນເພື່ອຮັບການສະແດງຄວາມຍິນດີຂໍແຂກ ທີ່ມາຮ່ວມໃນງານ.

## ຈົບພິທີການແຕ່ງງານ

# ພິທີສົ່ງສະການ

ເວລາທີ່ຄວາມຕາຍໄດ້ເຂົ້າມາຖຸກຄາມຄອບຄົວຄຣິສຕຽນ ນີ້ເປັນໂອກາດດີທີ່ສຸດ ສຳຣັບອາຈານ ທີ່ຈະມີໂອກາດໄດ້ ຊ່ວຍເຫຼືອສະມາຊິກຂອງຕົນເອງ ໃນຍາມຍາກ ລຳບາກນີ້. ໃນເວລາທີ່ໄດ້ຮັບຄວາມໂສກເສົ້າເຊັ່ນນີ້ ບໍ່ມີເວລາໃດ ທີ່ສະມາຊິກໃນ ຄຣິສຕະຈັກ ຈະຕ້ອງການເພິ່ງພາອາສັຍອາຈານ ເທົ່າກັບເວລານີ້. ແລະຈະບໍ່ມີຄັ້ງ ໃດທີ່ຈິດໃຈຂອງ ສະມາຊິກ ຈະເປີດກວ້າງ ຕ້ອນຮັບເອົາການຊ່ວຍເຫຼືອຈາກອາຈານ ເທົ່າກັບເວລານີ້. ຄວາມຮັກ ແລະການເລົ້າໂລມຈິດ ໃຈໃນຍາມທຸກ ທີ່ອາຈານ ສະແດງອອກຕໍ່ສະມາຊິກນີ້ ມັນຈະຝັງແໜ້ນຢູ່ໃນຈິດໃຈຂອງສະມາຊິກຕລອດໄປ.
ສ່ວນມາກແລ້ວ ອາຈານຈະຮູ້ຈັກອາການເຈັບປ່ວຍຂອງສະມາຊິກ ກໍຕໍ່ເມື່ອອາການ ເຈັບນັ້ນ ໜັກໜ່ວງຫຼືໃກ້ຈະຕາຍ. ເມື່ອໃດມີການຕາຍເກີດຂຶ້ນ ອາຈານ ຄວນຈະຮີບຮ້ອນໄປຢ້ຽມຢາມຄອບຄົວນັ້ນທັນທີເພື່ອຈະນຳພຣະຄຳ ແລະພຣະ ພອນຂອງພຣະເຈົ້າ ໄປໃຫ້ການເລົ້າໂລມໃຈແກ່ຄອບຄົວນັ້ນ.
ອາຈານ ຄວນໃຫ້ການຊ່ວຍເຫຼືອໃນເລື້ອງການຝັງສົພຮ່ວມກັບເຈົ້າພາບຕາມຄວາມ ເໝາະສົມ ຕລອດຈົນໃຫ້ຄຳ ແນະນຳກ່ຽວກັບພິທີສົພນັ້ນ ແລະຄວນແຈ້ງການໃຫ້ ສະມາຊິກໃນຄຣິສຕະຈັກຮູ້ນຳ ເພື່ອຈະຊ່ວຍກັນປອບຈິດໃຈ ແລະໃຫ້ການຊ່ວຍ ເຫຼືອໃນດ້ານອື່ນໆຕາມສົມຄວນ.

ການແຕ່ງກາຍຂອງອາຈານ ຄວນໃຫ້ເໝາະສົມກັບງານສົພນັ້ນ ທັ້ງກິຣິຍາ ວາຈາ ທີ່ຈະກ່າວເຖິງຜູ້ຕາຍນັ້ນ ແລະການກ່ຽວຂ້ອງກັບຄຣິສຕະຈັກ ແລະສັງຄົມ. ຫາກ ສະຖານະການສົມຄວນໃຫ້ອາຈານນັ້ນເວົ້າ ກໍບໍ່ຄວນທີ່ຈະເວົ້າເສີມ ຫຼືເຕີມແຕ່ງ ປະຫວັດຂອງຜູ້ຕາຍນັ້ນ ຄຳເທສນາໃນງານສົພ ຄວນໃຫ້ສັ້ນ ແລະເຂົ້າໃຈງ່າຍປະກອບດ້ວຍຂໍ້ຄວາມທີ່ຊ່ວຍບັນເທົາທຸກ ແລະມີຂໍ້ຄວາມທີ່ຊ່ວຍໃຫ້ຄົນບາບ ລອດພົ້ນຈາກບາບ ແລະກ່າວເຖິງຄວາມຫວັງອັນສົດໃສຂອງທຸກຄົນທີ່ມີຄວາມເຊື່ອ ໃນພຣະຄຣິສ. ຢ່າສະແດງທັນ ຫຼືອອກຂໍ້ຄິດເຫັນກ່ຽວກັບເລື້ອງໃດໃຫ້ຍືດຍາວ ເກີນຄວນ ອັນຈະເປັນພົນເສັຽຕໍ່ການນຳວິນຍານຂອງຜູ້ຟັງໃຫ້ຮູ້ຈັກພຣະຄຣິສ.

ພິທີທີ່ຫຼຸມຝັງສົພ ຄວນທຳໃຫ້ສັ້ນໆ ຫຼັງຈາກຂໍພຣະພອນເປີດພິທີການແລ້ວ ອາຈານ ຄວນສະແດງຄວາມຄາຣະວະແກ່ຄອບຄົວຂອງຜູ້ຕາຍທີ່ກຳລັງໂສກເສົ້າ ແລະຄວນກ່າວແຕ່ຖ້ອຍຄຳທີ່ໜູນໃຈແລະເລົ້າໂລມໃຈຄົນທີ່ກຳລັງໂສກເສົ້າເຫຼົ່ານັ້ນ ແລະຈົ່ງໃຫ້ຄຳໝັ້ນສັນຍາວ່າ ຈະໄປຢ້ຽມຢາມຄອບຄົວຂອງເຈົ້າທຸກນັ້ນ ແລະໃຫ້ທຳ ຕາມສັນຍານັ້ນດ້ວຍ. ຖ້າຄຣິສຕະຈັກ ມີໜັງ ສືພິມປະຈຳອາທິດ ກໍຄວນລົງຂ່າວ ສະແດງຄວາມເສັຽໃຈ. ແລະມີຫຼາຍຄັ້ງ ທີ່ທາງຄຣິສຕະຈັກຈັດໃຫ້ມີການຮ້ອງເພັງ ຣະນຶກເຖິງຜູ້ຕາຍ ໂດຍທີ່ຈັດໃຫ້ມີການຮ້ອງເພັງທີ່ຜູ້ກ່ຽວມັກ ໃນເວລາມີຊີວິດຢູ່. ການຮ້ອງເພັງນີ້ ຄວນຈັດໃຫ້ມີ ໃນອາທິດທຳອິດ ຫຼັງຈາກການສົ່ງສະການແລ້ວ. ທັ້ງນີ້ ເພື່ອເປັນການ ຕອກຕຶງຄວາມເຫັນອົກເຫັນໃຈຂອງຄຣິສຕຽນດ້ວຍກັນໃຫ້ ແໜ້ນແຟ້ນຍິ່ງຂຶ້ນ.

## ຣະບຽບໃນຣະຫວ່າງການສົ່ງສະການ

ພິທີສົ່ງສະການ ຄວນໃຫ້ມີການເລົ້າໂລມໃຈຕລອດເວລາ ແລະປຸກຣະດົມຈິດໃຈ ໃຫ້ເກີດມີຄວາມຫວັງ.

## ແບບວິທີໃນການທຳພິທີ

1. ຮ້ອງເພັງນຳ ກ່ອນທຳພິທີການ
2. ອ່ານຂໍ້ພຣະຄຳພີ
3. ອະທິຖານເປີດກອງປະຊຸມ
4. ເພັງພິເສດ (ຖ້າມີ)
5. ອ່ານປະຫວັດຂອງຜູ້ຕາຍ (ຖ້າມີ)
6. ອ່ານຂໍ້ພຣະຄຳພີ ທີ່ຈະນຳມາເທສນາ
7. ອະທິຖານ
8. ເພັງພິເສດ (ຖ້າມີ)
9. ເທສນາທັມ
10. ຂໍພຣະພອນປິດພິທີການ
11. ເພັງປິດພິທີການ

## ຄຳແນະນຳສຳຣັບພິທີສົ່ງສະການ
## ຂໍ້ພຣະຄຳພີສຳຣັບເປີດພິທີການ

ຈົ່ງເລືອກເອົາຂໍພຣະຄຳພີດ້ວຍຄວາມຣະມັດຣະວັງໃຫ້ເໝາະສົມກັບສະພາວະຈິດໃຈ ຂອງຜູ້ທີ່ກຳລັງໄດ້ຮັບຄວາມທຸກໂສກ. ອາຈານ ອາດຈະໃຊ້ພຣະຄຳພີເປັນເປົ້າ ໝາຍຂອງການພິທີນັ້ນໂດຍຕລອດກໍໄດ້ ເຊັ່ນການ ສອນເຖິງເລື້ອງຄວາມເຊື່ອຄວາມຫວັງ ເລື້ອງແຜ່ນດິນສວັນ ແລະອື່ນໆ. ຂໍ້ພຣະຄຳພີຕໍ່ລົງໄປນີ້ເປັນພຽງ ຕົວຢ່າງໃຫ້ທ່ານ. ທ່ານສາມາດເລືອກເອົາຂໍ້ອື່ນໆທີ່ເຫັນວ່າເໝາະສົມໄດ້.

*"ພຣະເຈົ້າຊົງກ່າວວ່າ ເຮົາຈະໄປກັບເຈົ້າ ແລະ ໃຫ້ເຈົ້າມີໄຊຊະນະແລະຄວາມ ສງົບສຸກ" ພະທຳອົພຍົບ 33:14*

*"ຂໍໃຫ້ຂ້າພະອົງຕາຍເໝືອນຄົນທີ່ສັດຊື່ນັ້ນ ຂໍໃຫ້ບັ້ນສຸດທ້າຍແຫ່ງຊີວິດຂອງ ຂ້າພະອົງເປັນເໝືອນຄົນເຫຼົ່ານັ້ນ" ອາໂມດ 23:10*

*"ເຫດສັນນັ້ນ ເຈົ້າທັງຫຼາຍຈົ່ງຮູ້ເຖີດວ່າ ພຣະຢາໂຮວາ ພຣະເຈົ້າຂອງຂ້າພະອົງຊົງເປັນພຣະເຈົ້າ ເປັນຜູ້ຊົງ ສັດຊື່ ເປັນຜູ້ຊົງຮັກສາຄຳໝັ້ນສັນຍາໄມຕຣີ ແລະພຣະກະຣຸນາຄຸນແກ່ຄົນທັງຫຼາຍທີ່ຮັກພຣະອົງ ແລະຜູ້ທີ່ຮັກສາພຣະບັນຍັດຂອງພຣະອົງ ຈົນເຖິງພັນຊົ່ວອາຍຸຄົນ." ພຣະບັນຍັດ 7:9*

*"ພຣະເຈົ້າຊົງພຣະຊົນຢູ່ເປັນນິດ ເປັນທີ່ອາສັຍ (ລີ້ພັຍ)ຂອງເຈົ້າ ແລະພຣະຫັດອັນ ຖາວອນເປັນນິດຂອງພຣະອົງກໍຮັບຮອງເຈົ້າຢູ່" ພຣະບັນຍັດ 33: 27*

*"ພຣະຢາໂຮວາໄດ້ຊົງປະທານໃຫ້ ແລະພຣະຢາໂຮວາໄດ້ຊົງເອົ້ນຮຽກໃຫ້ກັບຄືນ ໄປອີກຈົ່ງສັຣເສີນພຣະນາມພຣະຢາໂຮວາ" ໂຢບ 1:21*

*"ແມ້ນວ່າພຣະອົງຊົງສັງຫານຂ້າພະອົງເສັຽ ຂ້າພະອົງກໍຍັງໄວ້ໃຈໃນພຣະອົງ" ໂຢບ 13:15*

*"ພຣະເຈົ້າຊົງເປັນທີ່ພັກພາອາສັຍ ແລະເປັນກຳລັງຂອງຂ້າພະອົງ ພຣະອົງຊົງເປັນ ຜູ້ຊ່ວຍອັນເລີດ ຊົງສະຖິດຢູ່ໃກ້ໃນເວລາຍາກລຳບາກ" ເພັງສັຣເສີນ 46: 1*

*"ພຣະນາມພຣະເຈົ້າເປັນປ້ອມເຂັ້ມແຂງ ຄົນຊອບທັມທັງປວງທີ່ແລ່ນເຂົ້າໄປອາສັຍ ກໍພົ້ນພັຍ" ສຸພາສິດ 18: 10*

*"ຂ້າແດ່ອົງພຣະຜູ້ເປັນເຈົ້າ ພຣະອົງຊົງເປັນທີ່ອາສັຍຂອງພວກຂ້າພະອົງທຸກຊົ່ວອາຍຸ ຕໍ່ໆກັນມາ ກ່ອນພູເຂົາທັງຫຼາຍໄດ້ບັງເກີດຂຶ້ນ ແລະກ່ອນພຣະອົງໄດ້ຊົງສ້າງແຜ່ນ ດິນ ແລະຈັກກະວານ ພຣະອົງຊົງເປັນພຣະເຈົ້າຢູ່ຕັ້ງແຕ່ອະດີດຕະການ ແລະຕລອດ ອານາຄົດ" ເພັງສັຣເສີນ 90: 1-2*

*"ຜູ້ໃດອາສັຍຢູ່ທີ່ອັນລັບແຫ່ງຜູ້ຍິ່ງໃຫຍ່ສູງສຸດ ຜູ້ນັ້ນຈະໄດ້ອາສັຍຢູ່ໃນຮົ່ມຂອງ ພຣະອົງຜູ້ຊົງຣິດຍິ່ງໃຫຍ່ ຂ້າພະເຈົ້າຈະກ່າວເຖິງພຣະເຈົ້າວ່າ ພຣະອົງຊົງເປັນທີ່ ເພິ່ງພາອາສັຍ ແລະເປັນປ້ອມກຳລັງຂອງຂ້າພະອົງ ພຣະອົງເປັນເຈົ້າຂອງຂ້າພະເຈົ້າ ຂ້າພະເຈົ້າ ຈະວາງໃຈໃນພຣະອົງ" ເພງສັຣເສີນ 21: 1-2*

*"ນີ້ແຫຼະ ພຣະເຈົ້າຊົງເປັນຄວາມລອດຂອງຂ້າພະເຈົ້າ ຂ້າພະເຈົ້າຈະໄວ້ວາງໃຈ ແລະຈະບໍ່ມີຄວາມຢ້ານກົວເສັຍ ເພາະພຣະຢາໂຮວາພຣະເຈົ້າຊົງເປັນກຳລັງ ແລະເປັນບົດເພງ ຂອງຂ້າພະເຈົ້າ ແລະພຣະອົງຊົງເປັນຄວາມລອດ ຂອງຂ້າພະເຈົ້າ" ເອຊາຢາ 12:2.*

*"ຂ້າແດ່ພຣະຜູ້ເປັນເຈົ້າ ອົງເປັນພຣະຜູ້ເປັນເຈົ້າເອີຍ! ສັນຕິສຸກອັນຄົບຖ້ວນອີຫຼີ ພຣະ ອົງມີມອບໃຫ້ແກ່ທຸກຄົນໄດ້ ຄືຜູ້ທີ່ຍຶດໝັ້ນໃນເປົ້າໝາຍຂອງຕົນແທ້ໆ ແລະໃຫ້ແກ່ທຸກຄົນທີ່ໄວ້ວາງໃຈໃນພຣະອົງ ໃນພຣະຜູ້ເປັນເຈົ້ານັ້ນ ເຈົ້າຈົ່ງໄວ້ ວາງໃຈໃນພຣະອົງຕລອດໄປ ພຣະອົງຈະໃຫ້ຄວາມຄຸ້ມຄອງພວກເຮົາເລື້ອຍໄປ" ເອຊາຢາ 26:3-4*

*"ພຣະຜູ້ເປັນເຈົ້າຈະສະເດັດມາປົກຄອງໄພ່ພົນດ້ວຍຣິດທານຸພາບ ພ້ອມທັງນຳປະຊາ ຊົນທີ່ພຣະອົງຊົງຊ່ວຍຊີວິດ ໃຫ້ລອດພົ້ນນັ້ນມາພ້ອມ. ພຣະອົງຈະຊົງລ້ຽງຝູງສັດ ຂອງພຣະອົງເໝືອນຄົນລ້ຽງແກະ ຈະຊົງຮວບຮອມເອົາລູກແກະ ແລະອູ້ມພັນໄວ້ ຈະຊົງນຳແມ່ພັນໄປຄ່ອຍໆຢ່າງຖະນຸຖະໜອມ" ເອຊາຢາ 40: 10-11*

*"ຢ່າສູ່ຢ້ານ ເພາະເຮົາຈະເປັນຜູ້ນຳພວກເຈົ້າ ເຮົາເປັນພຣະເຈົ້າຂອງພວກເຈົ້າ ເຮົາຈະບໍ່ໃຫ້ພວກເຈົ້າຢ້ານຫຍັງ ຈະຊ່ວຍ ເຫຼືອແລະໜູນກຳລັງພວກເຈົ້າ ຈະຄຸ້ມ ຄອງແລະຊ່ວຍໃຫ້ພົ້ນພັຍ" ເອຊາຢາ 40: 10*

*"ເມື່ອເຈົ້າຜ່ານໄຟຫຼືລອຍນ້ຳເລິກ ເຮົາກໍຈະຢູ່ນຳເຈົ້າ ເຈົ້າຈຶ່ງຈະຜ່ານພົ້ນຄວາມລຳບາກໄປໄດ້ ເມື່ອເຈົ້າຍ່າງຜ່ານໄຟໄປ ໄຟນັ້ນຈະບໍ່ໄໝ້ເຈົ້າ ເຈົ້າຈະຜ່ານຄວາມຍຸ້ງ ຍາກເຫຼົ່ານີ້ ໄປໄດ້ ເພາະວ່າເຮົາເປັນພຣະຜູ້ເປັນເຈົ້າຂອງເຈົ້າ ຄືພຣະເຈົ້າ ອົງບໍຣິສຸດ ຂອງອິສຣາເອນ ຈະຊົງຊ່ວຍເຈົ້າໃຫ້ລອດພົ້ນ.." ເອຊາຢາ 43:2-3*

*"ເຮົານີ້ແຫຼະເປັນເຫດໃຫ້ຄົນທັງປວງເປັນຄືນມາ ທັງເປັນຊີວິດ ຜູ້ທີ່ວາງໃຈເຊື່ອ ໃນເຮົາ ເຖິງແມ່ນຕາຍໄປແລ້ວ ກໍຍັງຈະມີຊີວິດຢູ່. ແລະທຸກຄົນທີ່ຍັງມີຊີວິດຢູ່ ແລະວາງ ໃຈເຊື່ອໃນເຮົາ ກໍຈະບໍ່ຕາຍຈັກເທື່ອ" ໂຢຮັນ 11: 25-26*

*"ຈົ່ງສັນເສີນພຣະເຈົ້າ ຄືພຣະບິດາຂອງພຣະເຢຊູຄຣິສເຈົ້າຂອງເຮົາທັງຫຼາຍ ຄືພຣະ ບິດາຜູ້ຊົງຄວາມເມດຕາ ແລະພຣະເຈົ້າຜູ້ຊົງເລົ້າໂລມໃຈທຸກຢ່າງ, ພຣະອົງຊົງເລົ້າ ໂລມໃຈເຮົາໃນການຍາກລຳບາກທຸກຢ່າງຂອງເຮົາ ເພື່ອເຮົາຈະ ສາມາດໄດ້ເລົ້າ ໂລມໃຈຄົນເຫຼົ່ານັ້ນ ທີ່ມີຄວາມທຸກລຳບາກຢ່າງໃດຢ່າງນຶ່ງ ດ້ວຍຄວາມເລົ້າໂລມ ໃຈທີ່ເຮົາເອງໄດ້ຮັບມາຈາກພຣະເຈົ້າ" 2 ໂກຣິນໂທ 1:3-4*

## ຄຳອະທິຖານເປີດພິທີການ

ຄຳອະທິຖານຄວນເປັນໄປແບບສັ້ນໆແລະຈະແຈ້ງ ເໝາະສົມກັບເຫດການ ທັ້ງນີ້ເພື່ອເປັນການປຸກຣະດົມ ຈິດວິນຍານໃຫ້ສງົບລົງ ແລະທຳໃຫ້ຈິດໃຈຜູ້ຟັງ ອ່ອນນ້ອມລົງ ຍອມຮັບເອົາພຣະປັນຍາທີ່ມາແຕ່ພຣະເຈົ້າ ສຳນຶກເຖິງພຣະມະ ຫາກະຣຸນາຂອງ ພຣະ ອົງ ແລະເຂົ້າໃຈວ່າ ພຣະເຈົ້າຊົງສະເດັດລົງມາເລົ້າໂລມໃຈ ຄົນທີ່ຮັບທຸກໂສກນັ້ນ.

## ເພັງພິເສດ

ອາຈານ ຄວນປຶກສາຫາລືກັບຄອບຄົວຜູ້ຕາຍ ເພື່ອຈັດເພັງພິເສດຕາມຄວາມປະສົງ ຂອງຄອບຄົວນັ້ນ ອາດເປັນ ເພັງທີ່ຜູ້ຕາຍນັ້ນມັກຮ້ອງ ຫຼືເປັນເພັງທີ່ກ່ຽວກັບຄວາມ ຫວັງແລະຄວາມໄວ້ໃຈໃນພຣະເຈົ້າ. ຫຼືອາຈານ ອາດອ່ານຂໍ້ ຄວາມບົດເພັງນັ້ນ ເພື່ອເປັນທີ່ເລົ້າໂລມໃຈຜູ້ທີ່ມາປະຊຸມນັ້ນ.

## ການກ່າວປະຫວັດຂອງຜູ້ຕາຍ

ໃນພິທີຝັງສົພ ຫາກມີຄົນທີ່ບໍ່ຮູ້ຈັກຜູ້ຕາຍຢູ່ດ້ວຍ ຄວນສເນີໃຫ້ທາງຄອບຄົວ ຮຽບຮຽງ ເລື້ອງປະຫວັດຂອງຜູ້ກ່ຽວ ຢ່າງຍໍ້ໆ ເພື່ອໃຫ້ອາຈານໄດ້ອ່ານ. ໃນປະຫວັດນັ້ນ ບໍ່ຄວນ ຍ້ອງຜູ້ຕາຍນັ້ນເກີນໄປ.

## ການອ່ານຂໍ້ພຣະຄຳພີ

ຄວນອ່ານຢ່າງຊ້າໆ ແລະຈະແຈ້ງ ເປັນຂໍ້ພຣະຄຳພີທີ່ກ່ຽວກັບບົດເທສນາ ອາຈານ ອາດຈະເລືອກເອົາບົດໃດບົດນຶ່ງ ທີ່ຂຽນໃນປຶ້ມນີ້ ຫຼືເລືອກຈາກບົດອື່ນໆກໍໄດ້.

## ຂໍ້ພຣະທັມສຳຣັບຄົນທົ່ວໄປ

*"ພຣະຜູ້ເປັນເຈົ້າຊົງເປັນແສງສວ່າງ ເປັນພຣະຜູ້ຊ່ວຍໃຫ້ພົ້ນຂອງຂ້ານ້ອຍ ຂ້ານ້ອຍ ຈະຢ້ານຜູ້ນຶ່ງຜູ້ໃດ ? ພຣະອົງຊົງ ຄຸ້ມຄອງຂ້ານ້ອຍຈາກພັຍອັນຕຣາຍ ທຸກຢ່າງ ຂ້ານ້ອຍຈະບໍ່ຢ້ານ … ຂ້ານ້ອຍໄດ້ທູນຂໍພຽງສິ່ງດຽວຕໍ່ພຣະເຈົ້າ ຄືອາສັຍ ຢູ່ໃນພຣະວິຫານຂອງພຣະອົງຕລອດຊົ່ວຊີວິດຂອງຂ້ານ້ອຍ ເພື່ອເບິ່ງຄວາມດີຂອງ ພຣະອົງ ແລະທູນຂໍການນຳພາຂອງ ພຣະອົງຢູ່ທີ່ນັ້ນ ໃນຄາວຕົກທຸກໄດ້ຍາກພຣະອົງ ຈະຊົງປົກປັກຮັກສາ ຂ້ານ້ອຍ ພຣະອົງຈະຊົງ ໃຫ້ຂ້ານ້ອຍຫຼົບພັຍຢູ່ໃນ ພຣະວິຫານ ຂອງພຣະອົງ ແລະຊົງ ໃຫ້ ຂ້າພຣະອົງຢູ່ເທິງໂງ່ນຫີນສູງຢ່າງປອດພັຍ ດັ່ງນັ້ນ ຂ້ານ້ອຍຈະຊະນະສັດຕຣູທີ່ ອ້ອມຮອບຂ້ານ້ອຍ ຂ້ານ້ອຍຈະຖວາຍເຄື່ອງບູຊາໃນພຣະ ວິຫານຂອງພຣະອົງດ້ວຍສຽງໂຮຮ້ອງຍິນດີ ຂ້ານ້ອຍຈະຮ້ອງ ເພັງສັຣເສີນພຣະອົງ ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງຟັງສຽງຂ້ານ້ອຍ ເມື່ອຂ້ານ້ອຍຮ້ອງຫາພຣະອົງ ຂໍຊົງ ເມດຕາກະຣຸນາ ແລະຕອບຂ້ານ້ອຍດ້ວຍ ພຣະອົງຊົງກ່າວວ່າ "ຈົ່ງມາຫາເຮົາ" ຂ້າແດ່ພຣະເຈົ້າ ຂ້ານ້ອຍຈະມາຫາພຣະອົງ " ເພັງສັຣເສີນ 27: 1, 4-8*

*"ເຈົ້າບໍ່ຮູ້ບໍ ? ບໍ່ເຄີຍໄດ້ຍິນດບໍ ? ວ່າພຣະຜູ້ເປັນເຈົ້າຊົງເປັນພຣະເຈົ້າຕລອດໄປ ເປັນນິດ ພຣະອົງຊົງສ້າງໂລກທັງ ໝົດ ພຣະອົງບໍ່ເຄີຍເມື່ອຍຫຼືອ່ອນແອ ບໍ່ມີໃຜ ຢັ່ງຮູ້ ນໍ້າພຣະທັຍຂອງພຣະອົງ ພຣະອົງຊົງເຮັດ ໃຫ້ຜູ້ອ່ອນແຮງ ແລະອິດເມື່ອຍມີ ກຳລັງ ວັງຊາ ແມ່ນແຕ່ພວກຄົນໜຸ່ມກໍຈະອ່ອນແຮງ ແລະຊາຍສະກັນກໍຈະລົ້ມລົງ ແຕ່ຄົນ ທັງຫຼາຍທີ່ລໍຄອຍພຣະເຈົ້າ ຈະໄດ້ຮັບການເສີມສ້າງເຫື່ອແຮງຂຶ້ນໃໝ່ ພວກເຂົາຈະມີ ປີກບິນໄປເໝືອນນົກອິນຊີ ເມື່ອເຂົາແລ່ນຫຼືຍ່າງໄປຈະບໍ່ເມື່ອຍ ແລະອ່ອນແຮງ " ເອຊາຢາ 40:28-31*

*"ພີ່ນ້ອງທັງຫຼາຍເອີຍ ເຮົາກ່າວດັ່ງນີ້ ໝາຍຄວາມວ່າ ມະນຸດທຳມະດາຈະມີສ່ວນໃນ ຣາຊອານາຈັກຂອງພຣະເຈົ້າບໍ່ໄດ້ ແລະສິ່ງທີ່ເນົ່າເປື່ອຍຈະມີສ່ວນໃນສິ່ງທີ່ບໍ່ເນົ່າ ເປື່ອຍກໍບໍ່ໄດ້ ນີ້ແຫຼະ ເຮົາມີຂໍເລິກລັບບອກພວກເຈົ້າວ່າ ເຮົາທັງຫຼາຍ ຈະບໍ່ລ່ວງ ລັບໄປໝົດທຸກຄົນ ແຕ່ເຮົາທັງຫຼາຍຈະຖືກຊົງປ່ຽນແປງໃໝ່ໝົດທຸກຄົນ ໃນຊົ່ວ ຂະນະດຽວ, ໃນພິບຕາ*

ດຽວ, ເມື່ອເປົ່າແກຄັ້ງສຸດທ້າຍນັ້ນ ດ້ວຍວ່າຈະມີສຽງແກ ແລະຄົນທີ່ຕາຍແລ້ວນັ້ນ ຈະຖືກຊົງບັນດານໃຫ້ເປັນຄືນມາ ໂດຍບໍ່ເນົ່າເປື່ອຍ ແລະຝ່າຍພວກເຮົາກໍຈະຖືກຊົງ ປ່ຽນແປງໃໝ່ ເພາະວ່າກາຍທີ່ເປື່ອຍເນົ່ານີ້ຕ້ອງ ສວມກາຍທີ່ບໍ່ຮູ້ຈັກເປື່ອຍເນົ່າ ແລະກາຍທີ່ຕາຍເປັນນີ້ ຕ້ອງສວມກາຍທີ່ຕາຍບໍ່ເປັນ ແລະເມື່ອກາຍທີ່ຮູ້ຈັກເນົ່າເປື່ອຍ ນີ້ຕ້ອງສວມກາຍທີ່ບໍ່ຮູ້ຈັກເນົ່າເປື່ອຍ ແລະກາຍທີ່ ຕາຍເປັນນີ້ຕ້ອງສວມກາຍທີ່ຕາຍ ບໍ່ເປັນ ເມື່ອນັ້ນແຫຼະ ຄວາມທີ່ຂຽນໄວ້ໃນ ພຣະຄຳພີນັ້ນກໍຈະສຳເຣັດ ຄືວ່າ "ຄວາມຕາຍ ໄດ້ຕົກເຖິງທີ່ປະລາຊັຍແລ້ວ" 1 ໂກຣິນໂທ 15: 50-54

"ພີ່ນ້ອງທັງຫຼາຍເອີຍ, ພວກເຮົາຢາກໃຫ້ເຈົ້າທັງຫຼາຍຮູ້ຄວາມຈິງເລື້ອງຄົນທີ່ຫຼັບ ໄປນັ້ນ ເພື່ອພວກເຈົ້າຈະບໍ່ໂສກເສົ້າເໝືອນດັ່ງຄົນອື່ນທີ່ບໍ່ມີຄວາມຫວັງ. ເພາະໃນ ເມື່ອເຮົາເຊື່ອວ່າ ພຣະເຢຊູຊົງສິ້ນພຣະຊົນແລະຊົງຄືນພຣະຊົນແລ້ວ ໂດຍພຣະເຢຊູ ນັ້ນແຫຼະ, ພຣະເຂໝຈົ້າໄດ້ຊົງນຳບັນດາຄົນທີ່ຫຼັບໄປແລ້ວນັ້ນ ໃຫ້ມາກັບພຣະອົງ. ໃນຂໍ້ນີ້ເຮົາບອກເຈົ້າທັງຫຼາຍຕາມພຣະທັມຂອງອົງພຣະຜູ້ ເປັນເຈົ້າວ່າ ພວກເຮົາຜູ້ ຍັງເປັນຢູ່ແລະຄອຍຖ້າການສະເດັດມາຂອງພຣະຜູ້ເປັນເຈົ້າ ເຮົາຈະລ່ວງໜ້າໄປກ່ອນ ພວກຄົນທີ່ຫຼັບໄປນັ້ນກໍບໍ່ໄດ້ແທ້. ດ້ວຍວ່າຈະມີຄຳສັ່ງ ອັນດັງ, ຈະມີສຽງຂອງອັກຄະເທວະດາ, ແລະສຽງແກຂອງພຣະເຈົ້າ ແລ້ວອົງພຣະຜູ້ ເປັນເຈົ້າຈະສະເດັດມາຈາກສວັນ ພວກຄົນທີ່ເຊື່ອໃນພຣະຄຣິສທີ່ຕາຍໄປແລ້ວກໍຈະ ຄືນຂຶ້ນມາກ່ອນ. ຫຼັງຈາກນັ້ນເຮົາ ທັງຫຼາຍຜູ້ມີຊີວິດຍັງເປັນຢູ່ກໍຈະຖືກຮັບໄປໃນ ເມກພ້ອມກັບຄົນພວກນັ້ນ ແລະຈະພົບອົງພຣະຜູ້ເປັນເຈົ້າໃນຟ້າອາກາດ ຢ່າງນັ້ນ ແຫຼະ, ພວກເຮົາກໍຈະຢູ່ນຳພຣະຜູ້ເປັນເຈົ້າເປັນນິດ. ເຫດສັນນັ້ນ ຈົ່ງເລົ້າໂລມ ອອຍໃຈກັນແລະກັນ ດ້ວຍຂໍ້ຄວາມເຫຼົ່ານີ້ເຖີດ"
1 ເທຊະໂລກນິກ 4:13-18

## ຂໍ້ພຣະທັມສຳຣັບເດັກ ຫຼືເຍົາວະຊົນ

"ດາວິດໄດ້ອ້ອນວອນຂໍໃຫ້ພຣະຜູເປັນເຈົ້າໂຜດຊ່ວຍລູກຊາຍໃຫ້ດີ ແລະທຸກໆຄືນ ດາວິດໄດ້ນອນຢຽດຢູ່ພື້ນຫ້ອງນອນຂອງພຣະອົງໂດຍບໍ່ຍອມກິນເຂົ້າ ພວກຂ້າຣາຊ ການໃນພຣະຣາຊວັງຂອງພຣະອົງໄດ້ຊັກຊວນໃຫ້ພຣະອົງລຸກຂຶ້ນ ແຕ່ພຣະອົງກໍປະຕິ ເສດແລະບໍ່ຍອມກິນຫຍັງໝົດ ອາທິດຕໍ່ມາລູກຊາຍຂອງດາວິດກໍຕາຍ ພວກຂ້າຣາຊ ການຂອງພຣະອົງບໍ່ກ້ານຳຂ່າວນັ້ນມາບອກພຣະອົງ ພວກເຂົາໄດ້ເວົ້າກັນວ່າ "ເມື່ອເດັກ ນ້ອຍຍັງມີຊີວິດຢູ່ ພວກເຮົາໄດ້ຖາມພຣະອົງແຕ່ພຣະອົງບໍ່ຕອບພວກ ເຮົາເລີຍ ເຫດໃດພວກເຮົາຈຶ່ງຈະບອກພຣະອົງໄດ້ວ່າ ລູກຂອງພຣະອົງເສັຽຊີວິດແລ້ວ? ພຣະອົງອາດເຮັດໃນສິ່ງທີ່ບໍ່ດີບ່ອງມກໍເປັນໄດ້" ເມື່ອພວກເຂົາກຳລັງຊຸບ ກັນຢູ່ນັ້ນ ດາວິດກໍເຂົ້າໃຈວ່າລູກຂອງພຣະອົງໄດ້ຕາຍແລ້ວ ດັ່ງນັ້ນພຣະອົງຈຶ່ງຖາມ ພວກເຂົາວ່າ "ລູກຂ້ອຍຕາຍແລ້ວແມ່ນບໍ?" ພວກເຂົາກໍຕອບວ່າ "ຕາຍແລ້ວ" ດາວິດລຸກຂຶ້ນໄປ ອາບນ້ຳທາອີພົມ ແລະປ່ຽນເຄື່ອງນຸ່ງ ແລ້ວພຣະອົງກໍໄປນະມັສການ ທີ່ພຣະວິຫານຂອງພຣະຜູ້ເປັນເຈົ້າ ເມື່ອພຣະອົງກັບຄືນມາສູ່ພຣະຣາຊວັງ ພຣະອົງກໍໄດ້ຖາມຫາອາຫານ ແລະເຂົາໄດ້ຈັດແຈ່ງອາຫານໃຫ້ພຣະອົງສເວີຍໃນ ທັນໃດນັ້ນເອງ ພວກຂ້າຣາຊການ ຂອງພຣະອົງຈຶ່ງຖາມວ່າ "ເມື່ອເດັກນ້ອຍຍັງຢູ່ ພຣະອົງຊົງໂສກເສົ້າຮ້ອງໄຫ້ ແລະບໍ່ຍອມສເວີຍອາຫານ ແຕ່ພໍເດັກໄດ້ຕາຍໄປ ແລ້ວ ພຣະອົງກໍຊົງລຸກຂຶ້ນແລະສເວີຍ ອາຫານໄດ້ ພວກຂ້ານ້ອຍບໍ່ເຂົ້າໃຈໃນເຫດ ການຢ່າງນີ້ເລີຍ" ດາວິດຕອບວ່າ "ເມື່ອ ລູກຂ້ອຍຍັງຢູ່ ຂ້ອຍໄດ້ອົດອາຫານ ໂສກເສົ້າແລະຮ້ອງໄຫ້ ເພາະເຮົາຄິດວ່າພຣະຜູ້ເປັນ ເຈົ້າອາດຈະຊົງເມດຕາປະທານຊີວິດ ໃຫ້ແກ່ເດັກນ້ອຍນັ້ນ ແຕ່ວ່າດຽວນີ້ລູກເຮົາໄດ້ ຕາຍແລ້ວ ເຮົາຈະອົດອາຫານໄປ ເຮັດຫຍັງ? ຖ້າຂ້ອຍອົດອາຫານ ຊີວິດເດັກນ້ອຍນັ້ນ ຈະກັບຄືນມາໄດ້ອີກບໍ? ມື້ນຶ່ງ ເຮົາອາດຈະໄປບ່ອນດຽວກັນກັບລູກຢູ່ ແຕ່ລູກນັ້ນຈະມາ ຫາເຮົາບໍ່ໄດ້."
ຊາມູເອນສອງ 12: 16-23

"ພຣະເຈົ້າຊົງເປັນຜູ້ລ້ຽງຂ້ານ້ອຍ ຂ້ານ້ອຍມີທຸກສິ່ງທີ່ຂ້ານ້ອຍຕ້ອງການ ພຣະອົງ ຊົງພາຂ້ານ້ອຍໃຫ້ພັກເຊົາຢູ່ໃນປ່າຫຍ້າອັນຂຽວສົດ ພຣະອົງຊົງພາຂ້ານ້ອຍໄປໃນ ບ່ອນມີ ບໍ່ນ້ຳອັນສົດໃສແລະງຽບສງັດ. ພຣະອົງຊົງໃຫ້ຂ້ານ້ອຍມີແຮງຂຶ້ນໃໝ່ ແລະຊົງພາຂ້ານ້ອຍໄປໃນທາງທີ່ຖືກຕ້ອງຕາມທີ່ພຣະອົງຊົງສັນຍາໄວ້. ຂ້ານແດ່ພຣະເຈົ້າ ເຖິງແມ່ນວ່າທາງຈະຜ່ານຄວາມມືດມົນອັນເລິກລັບ ຂ້ານ້ອຍກໍ ຈະບໍ່ຢ້ານ ເພາະວ່າພຣະອົງ ຊົງຢູ່ກັບຂ້ານ້ອຍ ໄມ້ຄ້ອນ ແລະໄມ້ເທົ້າທີ່ພຣະອົງຊົງໃຊ້ ກໍຊ່ວຍໃຫ້ຂ້ານ້ອຍ ພົ້ນໄພ. ພຣະ ອົງ ຊົງ ລ້ຽງຂ້ານ້ອຍຢ່າງອີ່ມໜຳສຳຣານທ່າມກາງສັດຕຣູທັງຫຼາຍ ພຣະອົງຊົງຕ້ອນຮັບຂ້ານ້ອຍ ໂດຍຖອກນ້ຳມັນຫອມໃສ່ເທິງ ຫົວຂ້ານ້ອຍ ແລະຊົງໃຫ້ຈອກຂ້ານ້ອຍເຕັມລົ້ນຢູ່. ຄວາມດີແລະຄວາມຮັກຂອງ ພຣະອົງຈະຢູ່ກັບຂ້ານ້ອຍ ຕລອດຊີວິດ ແລະວິຫານຂອງພຣະອົງກໍເປັນເຮືອນຢູ່ຂອງ ຂ້ານ້ອຍຕລອດໄປ" ເພັງສັຣເສີນ 23.

"ແລະເຂົາໄດ້ອູ້ມເດັກນ້ອຍມາຫາພຣະອົງ ເພື່ອຈະໃຫ້ພຣະອົງຊົງຢຽດພຣະຫັດໃສ່ເຂົາ ແຕ່ພວກສາວົກໄດ້ຫ້າມປາມເຂົາໄວ້. ເມື່ອພຣະເຢຊູຊົງເຫັນດັ່ງນັ້ນ ກໍເຄືອງພຣະທັຍ ຈຶ່ງຊົງກ່າວແກ່ພວກສາວົກວ່າ "ຈົ່ງປ່ອຍໃຫ້ເດັກນ້ອຍມາຫາເຮົາ ຢ່າຫ້າມເຂົາ ເພາະ ວ່າຣາຊແຜ່ນດິນຂອງພຣະເຈົ້າເປັນຂອງຄົນຢ່າງນີ້ແຫຼະ. ເຮົາບອກທ່ານທັງຫຼາຍຕາມຈິງວ່າ ຖ້າຜູ້ໃດບໍ່ຮັບຣາຊແຜ່ນດິນຂອງພຣະເຈົ້າ ເໝືອນດັ່ງເດັກນ້ອຍນີ້ ຜູ້ນັ້ນຈະເຂົ້າ ໃນຣາຊແຜ່ນດິນຂອງພຣະເຈົ້າບໍ່ໄດ້ຈັກເທື່ອ" ແລ້ວພຣະອົງຊົງອູ້ມເດັກນ້ອຍເຫຼົ່ານັ້ນ ຢຽດພຣະຫັດໃສ່ແລະຊົງອວຍພອນ ໃຫ້ເຂົາ"
ມາຣະໂກ 10: 13-16

## ຂໍ້ພຣະຄຳສຳຣັບຜູ້ໃຫຍ່ທີ່ຫ້າວຫັນ ແລະຊື່ສັດຕໍ່ພຣະເຈົ້າ

"ຄວາມສຸກເປັນຂອງຄົນຜູ້ບໍ່ເຮັດຕາມຄຳແນະນຳຂອງຄົນຊົ່ວ ຜູ້ທີ່ບໍ່ປະພຶດຕາມ ແບບຢ່າງຂອງຄົນບາບ ຫຼືບໍ່ຄົບພັນກັບພວກທີ່ໝິ່ນປະໝາດພຣະເຈົ້າ. ແຕ່ຄວາມ ສຸກເປັນຂອງຜູ້ທີ່ມັກອ່ານພຣະທັມຂອງພຣະເຈົ້າ ແລະຮຽນຮູ້ເອົາທຸກມື້ທຸກຄືນ. ຄົນຜູ້ນີ້ ເປັນຄືຕົ້ນໄມ້ທີ່ປູກຢູ່ໃກ້ລຳນ້ຳຊຶ່ງມີໃບຂຽວສົດງົດງາມ ແລະເກີດໝາກຕາມ ຣະດູການລາວກະທຳທຸກສິ່ງກໍສຳເຣັດຜົນ ແຕ່ວ່າຄົນຊົ່ວບໍ່ເປັນດັ່ງນີ້ເລີຍ ເຂົາເປັນ ເໝືອນຂີ້ແກບທີ່ລົມພັດປິວໄປ ພຣະເຈົ້າຈະຕັດສິນລົງໂທດຄົນຊົ່ວ ຄົນບາບຈະ ຖືກກຳຈັດໜີຈາກຄົນຊອບທັມ ພຣະຜູ້ເປັນເຈົ້າຊົງພິທັກຮັກສາຄົນຊອບທັມ ແຕ່ວ່າ ຄົນຊົ່ວຈະຖືກປະປ່ອຍໃຫ້ດັບສູນໄປ" ເພັງສັຣເສີນ 1

"ຂ້ານແດ່ພຣະຜູ້ເປັນເຈົ້າ ໃຜອາດຈະຢູ່ໃນພຣະວິຫານຂອງພຣະອົງໄດ້ ຜູ້ໃດຈະຢູ່ໃນ ຊີໂອນພູສັກສິດຂອງພຣະອົງໄດ້ ຕພນຄົນທີ່ເຊື່ອຟັງຄວາມຂອງພຣະເຈົ້າ ເຮັດໃນ ສິ່ງທີ່ຖືກຕ້ອງສເມີໄປ ຄືມີຄວາມເວົ້າອັນສັດຊື່ແລະແນ່ແທ້ ແລະຜູ້ທີ່ບໍ່ປມາດຄົນ ອື່ນລາວບໍ່ເຮັດຜິດຕໍ່ໝູ່ຄູ່ແລະບໍ່ກ່າວຂວັນນິນທາເພື່ອນບ້ານ ລາວກຽດຊັງຄົນຊົ່ວທີ່ ພຣະເຈົ້າປະຖິ້ມ ແຕ່ລາວໃຫ້ກຽດຜູ້ທີ່ເຊື່ອຟັງພຣະອົງ ລາວເຮັດຕາມຄຳສັນຍາຂອງ ຕົນເອງສເມີ ເຖິງແມ່ນລາວຈະເສັຽຜົນປະໂຫຽດຫຼາຍປານໃດກໍຕາມ ລາວກໍບໍ່ຍອມ ປີ້ນຄວາມ ລາວໃຫ້ຄົນຢືມເງິນໂດຍບໍ່ຄິດດອກເບັ້ຽ ແລະບໍ່ຮັບເອົາສິນບົນເພື່ອຕໍ່ສູ້ຄົນທີ່ບໍ່ມີຄວາມຜິດ ຜູ້ກຳທຳສິ່ງເຫຼົ່ານີ້ ຈະບໍ່ຫຼົງເສັຽຈັກເທື່ອ" ເພັງສັຣເສີນ 15

"ເມັຽທີ່ດີຍ່ອມປະເສີດກວ່າເພັດນິນຈິນດາ ແຕ່ຍາກຫຼາຍທີ່ຈະໄດ້ຍິງເຊັ່ນນັ້ນ ຜົວທີ່ມີ ເມັຽດີກໍວາງໃຈໃນນາງໄດ້ ລາວຈະບໍ່ເປັນທຸກເລີຍ ເມັຽທີ່ດີນັ້ນເປັນດັ່ງນີ້ ຄືເຮັດແຕ່ ສິ່ງທີ່ດີຕໍ່ຜົວ ແລະຈະບໍ່ເຮັດໃຫ້ຜົວເຊື່ອນເສັຽຕລອດຊີວິດ..

*ໃຫ້ຄວາມຊ່ວຍເຫຼືອ ແກ່ຜູ້ທຸກຍາກແລະຜູ້ຂັດສົນ.... ເປັນຍິງທີ່ແຂງແຮງ ແລະໜ້າເຄົາຣົບນັບຖື ແລະນາງຈະບໍ່ສະທ້ານຕໍ່ເຫດການທີ່ຈະເກີດຂຶ້ນໃນອານາຄົດ ເປັນຍິງເວົ້າຈາຫຼັກແຫຼມ ແລະສຸພາບອ່ອນຫວານ ຫຼ້ຽງກ່ຽວກັບວຽກ ແລະເອົາໃຈໃສ່ ໃນຄວາມຕ້ອງການຂອງຄອບຄົວສເມີ ລູກພົວຂອງນາງຈະສະແດງຄວາມພໍໃຈ ແລະຍ້ອງຍໍນາງ ພົວຈະເວົ້າວ່າ "ມີຜູ້ຍິງຢູ່ຫຼາຍຄົນເປັນເມັຽທີ່ດີ ແຕ່ເຈົ້າດີກວ່າຜູ້ ຍິງທັງປວງ" ສເນ່ເປັນຂອງຫຼອກລວງ ແລະຄວາມງາມກໍເປັນຂອງບໍ່ແນ່ນອນ ແຕ່ຜູ້ຍິງທີ່ຢໍາເກງພຣະເຈົ້າ ກໍສົມຄວນໄດ້ຮັບການສັຣເສີນ ຍ້ອນພົນງານທັງປວງ ທີ່ນາງໄດ້ເຮັດມານັ້ນ ຈົ່ງໃຫ້ກຽດແກ່ນາງ ນາງສົມຄວນໄດ້ຄວາມເຄົາຣົບນັບຖືຈາກ ທຸກໆຄົນ"*

*ສຸພາສິດ 31: 10,11,20,25-31*

*"ຢ່າໃຫ້ໃຈຂອງທ່ານທັງຫຼາຍອຸ້ນອາຍໄປ ຈົ່ງໄວ້ວາງໃຈໃນພຣະເຈົ້າແລະໄວ້ ວາງໃຈໃນເຮົາເໝືອນກັນ. ໃນຜາສາດຂອງພຣະບິດາເຮົາມີທີ່ຢູ່ຫຼາຍບ່ອນ ຖ້າບໍ່ມີເຮົາຄົງໄດ້ ບອກພວກທ່ານແລ້ວ ເພາະເຮົາໄປຈັດແຈງບ່ອນໄວ້ສຳຣັບທ່ານທັງຫຼາຍ. ເມື່ອເຮົາ ໄປຈັດແຈ່ງບ່ອນໄວ້ສຳຣັບພວກທ່ານແລ້ວ ເຮົາຈະກັບມາອີກ ຮັບທ່ານໄປຢູ່ກັບເຮົາ ເພື່ອວ່າເຮົາຢູ່ທີ່ໃດພວກທ່ານຈະຢູ່ທີ່ນັ້ນ ເໝືອນກັນ, ແລະທ່ານຮູ້ຈັກທາງທີ່ເຮົາຈະ ໄປນັ້ນ". ໂທມາທູນພຣະອົງວ່າ "ນາຍເຈົ້າເອີຍ, ພວກຂ້ານ້ອຍບໍ່ຮູ້ວ່າທ່ານຈະໄປໃສ ພວກຂ້ານ້ອຍຈະຮູ້ຈັກທາງນັ້ນ ດ້ວຍຢ່າງໃດ ?" ພຣະເຢຊູຊົງຕອບລາວວ່າ "ເຮົານີ້ແຫຼະ ເປັນທາງນັ້ນ ເປັນຄວາມ ຈິງ ແລະເປັນຊີວິດ ບໍ່ມີຜູ້ໃດມາເຖິງພຣະບິດາ ໄດ້ນອກຈາກ ມາທາງເຮົາ. ຖ້າທ່ານ ທັງຫຼາຍຮູ້ຈັກເຮົາແລ້ວ ທ່ານກໍຄົງຮູ້ຈັກພຣະບິດາ ຂອງເຮົາເໝືອນກັນ ຕັ້ງແຕ່ນີ້ໄປ ທ່ານທັງຫຼາຍກໍຮູ້ຈັກພຣະອົງ ແລະໄດ້ເຫັນພຣະອົງ" ໂຢຮັນ 14: 1-7*

*"ສາທຸການແດ່ພຣະເຈົ້າພຣະບິດາແຫ່ງພຣະເຢຊູຄຣິສເຈົ້າຂອງເຮົາທັງຫຼາຍ, ຜູ້ໄດ້ຊົງພຣະມະຫາກະຣຸນາແກ່ພວກເຮົາ, ຊົງໂຜດໃຫ້ພວກເຮົາບັງເກີດໃໝ່ ເຂົ້າສູ່ ຄວາມຫວັງໃຈອັນມີອັນມີຊີວິດຢູ່ ໂດຍການຄືນພຣະຊົນຂອງພຣະເຢຊູຄຣິສ, ເພື່ອໃຫ້ໄດ້ ຮັບມໍຣະດົກຊຶ່ງບໍ່ຮູ້ເນົ່າເປື່ອຍ, ບໍ່ຖືກຊົ່ວມົວໝອງ ແລະຫ່ຽວແຫ້ງໄປ ບໍ່ໄດ້ ຊຶ່ງໄດ້ຮັກສາໄວ້ໃນພຣະມາຫາສວັນເພື່ອທ່ານທັງຫຼາຍ, ຊຶ່ງເປັນຜູ້ທີ່ຣິດ ເດດຂອງພຣະເຈົ້າ ຊົງເຝົ້າຮັກສາໄວ້ດ້ວຍຄວາມເຊື່ອ ຈົນໄດ້ເຖິງຄວາມພົ້ນ ຊຶ່ງ ພ້ອມແລ້ວທີ່ຈະປາກົດໃນເວລາສຸດທ້າຍ. ໃນສິ່ງນີ້ແຫຼະ, ຈົ່ງຊົມຊື່ນຍິນດີຫຼາຍຊຶ່ງແມ່ນວ່າ ດຽວນີ້ ຈຳເປັນທີ່ ພວກທ່ານຈະຕ້ອງທົນຄວາມທຸກໂສກ ດ້ວຍການຖືກ ທົດລອງຕ່າງໆ ໃນຊົ່ວເວລາໜຶ່ງ ເຖິງແມ່ນວ່າ ຄຳກໍຍັງຖືກລອງເບິ່ງດ້ວຍໄຟ ແຕ່ ຄວາມເຊື່ອທີ່ຖືກລອງກໍປະເສີດກວ່າ ຄຳທີ່ຍ່ອມຮູ້ສູນຫາຍໄປ ດັ່ງນັ້ນການທົດລອງ ຕ່າງໆ ກໍເກີດຂຶ້ນເພື່ອໃຫ້ຄວາມເຊື່ອ ທີ່ລອງແລ້ວນັ້ນ ປາກົດວ່າຄວນຮັບຄວາມ ສັຣເສີນ, ສະງ່າຣາສີ, ແລະກຽດຕິຍົດ ໃນເວລາທີ່ພຣະເຢຊູຄຣິສຈະສະເດັດມາ ປາກົດ. ພຣະອົງຜູ້ທີ່ທ່ານຍັງບໍ່ໄດ້ເຫັນ ແຕ່ພວກທ່ານກໍຍັງຮັກພຣະອົງຢູ່ ເຖິງແມ່ນວ່າຂະນະນີ້ພວກທ່ານບໍ່ເຫັນພຣະອົງ ແຕ່ຍັງເຊື່ອແລະຊື່ນຊົມຍິນດີ ດ້ວຍຄວາມຍິນດີອັນຮຸ່ງເຮືອງຊຶ່ງເຫຼືອທີ່ ຈະອະທິບາຍໄດ້. ແລ້ວທ່ານທັງຫຼາຍ ຈຶ່ງໄດ້ຮັບຕາມຈຸດປະສົງແຫ່ງຄວາມເຊື່ອຂອງພວກທ່ານ ຄືວິນຍານຈິດຂອງ ພວກທ່ານຈະໄດ້ລອດພົ້ນ" 1 ເປໂຕ 1: 3-9*

## ຂໍ້ພຣະທັມສຳຣັບຜູ້ອາວຸໂສ

*"ຂ້າແດ່ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງເປັນທີ່ເພິ່ງຂອງຂ້ານ້ອຍເລື້ອຍມາ ພຣະອົງຊົງເປັນພຣະເຈົ້າອົງຊົ່ວນິຣັນ ດອນ ບໍ່ມີກົກ ບໍ່ມີປາຍ ກ່ອນສ້າງພູທັງຫຼາຍ ແລະພື້ນແຜ່ນດິນໂລກນີ້ ພຣອົງຊົງບອກໃຫ້ມະນຸດກັບຄືນໄປຫາສິ່ງທີ່ ເຂົາເປັນຢູ່ ໃນເມື່ອກ່ອນ ພຣະອົງຊົງປ່ຽນແປງເຂົາໃຫ້ກັບຄືນເປັນດິນອີກ ສຳຣັບພຣະອົງ ພັນປີເທົ່າກັບມື້ດຽວ*

ມັນເໜືອນກັບມື້ວານນີ້ທີ່ຜ່ານໄປແລ້ວ ແລະເໜືອນກັບເວລາ ສັ້ນໆ ໃນຕອນກາງຄືນ. ພຣະອົງຊົງກວາດມະນຸດອອກ ເໜືອນກະແສນໍ້າກວາດ ຊີວິດຂອງພວກເຂົາເໜືອນຄວາມຝັນ ແລະພວກເຂົາກໍເໜືອນຕົ້ນຫຍ້າທີ່ສົດຊື່ນໃນ ຕອນເຊົ້າ ຊຶ່ງປົ່ງຂຶ້ນແລະອອກດອກຢ່າງເບີກບານ ແລ້ວມັນກໍຫ່ຽວແຫ້ງແລະຕາຍໄປ ໃນຕອນແລງພຣະອົງຊົງຮູ້ຈັກຄວາມຜິດ ຂອງພວກຂ້ານ້ອຍ ແລະຊົງເຫັນຄວາມຜິດ ອັນທີ່ພວກຂ້ານ້ອຍອໍາໄວ້. ຄວາມພິໂຣດຂອງພຣະອົງກໍບັ່ນທອນໃຫ້ຊີ ວິດປະຈໍາ ວັນຂອງພວກຂ້ານ້ອຍໃຫ້ສັ້ນເຂົ້າ ຊີວິດຂອງພວກຂ້ານ້ອຍໄດ້ມາເຖິງຈຸດຈົບ ເໜືອນດັ່ງສຽງລົມ. ຕລອດເຈັດສິບປີທີ່ພວກຂ້ານ້ອຍມີຊີວິດຢູ່ ແລະຖ້າວ່າ ພວກຂ້ານ້ອຍມີເຫື່ອແຮງຈົນຮອດແປດສິບປີ ມັນກໍຍັງພາໃຫ້ ພວກຂ້ານ້ອຍ ມີຄວາມ ຂັດສົນແລະຄວາມທຸກລໍາບາກອີກ ໃນບໍ່ຊ້ານີ້ ຊີວິດຈະສິ້ນສຸດລົງ ແລະພວກຂ້ານ້ອຍກໍຈະຕາຍ ໄປ... ຂໍພຣະອົງຊົງສັ່ງສອນໃຫ້ ພວກຂ້ານ້ອຍເຂົ້າໃຈວ່າ ຊີວິດນີ້ສັ້ນຫຼາຍ ເພື່ອພວກຂ້ານ້ອຍຈະກາຍເປັນຄົນສລາດ" ເພງສັຣເສີນ 90: 1-6, 10, 12

ຜູ້ທີ່ໄປເພິ່ງຄວາມປອດພັຍໃນພຣະເຈົ້າອົງສູງສຸດ ແລະຜູ້ທີ່ອາສັຍຢູ່ພາຍໃຕ້ຮົ່ມເງົາ ຂອງພຣະຜູ້ຊົງອໍານາດຍິ່ງໃຫຍ່ຈະ ເວົ້າກັບພຣະອົງວ່າ "ພຣະອົງຊົງເປັນຜູ້ປ້ອງກັນ ແລະ ຄຸ້ມຄອງຂ້ານ້ອຍ ພຣະອົງຊົງເປັນພຣະເຈົ້າຂອງຂ້ານ້ອຍ ຂ້ານ້ອຍໄວ້ເນື້ອເຊື່ອ ໃຈໃນ ພຣະອົງ" ພຣະອົງຊົງຊ່ອຍທ່ານໃຫ້ພົ້ນຈາກບ້ວງແຮ້ວອັນລັບລີ້ທຸກຢ່າງ ແນ່ນອນ ແລະຈາກພະຍາດໂລຄານາໆປະການ. ພຣະອົງຊົງຕູ້ມທ່ານດ້ວຍປີກຂອງພຣະອົງ ທ່ານຈະປອດພັຍໃຕ້ການພິທັກຮັກ ສາຂອງພຣະອົງ ຄວາມສັດຊື່ຂອງພຣະ ອົງຈະ ຄຸ້ມຄອງປ້ອງກັນທ່ານໄວ້" ເພງສັຣເສີນ 91:1-4

"ແລ້ວຂ້າພະເຈົ້າໄດ້ເຫັນທ້ອງຟ້າໃໝ່ແລະແຜ່ນດິນໂລກໃໝ່ ເພາະວ່າທ້ອງຟ້າ ເດີມ ແລະແຜ່ນດິນໂລກເດີມ ໄດ້ລ່ວງໄປແລ້ວ ແລະທະເລກໍບໍ່ມີເໜືອນກັນ. ຂ້າພະເຈົ້າໄດ້ ເຫັນນະຄອນສັກສິດ ຄືກຸງເຢຣູຊາເລັມໃໝ່ ກໍາລັງລົງ ມາຈາກສັວນ ແລະຈາກພຣະເຈົ້າ ນະຄອນນີ້ໄດ້ຈັດຕຽມໄວ້ແລ້ວເໜືອນຢ່າງເຈົ້າສາວແຕ່ງຕົວໄວ້ ສໍາຣັບເຈົ້າບ່າວ. ຂ້າພະເຈົ້າໄດ້ຍິນສຽງດັງມາຈາກບັນລັງວ່າ "ເບິ່ງແມ້ ທີ່ສະຖິດຂອງພຣະເຈົ້າກໍຢູ່ກັບ ມະນຸດແລ້ວ ພຣະອົງຈະຊົງ ສະຖິດຢູ່ກັບເຂົາ ແລະພວກເຂົາ ນັ້ນແຫຼະ ຈະເປັນໄພ່ພົນ ຂອງພຣະອົງ ແລະພຣະເຈົ້າເອງຈະປະທັບຢູ່ກັບເຂົາ. ພຣະເຈົ້າຈະຊົງເຊັດນໍ້າຕາ ທຸກໆຢົດຈາກຕາຂອງເຂົາ ຄວາມຕາຍຈະບໍ່ມີອີກຕໍ່ໄປ ຄວາມໂສກເສົ້າ ການຮ້ອງໄຫ້ ແລະຄວາມເຈັບປວດຈະບໍ່ມີອີກຕໍ່ໄປ ເພາະວ່າສິ່ງ ທີ່ມີຢູ່ຄາວກ່ອນນັ້ນກໍລ່ວງໄປແລ້ວ. ພຣະອົງຜູ້ຊົງປະທັບເທິງ ບັນລັງໄດ້ຊົງກ່າວ ວ່າ "ເບິ່ງແມ້, ເຮົາສ້າງສິ່ງທັງປວງຂຶ້ນໃໝ່" ແລະພຣະອົງຊົງກ່າວອີກວ່າ "ຈົ່ງຂຽນໄວ້ ເພາະຖ້ອຍຄໍາ ເຫຼົ່ານີ້ສັດຊື່ ແລະທ່ຽງແທ້" ພຣະອົງຊົງກ່າວກັບ ຂ້າພະເຈົ້າວ່າ "ສໍາເຣັດແລ້ວ ເຮົາຄື ອາລຟາ ແລະໂອເມຄາ ເປັນ ເບື້ອງຕົ້ນ ແລະເປັນເບື້ອງປາຍ ຜູ້ໃດຫິວນໍ້າ ຝ່າຍເຮົາຈະ ໃຫ້ຜູ້ນັ້ນດື່ມຈາກນໍ້າພຸແຫ່ງຊີວິດໂດຍບໍ່ຕ້ອງເສັຽຄ່າ. ຜູ້ໃດ ມີໄຊຊະນະ ຜູ້ນັ້ນຈະໄດ້ຮັບສິ່ງເຫຼົ່ານີ້ເປັນມໍຣະດົກ ເຮົາຈະເປັນພຣະເຈົ້າຂອງເຂົາ ເຂົານັ້ນແຫຼະ, ຈະເປັນບຸດຂອງເຮົາ" ພຣະນິມິດ 21:1-7

"ແລ້ວເທວະດາຕົນນັ້ນໄດ້ຊີ້ໃຫ້ຂ້າພະເຈົ້າເຫັນແມ່ນໍ້າ ທີ່ມີນໍ້າແຫ່ງຊີວິດໃສເໜືອນ ແກ້ວ ໄຫຼອອກມາຈາກພຣະຣາຊ ບັນລັງຂອງພຣະເຈົ້າ ແລະຂອງພຣະເມສານ້ອຍ. ນໍ້ານັ້ນໄຫຼຜ່ານຖນົນນະຄອນນັ້ນ ຢູ່ຮິມນໍ້າທັງສອງຟາກ ມີຕົ້ນໄມ້ ແຫ່ງຊີວິດຊຶ່ງ ເກີດຜົນສິບສອງຊະນິດ ເກີດຜົນທຸກເດືອນ ແລະ ໃບຕົ້ນນັ້ນສໍາຣັບປົວບັນດາປະຊາຊາດໃຫ້ດີ. ຈະບໍ່ມີ ສິ່ງໃດຖືກຊົງປ້ອຍດ່າອີກຕໍ່ໄປ ແຕ່ພຣະຣາບັນລັງຂອງພຣະເຈົ້າແລະຂອງພຣະເມສານ້ອຍຕັ້ງຢູ່ທີ່ນັ້ນ ແລະບັນດາຂ້ອຍ ໃຊ້ຂອງພຣະອົງຈະນົບຣະບັດ ພຣະອົງ. ເຂົາຈະເຫັນພຣະພັກຂອງພຣະອົງ ແລະພຣະນາມຂອງພຣະອົງຈະຊົງ ປະທັບ

*ຕາໃສ່ໜ້າຜາກຂອງເຂົາ. ກາງຄືນຈະບໍ່ມີອີກຕໍ່ໄປ ເຂົາຈະບໍ່ຕ້ອງການແສງ ໂຄມໄຟຫຼື ແສງອາທິດ ເພາະວ່າອົງພຣະຜູ້ເປັນເຈົ້າຈະຊົງສ່ອງສວ່າງ ໃສ່ເຂົາ ແລະເຂົາຈະໄດ້ ຄຸ້ມຄອງຢູ່ຕລອດໄປເປັນນິດ " ພຣະນິມິດ 22:1-5*

## ຄຳອະທິຖານ

ຄຳອະທິຖານໃນງານສົພ ຄວນເປັນຖ້ອຍຄຳທີ່ສາມາດເຂົ້າໃຈໄດ້ງ່າຍ ຊຶ່ງຜູ້ທຳການ ອະທິຖານຕໍ່ພຣະເຈົ້າ ຄວນທຳດ້ວຍຄວາມຈິງໃຈ ເພື່ອເປັນການອະທິຖານ ແທນຜູ້ ທີ່ກຳລັງໄດ້ຮັບຄວາມທຸກໂສກນັ້ນ. ຖ້າພີ່ນ້ອງຂອງຜູ້ຕາຍເປັນສະມາຊິກຂອງ ຄຣິສຕະຈັກ ຫຼືເປັນເພື່ອນຂອງສະມາຊິກໃນຄຣິສຕະຈັກ ອາຈານອາດຈະໃຊ້ການ ອະທິຖານເພື່ອພີ່ນ້ອງເຫຼົ່ານັ້ນ ເປັນຣາຍບຸກຄົນກໍໄດ້. ຖ້າຫາກມີບາງຄົນທີ່ຍັງບໍ່ໄດ້ ຮັບເອົາພຣະເຈົ້າເທື່ອ ກໍໃຫ້ອະທິຖານເພື່ອຄົນເຫຼົ່ານັ້ນດ້ວຍ ໂດຍບໍ່ຈຳເປັນຕ້ອງ ອອກຊື່ ເພື່ອເປັນການຊັກຊວນເຂົາໃຫ້ຮັບເອົາຄວາມລອດພົ້ນຈາກພຣະເຈົ້າ.

## ຄຳເທສນາ

ຂໍ້ພຣະຄຳທີ່ຈະໃຊ້ເທສນານັ້ນມີຢ່າງມາກມາຍ ອາຈານຄວນເລືອກເອົາຂໍ້ທີ່ ກະທັດທັດ ສັ້ນໆ ແລະເຂົ້າໃຈງ່າຍ ແລະເປັນການເລົ້າ ໂລມຈິດໃຈຂອງຜູ້ຟັງ ທີ່ກຳລັງໄດ້ຮັບ ຄວາມເສົ້າໂສກນັ້ນ. ຢ່າເທສນາດ້ວຍການ ໃຊ້ຄຳເວົ້າທີ່ແຂງ ກະດ້າງ ແລະດັງເກີນຄວນ. ຈົ່ງເທສນາໃຫ້ຄົນທີ່ຍັງເປັນຢູ່ນັ້ນ ຟັງແຕ່ບໍ່ແມ່ນເທດ ໃຫ້ຄົນຕາຍຟັງ. ຈົ່ງໃຊ້ຄຳປອບປະໂລມ ດັ່ງທີ່ພຣະຄຳພີໄດ້ ກ່າວວ່າ

" ຈົ່ງເລົ້າໂລມ ໂອ ຈົ່ງເລົ້າໂລມ ໄພ່ພົນຂອງເຮົາ" ຂໍ້ຄວາມດັ່ງກ່າວເປັນສິ່ງເໝາະ ສົມທີ່ຈະໃຊ້ໃນການເທສນາເພື່ອໃຫ້ຄົນທີ່ກຳລັງທຸກໂສກນັ້ນຟັງ. ເພື່ອຊ່ວຍເຂົາ ຄາຍຄວາມທຸກໂສກລົງ ຫາກຜູ້ຕາຍ ເປັນຄຣິສຕຽນ ກໍຈົ່ງໃຊ້ຂໍ້ພຣະ ຄຳພີກ່ຽວກັບ ການບັນເທົາທຸກ ການເລົ້າໂລມໃຈ ແລະ ການມີຄວາມຫວັງໃຈໃນຊີວິດໃນອານາ ຄົດນັ້ນດ້ວຍ. ຄຳເທສນາ ຄວນເປັນຄຳເທດທີ່ຊີ້ຊ່ອງທາງໃຫ້ເຫັນເຖິງເສັ້ນທາງ ແຫ່ງຄວາມລອດພົ້ນ ເພື່ອເປັນການຊັກຊວນໃຫ້ຜູ້ຟັງຮັບເອົາການໄຖ່ໃຫ້ພົ້ນຈາກ ພຣະເຈົ້າ. ການເທສນາທີ່ບອກວ່າ ທຸກຄົນຈະໄດ້ຂຶ້ນສວັນນັ້ນເປັນ ການບໍ່ສົມຄວນເພາະເປັນການເທສທີ່ຂັດແຍ້ງກັບຄວາມຈິງທີ່ມີຢູ່ໃນພຣະຄຳພີ. ຖ້າສົງສັຍວ່າ ຄົນທີ່ຕາຍໄປນັ້ນຈະໄດ້ຢູ່ກັບພຣະເຈົ້າຫຼືບໍ່ ກໍບໍ່ຄວນອອກຄວາມເຫັນ. ເພາະພຣະເຈົ້າຜູ້ຊົງພິພາກສາ ໂລກຈະເປັນຜູ້ຈັດການທຸກສິ່ງໃນທາງທີ່ຖືກຕ້ອງສເມີ. ອາຈານ ຊຶ່ງເປັນຜູ້ຮັບໃຊ້ ພຣະເຈົ້າ ບໍ່ຄວນຈະກ່າວຄຳພິພາກສາໃດໆ.

## ຄຳອະທິຖານເປີດ:

ພິທີການອະທິຖານສັ້ນໆ ຂໍໃຫ້ຜູ້ທີ່ຮັບຄວາມເສົ້າໂສກນັ້ນ ໄດ້ອ່ານພຣະທັມ ຂອງພຣະເຈົ້າ ເພື່ອຈິດໃຈຂອງເຂົາຈະໄດ້ຮັບຄວາມຊູໃຈ ແລະມີກຳລັງໃນການ ດຳເນີນຊີວິດຕໍ່ໄປ ໃນພາຍໜ້າ.

## ໝາຍເຫດ

ຫາກມີການເບິ່ງສົພເປັນຄັ້ງສຸດທ້າຍ ກໍໃຫ້ເປີດໂລງອອກໃຫ້ຄົນໄດ້ເບິ່ງ. ແຕ່ສິ່ງດັ່ງ ກ່າວນີ້ບໍ່ເປັນທີ່ນິຍົມກັນປານໃດ ແຕ່ຖ້າຍາດພີ່ນ້ອງ ຕ້ອງການ ທາງອາຈານຄວນໃຫ້ ມີການເບິ່ງສົພເປັນຄັ້ງສຸດທ້າຍ ກ່ອນທີ່ຈະເຄື່ອນຍ້າຍສົພຂຶ້ນຣົດ ເພື່ອນຳໄປປ່າຊ້າ.

## ພິທີຝັງ ຫຼືເຜົາສົພທີ່ປ່າຊ້າ

ໃນການເຄື່ອນສົພໄປສູ່ທີ່ຝັງ ຫຼືທີ່ເຜົາ ອາຈານຈະນຳຂະບວນເຄື່ອນສົພໄປຊ້າໆ ເມື່ອເຖິງສະຖານທີ່ຝັງ ຫຼືເຜົາ ອາຈານຈະຢືນຢູ່ຂ້າງໆຫຼູມຝັງສົພ ຫຼືເຕົາເຜົາສົພ. ອາຈານ ຈະລໍຈົນທຸກຄົນມາຢືນອ້ອມຫຼູມສົພ ຫຼືເຕົາເຜົາສົພ ເປັນທີ່ຮຽບຮ້ອຍ. ຈາກນັ້ນ ອາຈານຈະອ່ານຂໍ້ພຣະຄຳພີ ຫຼືຈະນຳຮ້ອງເພັງທີ່ເໝາະສົມກັບງານສົພນັ້ນ ຈັກນຶ່ງເພັງ ແລ້ວຈຶ່ງທຳພິທີຝັງສົພ ຫຼືເຜົາສົພນັ້ນ. ອາຈານ ຈະວາງດອກໄມ້ ແລະໂຮຍດິນໃສ່ໂລງສົພເປັນຄົນທຳອິດ ແລະກ່າວວ່າ "ຊຶ່ງເປັນດິນກໍກັບຄືນສູ່ດິນ ຊຶ່ງເປັນຂີ້ເທົ່າ ກໍກັບຄືນເປັນເທົ່າ ຊຶ່ງເປັນຂີ້ຝຸ່ນດິນ ກໍກັບຄືນເປັນຂີ້ຝຸ່ນດິນ" ແລ້ວແຂກທີ່ມາຮ່ວມ ແລະຍາດພີ່ນ້ອງທຸກຄົນ ກໍວາງດອກໄມ້ ແລະດິນໃສ່ໂລງສົພ.

*ຈາກນັ້ນກໍ ຂໍພຣະພອນປິດພິທີການ.*

## ຄຳເຕືອນສະຕິຜູ້ມາຮ່ວມໃນພິທີ ຢູ່ທີ່ບ່ອນຝັງ ຫຼືບ່ອນເຜົາ

### 1. ກໍຣະນີທີ່ຜູ້ຕາຍເປັນຄຣິສຕຽນ

ໃຫ້ອ່ານ: 1 ເທຊະໂລນິກ 4: 13-18 ຫຼື 1 ໂກຣິນໂທ 15: 51-58

*"ພີ່ນ້ອງ ແລະສະຫາຍທີ່ຮັກແພງ ເຮົາມາຊຸມນຸມກັນໃນທີ່ນີ້ ເພື່ອນຳຮ່າງກາຍຂອງ ພີ່ນ້ອງຂອງພວກເຮົາມາວາງໄວ້ທີ່ນີ້ ສ່ວນວິນຍານນັ້ນໄດ້ໄປຢູ່ກັບພຣະເຈົ້າແລ້ວ ທີ່ຫຼູມຝັງສົພນີ້ ເຮົາໄດ້ນຳເອົາຮ່າງກາຍຂອງທ່ານມາຝາກໄວ້ກັບດິນແຫ່ງໂລກ ເພື່ອເປັນທີ່ຣະລຶກ ເຮົາບໍ່ໄດ້ມອງເບິ່ງສະຖານທີ່ນີ້ດ້ວຍຄວາມໂສກເສົ້າແລະໝົດ ຫວັງເໝືອນກັບຄົນທີ່ບໍ່ມີພຣະເຈົ້າ ເຮົາເຊື່ອວ່າການຈາກໄປຂອງຜູ້ກ່ຽວເປັນການ ໄປເຝົ້າພຣະເຈົ້າຢູ່ຕໍ່ໜ້າພຣະອົງເອງ ດັ່ງນັ້ນ ເຮົາຈະນຳຮ່າງກາຍຂອງຜູ້ກ່ຽວມາຝາກ ໄວ້ທີ່ນີ້. ພວກເຮົາກຳລັງລໍຄອຍດ້ວຍຄວາມຫວັງ ໃນການສະເດັດກັບຄືນມາຂອງພຣະເຢຊູຄຣິສ ເຮົາເຊື່ອວ່າ ຜູ້ທີ່ຕາຍ ໃນພຣະຄຣິສຈະຟື້ນຄືນມາອີກ ແລະເຮົາທີ່ເຊື່ອ ໃນພຣະອົງ ກໍຈະຖືກຮັບຂຶ້ນໄປສູ່ສວັນ ເພື່ອຢູ່ກັບພຣະອົງຕລອດໄປເປັນນິດ. ເຫດສັນນັ້ນ ໃຫ້ພວກເຮົາເລົ້າໂລມໃຈຊຶ່ງກັນແລະກັນດ້ວຍຂໍ້ຄວາມເຫຼົ່ານີ້ ເທີດ"*

### ຫຼືກ່າວດັ່ງນີ້

*"ຂໍເຊີນທ່ານທັງຫຼາຍ ຮັບຟັງພຣະທັມ ໂອວາດຂອງພຣະເຈົ້າທີ່ກ່າວວ່າ "ພຣະເຈົ້າ ໄດ້ຊົງປະທານໃຫ້ ແລະໄດ້ຊົງເອີ້ນກັບຄືນໄປອີກ ຈົ່ງສັຣເສີນພຣະເຈົ້າເທີດ" "ຢ່າໃຫ້ໃຈຂອງທ່ານເປັນທຸກ ແລະຢ່າຢ້ານເລີຍ"*

*"ພີ່ນ້ອງທີ່ເຄົາຣົບແລະຮັກແພງ ເຮົາມາໂຮມກັນໃນທີ່ນີ້ ເພື່ອນຳຮ່າງກາຍຂອງ ບຸກຄົນ ອັນເປັນທີ່ຮັກຂອງເຮົາມາຝາກໄວ້ກັບດິນ ຂໍໃຫ້ພວກເຮົາຣະນຶກເຖິງ ພຣະກະຣຸນາຄຸນ ຂອງພຣະເຈົ້າທີ່ມີຕໍ່ເຮົານັ້ນສເມີ ຈົ່ງໃຫ້ຊີວິດຂອງທ່ານ ດຳຣົງຢູ່ໃນຄວາມເຊື່ອ ຊຶ່ງໝັ້ນຄົງ ຈົ່ງເລົ້າໂລມຊຶ່ງກັນແລະກັນດ້ວຍຄວາມຫວັງແຫ່ງຊີວິດອັນຕລອດໄປເປັນນິດ. ເຮົາຈຶ່ງມອບຮ່າງກາຍ ຄືເຮືອນດິນຂອງຜູ້ກ່ຽວນີ້ ໄວ້ ກັບດິນ ເມື່ອເຮົາມີ ຮ່າງກາຍທີ່ສົມກັບດິນ ເຮົາກໍຈະມີຮ່າງກາຍແຫ່ງສວັນເຊັ່ນກັນ"*

*"ດ້ວຍວ່າພຣະເຈົ້າຜູ້ຊົງຣິດທານຸພາບ ຜູ້ຊົງປະກອບໄປດ້ວຍພຣະກະຣຸນາຄຸນອັນ ໃຫຍ່ຫຼວງ ໄດ້ຊົງຮັບເອົາດວງວິນຍານຂອງ ທ່ານ (ນາງ)..................... ໄປຈາກເຮົາແລ້ວ ເຫດສັນນັ້ນ ພວກເຮົາຈຶ່ງມອບຮ່າງກາຍຂອງເຂົາຝາກໄວ້ກັບດິນ ຊຶ່ງສິ່ງທີ່ມາຈາກດິນ ຈະກັບໄປເປັນດິນ ຊຶ່ງສິ່ງຈະເປັນເທົ່າ ກໍຈະກັບຄືນ ເປັນເທົ່າ ຊຶ່ງສິ່ງທີ່ເປັນແຕ່ຝຸ່ນດິນກໍຈະກັບຄືນເປັນຝຸ່ນດິນ ແຕ່ເຮົາມີຄວາມແນ່ ໃຈ ໃນການຄືນຊີພດ້ວຍຮ່າງກາຍອັນໃໝ່ໃນອານາຄົດ ຊຶ່ງເປັນຮ່າງກາຍສຳຮັບສວັນນິຣັນ ຕາມພຣະປະສົງຂອງພຣະເຈົ້າ*

## 2. ກໍຣະນີຜູ້ຕາຍເປັນເດັກ

ອ່ານພຣະທັມ ເອຊາຢາ 40:11 ຫຼື ມາຣະໂກ 10: 13-16

*"ພຣະເຢຊູຊົງອູ້ມເອົາເດັກນ້ອຍນັ້ນ ໄວ້ໃນພຣະຫັດຂອງພຣະອົງ ແລະຊົງອວຍພຣະ ພອນແກ່ເດັກເຫຼົ່ານັ້ນ" ຂະນະທີ່ພຣະເຢຊູ ຊົງດຳຣົງຊີວິດໃນໂລກນີ້ ພຣະອົງຊົງ ຮັກເດັກນ້ອຍສັນໃດ ໃນເວລາທີ່ເຂົາຕາຍຈາກໂລກນີ້ໄປ ພຣະອົງກໍຈະຊົງຮັກແລະ ເມດຕາເຂົາສັນນັ້ນ. ພຣະອົງຊົງອ້າແຂນແຫ່ງຄວາມຮັກຂອງພຣະອົງຕ້ອນຮັບ ເດັກສເມີ ພຣະອົງຊົງບອກວ່າ "ຈົ່ງປ່ອຍໃຫ້ເດັກນ້ອຍເຫຼົ່ານັ້ນມາຫາເຮົາຢ່າຫ້າມ ເຂົາເລີຍ ການຈາກໄປຂອງເດັກ (ຊື່)........ ທີ່ເຮົາຮັກຢ່າງສຸດຊຶ້ງນີ້ ກໍເປັນ ການເອົາສວັນມາ ສູ່ໃກ້ເຮົາຍິ່ງຂຶ້ນ ເພາະເດັກນ້ອຍນີ້ ໄດ້ໄປຢູ່ກັບພຣະເຢຊູແລ້ວ.*

### ຫຼືກ່າວວ່າ

*ອານາຈັກສວັນ ເປັນເໝືອນອານາຈັກຂອງເດັກໆ ທຸກວັນນີ້ ເຮົາຮູ້ສຶກວ່າ ສວັນເປັນ ເລື້ອງຈິງສຳຣັບເຮົາ ເວລາເຮົາ ອູ້ມເດັກນັ້ນຢູ່ວົງແຂນຂອງເຮົາ ເຮົາຮູ້ສຶກວ່າ ເຮົາ ກຳລັງກອດອູ້ມເອົາຊີວິດນິຣັນດອນໄວ້ ເຮົາມີຄວາມແນ່ໃຈວ່າ ເຮົາສາມາດເຂົ້າສູ່ ແຜ່ນດິນສວັນໄດ້ເໝືອນກັບເດັກນ້ອຍນີ້ ແລະເນື່ອງຈາກເຮົາໄດ້ຮັບການເລົ້າໂລມ ໃຈ ແລະຮູ້ ຄວາມຈິງຂໍ້ນີ້ ເຮົາຈຶ່ງໄດ້ນຳເອົາຮ່າງກາຍຂອງເດັກນີ້ ມາຝາກໄວ້ກັບດິນ ເພື່ອ ເປັນທີ່ພັກຜ່ອນຂອງເຂົາ*

### ຫຼືກ່າວວ່າ

*"ຈົ່ງຍອມໃຫ້ເດັກນ້ອຍນັ້ນມາຫາເຮົາ ຢ່າຫ້າມເຂົາເລີຍ ເພາະວ່າ ຊາວແຜ່ນດິນ ສວັນ ຂອງພຣະເຈົ້າຍ່ອມເປັນ ຄົນຢ່າງນັ້ນ" "ພຣະເຈົ້າຜູ້ຊົງພຣະຊົນຢູ່ເປັນນິດ ເປັນທີ່ຢູ່ ອາສັຍຂອງເຈົ້າ ແລະພຣະຫັດອັນຖາວອນເປັນນິດຂອງ ພຣະອົງກໍຮັບຮອງ ເຈົ້າຢູ່" ເພາະພຣະບິດາຜູ້ຊົງສະຖິດໃນສວັນຊົງພໍພຣະທັຍເຊັ່ນນັ້ນ ແລະພຣະອົງຊົງ ເປັນຜູ້ລ້ຽງ ຂອງບັນດາລູກແກະທັງຫຼາຍ ພຣະອົງຊົງຮັບເອົາຈິດວິນຍານຂອງເດັກນີ້ ເຂົ້າໄວ້ໃນ ສຖານອັນສຸກກະເສີມໃນສວັນ ແລ້ວ ດັ່ງນັ້ນ ພວກເຮົາຈຶ່ງມອບຮ່າງກາຍ ຂອງເດັກນີ້ໄວ້ກັບດິນ. ພຣະເຈົ້າຊົງກ່າວວ່າ "ໃນວັນທີ່ເຮົາຈະເກັບຮອມ ເພັດພອຍ ຂອງເຮົາໄວ້ ເຂົາ ທັງຫຼາຍຈະເປັນຄົນຂອງເຮົາ ແຕ່ນີ້ໄປ ເຂົາຈະບໍ່ຫິວກະຫາຍ ອີກຕໍ່ໄປ ແລະແສງແດດ ແລະຄວາມຮ້ອນຈະບໍ່ສ່ອງຕ້ອງເຂົາອີກຕໍ່ໄປ ເພາະວ່າ ພຣະເຈົ້າຊົງຢູ່ທ່າມກາງພຣະທີ່ ນັ່ງນັ້ນ ແລະຈະຖະນຸຖະໜອມ ເຂົາໄວ້ ແລະຈະຊົງ ນຳເຂົາໄປເຖິງນ້ຳພຸອັນປະກອບດ້ວຍ ຊີວິດ ແລະພຣະເຈົ້າຈະຊົງເຊັດນ້ຳຕາທຸກຢົດຈາກ ຕາຂອງເຂົາ..."*

## 3. ກໍຣະນີຜູ້ຕາຍບໍ່ເປັນຄຣິສຕຽນ

ເພງສັຣເສີນ 46, 90, 91, 103 ໂຣມ 14 ຫຼື ໂຣມ 11:25-36

*"ພີ່ນ້ອງ ເຮົາເຂົ້າມາໃນໂລກນີ້ສັນໃດ ເຮົາກໍຈະຈາກໄປສັນນັ້ນ" ການມີຊີວິດ ໃນໂລກ ກໍເໝືອນຢູ່ທ່າມກາງຄວາມ ຕາຍ ເຮົາຈະໄປຂໍຄວາມຊ່ວຍເຫຼືອຫຼືເຫັນໃຈ ຈາກໃຜໄດ້ ນອກຈາກພຣະເຈົ້າຜູ້ຊົງຮັກເຮົາ ແຕ່ຊົງກຽດຊັງຄວາມຜິດ ບາບຂອງເຮົາ ນີ້ແຫຼະຄືປາຍ ທາງຂອງຊີວິດ. ນະທີ່ຫຼຸມຝັງສົພທີ່ທຸກຄົນຕ້ອງໄປນັ້ນ ນະທີ່ນັ້ນຈະບໍ່ມີການທຳງານ ຈະບໍ່ມີຄວາມຮູ້ສຶກໃດໆ. ມະນຸດຖືກກຳໜົດໃຫ້ຕາຍຄັ້ງດຽວ ຫຼັງຈາກນັ້ນກໍເຂົ້າສູ່ການພິພາກສາ ຂໍໃຫ້ພວກເຮົາມາ ສແວງຫາພຣະເຈົ້າດ້ວຍສຸດ ຈິດສຸດໃຈຂອງເຮົາເທີ້ນ ຂໍໃຫ້ເຮົາຮັບເອົາຄວາມລອດພົ້ນບາບທີ່ພຣະອົງຊົງຢື່ນຍື່ນ ໃຫ້ແກ່ເຮົາເທີດ. ພຣະຄຳພີໄດ້ສອນວ່າ "ພຣະກະຣຸນາຄຸນຂອງພຣະເຈົ້ານັ້ນ ຈະນຳ ເຮົາໃຫ້ກັບໃຈເສັຍໃໝ່" ການກັບໃຈໃໝ່ ຈະນຳເຮົາໃຫ້ໄດ້ຮັບຂອງປະທານອັນ ຍິ່ງໃຫຍ່ຈາກພຣະເຈົ້າ ຄືການໄດ້ຮັບຊີວິດອັນຕລອດໄປເປັນນິດ*

*ໂດຍທາງພຣະ ເຢຊູຄຣິສເຈົ້າ ຂໍພຣະເຈົ້າໄດ້ຊົງເຕືອນໃຫ້ພວກເຮົາຣະນຶກເຖິງຄວາມຮັກຂອງ ພຣະອົງດ້ວຍເຖີດ ບັດນີ້ ພວກເຮົາຈະໄດ້ນຳຮ່າງກາຍຂອງຄົນທີ່ເຮົາຮັກນີ້ ຝາກໄວ້ ທີ່ນີ້ ແລະມອບຈິດ ວິນຍານໄວ້ກັບພຣະເຈົ້າ ເພາະເຮົາຮູ້ວ່າພຣະເຈົ້າຊົງເປັນຜູ້ພິ ພາກສາໂລກ ຈະທຳແຕ່ ສິ່ງທີ່ຖືກຕ້ອງແລະຍຸຕິທັມສເມີ "*

## ຫຼືກ່າວວ່າ

*"ພຣະເຢຊູຊົງກ່າວວ່າ "ເຮົາບອກທ່ານທັງຫຼາຍຕາມຄວາມຈິງວ່າ ຖ້າຜູ້ໃດຟັງຄຳຂອງເຮົາ ແລະເຊື່ອໃນ ພຣະອົງຜູ້ຊົງໃຊ້ເຮົາມາ ຜູ້ນັ້ນກໍມີຊີວິດອັນຕລອດໄປເປັນນິດ ແລະບໍ່ໄດ້ເຂົ້າສູ່ການພິພາກສາ ແຕ່ໄດ້ຜ່ານພົ້ນຈາກຄວາມຕາຍໄປສູ່ຊີວິດ ແລ້ວ" ທ່ານທັງຫຼາຍຢ່າປລາດໃຈໃນຂໍ້ນີ້ເລີຍ ເພາະເວລານັ້ນຈະມາ ຄືເມື່ອຜູ້ທີ່ຢູ່ ໃນຫຼຸມຝັງ ສົພຈະໄດ້ຍິນສຳນຽງຂອງພຣະເຈົ້າ ແລະຈະໄດ້ເປັນຂຶ້ນມາ ຜູ້ທີ່ໄດ້ປະພຶດ ດີຈະເປັນຂຶ້ນ ມາສູ່ຊີວິດ ແຕ່ຜູ້ປະພຶກຊົ່ວຈະເປັນຂຶ້ນມາສູ່ການພິພາກສາ" ດັ່ງນັ້ນ ພຣະເຈົ້າຈຶ່ງພໍ ພຣະທັຍກັບວິນຍານຂອງຜູ້ທີ່ຈາກເຮົາໄປນີ້ ດັ່ງນັ້ນ ເຮົາຈຶ່ງຝາກຮ່າງກາຍຂອງຜູ້ກ່ຽວ ໄວ້ກັບດິນນີ້ ເພື່ອຈະຄອຍການຟື້ນຄືນມາຈາກຄວາມຕາຍ ດັ່ງທີ່ ພຣະອົງຊົງຕັດໄວ້"*

## ຂໍພຣະພອນປິດພິທີການ

ຫຼັງຈາກພິທີຝັງສົພແລ້ວ ຄວນມີການອະທິຖານອີກຄັ້ງນຶ່ງ ພ້ອມກັບການຂໍພຣະ ພອນປິດພິທີການນັ້ນ. ການອະທິຖານຄັ້ງນີ້ ເປັນການທູນຂໍ ໃຫ້ພຣະເຈົ້າປະທານ ຄວາມເລົ້າໂລມໃຈແກ່ຜູ້ທີ່ກຳລັງປະສົບຄວາມທຸກນັ້ນ ແລະອະທິຖານເພື່ອຜູ້ທີ່ຍັງ ມີຊີວິດຢູ່ ໃຫ້ເຂົາຕຽມຕົວໄວ້ສຳຣັບວັນຂ້າງໜ້າ. ຂໍ້ພຣະທັມຕໍ່ໄປນີ້ ເປັນພຽງຕົວຢ່າງຂໍໃຫ້ ອາຈານຊອກເລືອກເອົາຂໍ້ທີ່ເໝາະສົມມາໃຊ້.

*"ຂໍໃຫ້ພຣະຜູ້ເປັນເຈົ້າຊົງອວຍພອນ ແລະເບິ່ງແຍງຮັກສາພວກເຈົ້າ ຂໍໃຫ້ພຣະຜູ້ ເປັນເຈົ້າຊົງເມດຕາປານີ ແລະມີພຣະທັຍອ່ອນໂຍນຕໍ່ພວກເຈົ້າ. ຂໍໃຫ້ພຣະຜູ້ເປັນ ເຈົ້າຊົງ ຫຼຽວແລພວກເຈົ້າ ດ້ວຍຄວາມເມດຕາປານີ ແລະຊົງໂຜດໃຫ້ພວກເຈົ້າມີ ຄວາມສງົບສຸກ" ຈົດບັນຊີ 6:24-26*

*ຂໍໃຫ້ອົງພຣະເຢຊູຄຣິສເຈົ້າຂອງເຮົາທັງຫຼາຍ ແລະພຣະບິດາເຈົ້າຂອງພວກເຮົາ ຜູ້ຊົງຮັກເຮົາທັງຫຼາຍ ແລະຊົງໂຜດປະທານໃຫ້ພວກເຮົາມີຄວາມຊູໃຈເປັນນິດ ແລະຄວາມຫວັງໃຈອັນດີໂດຍພຣະຄຸນນັ້ນ, ຊົງຊູໃຈ ແລະຕັ້ງເຈົ້າໄວ້ໃຫ້ໝັ້ນຄົງ ໃນການງານແລະໃນວາຈາອັນດີທຸກຢ່າງ" 1 ເທຊະໂລນິກ 2: 16-17*

*"ແລ້ວໃຫ້ສັນຕິສຸກອັນເກີດມາແຕ່ພຣະເຈົ້າຊຶ່ງເກີນຄວາມເຂົ້າໃຈ ຈະເຝົ້າຮັກສາຈິດໃຈແລະຄວາມຄິດຂອງເຈົ້າທັງຫຼາຍໄວ້ໃນພຣະເຢຊູຄຣິສ" ຟີລິປອຍ 4:7*

*"ຂໍພຣະເຈົ້າຜູ້ຊົງໂຜດສັນຕິສຸກ, ຜູ້ໄດ້ຊົງນຳພຣະເຢຊູເຈົ້າຂອງເຮົາທັງຫຼາຍໃຫ້ຄືນ ມາຈາກຄວາມຕາຍ, ຄືຊົງເປັນຜູ້ລ້ຽງແກະອົງໃຫຍ່ ດ້ວຍພຣະໂລຫິດທີ່ກ່ຽວກັບຄຳ ສັນຍາອັນຕັ້ງຢູ່ເປັນນິດນັ້ນ, ຈົ່ງກະທຳໃຫ້ທ່ານທັງຫຼາຍເປັນຄົນຄົບຖ້ວນໃນການ ດີທຸກຢ່າງ ເພື່ອຈະໄດ້ປະຕິບັດຕາມພຣະທັຍພຣະອົງ ແລະຊົງທຳງານພາຍໃນທ່ານທັງຫຼາຍຕາມຊອບໃນສາຍພຣະເນດພຣະອົງ ໂດຍທາງພຣະເຢຊູຄຣິສ ສະງ່າຣາສີ ຈົ່ງມີແດ່ພຣະຄຣິສສືບໆໄປເປັນນິດ ອາແມນ" ເຮັບເຣີ 13:20-21*

### ໝາຍເຫດ

ມີຫຼາຍຄັ້ງ ໃນການທຳພິທີສົພ ມັກຈະປາກົດວ່າ ຍາດພີ່ນ້ອງຂອງຜູ້ຕາຍເປັນທຸກ ໃຈ ແລະໂສກເສົ້າຢ່າງໜັກໜ່ວງ. ຄືບາງຄົນອາດຈະຮູ້ສຶກວ່າ ອ້າງຫວ້າງ ຫວ້າເຫວ່ ດັ່ງນັ້ນ ອາຈານ, ຫຼັງຈາກເສັດພິທີແລ້ວ, ຄວນເດີນຍ່າງຄຽງໄກ້ ແລ້ວໃຫ້ການປອບໃຈເປັນພິເສດ. ອາຈານ ຄວນຢູ່ສົນທະນາປາສັຍນານຕາມສົມຄວນ ແລະຖ້າຄິດວ່າ ມີສິ່ງໃດທີ່ເປັນປະໂຫຍດແກ່ເຈົ້າທຸກ ຫຼືອາດຊ່ວຍເຂົາໃຫ້ຄາຍ ຄວາມໂສກເສົ້າ ອາຈານຄວນລົງມືຊ່ວຍເຫຼືອເຂົາທັນທີ. ໂອກາດແບບນີ້ ເປັນໂອກາດທີ່ດີທີ່ສຸດ ໃນການປູກຣະດົມຊີວິດຝ່າຍຈິດວິນຍານຂອງເຂົາ. ເຖິງແມ່ນພິທີຈະສິ້ນສຸດລົງແລ້ວກໍຕາມ ອາຈານຄວນຈະສືບຕໍ່ໃຫ້ການຢ້ຽມຢາມດູແລຄວາມສຸກທຸກ ແລະໃຫ້ການເລົ້າໂລມໃຈຜູ້ທີ່ໄດ້ຮັບຄວາມທຸກໂສກ ພ້ອມທັງຄອບຄົວຂອງຜູ້ກ່ຽວດ້ວຍ. ພ້ອມດຽວກັນ ອາຈານ ຄວນສເນີໃຫ້ຄະນະກຳມະການຄຣິສຕະຈັກ, ຄະນະເຖົ້າແກ່, ຄະນະປຶກສາ ໃຫ້ພ້ອມພາກັນມາໃຫ້ຄວາມອົບອຸ່ນ ແລະອະທິຖານເພື່ອຄອບຄົວນັ້ນ ໃນໄລຍະອັນສົມຄວນ. ພ້ອມດຽວກັນ ກໍຄວນໃຫ້ ສະມາຊິກຄຣິສຕະຈັກ ອະທິຖານເພື່ອ ໃນເວລານະມັສການ ແລະນອກນະມັສການ ພ້ອມທັງ ຊຸກຍູ້ໃຫ້ມີການ ສືບຕໍ່ໃຫ້ຄວາມອົບອຸ່ນ ແລະເລົ້າໂລມໃຈຕໍ່ຄອບຄົວນັ້ນ ເທົ່າທີ່ຈະທຳໄດ້ ໃນເວລາອັນສົມຄວນ.

## ພິທີສົມ ບັບຕິສມາ

### ຄຳນຳ

ພຣະເຢຊູຊົງຕັດສັ່ງເຮົາທັງຫຼາຍທຳການປະຕິບັດສົມຢູ່ສອງຢ່າງ ຄືສົມບັບຕິສມາ ແລະສົມຣະລຶກ (ສົມມະຫາສະໜິດ) ຄຣິສຕຽນທົ່ວໂລກພາກັນຢຶ້ງຢືນຢ່າງແນ່ນອນ ວ່າການຮັບສົມບັບຕິສມານັ້ນ ເປັນປະສົບການແຫ່ງວິນຍານຍຈິດທີ່ສຳຄັນອັນນຶ່ງໃນ ຊີວິດ ຂອງຄຣິສຕຽນ ດັ່ງນັ້ນ ອາຈານ ຈຶ່ງທຳທຳພິທີສົມບັບຕິສມານີ້ ໃຫ້ເປັນໄປ ແລະສອດຄ່ອງສິ່ງທີ່ບັນຍັດໄວ້ໃນພຣະຄຳພີ ແລະຄວນສະໜັບສະໜູນຊຸກຍູ້ໃຫ້ຜູ້ ທີ່ເຊື່ອໃນພຣະເຈົ້ານັ້ນປະຕິບັດຕາມ. ອາຈານຄວນເຮັດດັ່ງນີ້:

1. ອາຈານຕ້ອງຮູ້ຢ່າງລັກແນ່ວ່າ ຜູ້ຈະຮັບສົມບັບຕິສມານັ້ນ ໄດ້ບັງເກີດໃໝ່ແລ້ວ ຢ່າງແທ້ຈິງ (ອີງຕາມຄວາມຮັບຮູ້ ແລະເຂົ້າໃຈຂອງອາຈານ) ມີຫຼາຍຄັ້ງທີ່ຄົນມາ ຂໍຮັບສົມບັບຕິສມາ ກໍເພາະເຫັນຄົນອື່ນຮັບ ກໍເລີຍຕ້ອງການຢາກຮັບນຳຫຼືທຳໄປ ໂດຍທີ່ ຕົນເອງ ບໍ່ໄດ້ມີການຖິ້ມໃຈເກົ່າເອົາໃຈໃໝ່ຫຍັງເລີຍ.

2. ອາຈານຕ້ອງອະທິບາຍໃຫ້ທຸກຄົນເຂົ້າໃຈເຖິງຄວາມໝາຍຂອງການຮັບສົມ ບັບຕິສມານັ້ນຢ່າງ ແຈ່ມແຈ້ງ. ການອະທິບາຍນີ້ ບໍ່ຈຳເປັນຕ້ອງຍືດຍາວ ແຕ່ສັ້ນໆ ແລະເຂົ້າໃຈງ່າຍ.

3. ຄວນແນະນຳໃຫ້ມີການນຸ່ງເສື້ອຜ້າທີ່ເໝາະສົມ ແລະຄວນມີເຄື່ອງສຳຮັບ ປ່ຽນອີກ ຫາກພິທີສົມນັ້ນເປັນແບບພິທີຈຸ່ມ. ແຕ່ຖ້າເປັນພິທີ ແບບສົມພົມ ອາຈານຄວນຕຽມ ແພທີ່ຈະຊັບນ້ຳທີ່ພົມໃສ່ຫົວຂອງຜູ້ຮັບສົມ.

ຄວນຮັກສາພິທີສິນນັ້ນ ໃຫ້ມີຄວາມສງ່າຣາສີ ແລະໜ້າເລື້ອມໃສ ແລະຄວນ ອະທິບາຍ ໃຫ້ຜູ້ຮັບສິນຮູ້ວ່າ ການຮັບສິນແບບພິທີຈຸ່ມນັ້ນ ຜູ້ກ່ຽວຕ້ອງຫັນໜ້າ ໄປສູ່ທີ່ປະຊຸມໃນເວລາລົງໄປທີ່ນ້ຳນັ້ນ. ເມື່ອທຳພິທີ ອາຈານຕ້ອງໃຊ້ຜ້າເຊັດໜ້າ ນ້ອຍປິດປາກ ແລະດັງຂອງຜູ້ຮັບສິນ ແລ້ວໃຊ້ມືເບື້ອງນຶ່ງ ປະຄອງທີ່ໄຫຼ່ເພື່ອຈະທຳ ການຊ່ວຍຈຸ່ມ ຫົວຂອງຜູ້ຮັບສິນນັ້ນລົງນ້ຳ ແລະຊ່ວຍພະຍຸງຂຶ້ນມາໄດ້ຢ່າງສະດວກ. ສ່ວນການທຳ ພິທີແບບສິນພົມ ຜູ້ຮັບສິນຄວນຄຸເຂົ່າລົງ ປິ່ນໜ້າໄປສູ່ທີ່ປະຊຸມ. ອາຈານ ຄວນມີຜ້າ ເຊັດໜ້າທີ່ສະອາດກຽມພ້ອມ ເພື່ອຫຼັງຈາກເຊັດ ພິທີພົມນ້ຳໃສ່ ຫົວຂອງຜູ້ ຮັບສິນ ອາຈານຈະໄດ້ຊັບນ້ຳນັ້ນໃຫ້ແຫ້ງໂດຍທັນທີ. ທີ່ປະຊຸມຄວນຢູ່ ໃນຄວາມສງົບໃນ ເວລາຮັບສິນ ຈົນກວ່າການທຳພິທີນັ້ນຈະສຳເຣັດລົງ.

## ພິທີສິນບັບຕິສມາ

ຜູ້ທຳພິທີ ຄວນໄຕ່ຕອງ ແລະກະກຽມການໄວ້ຢ່າງດີຮອບຄອບ ບໍ່ວ່າການທຳພິທີນັ້ນ ຈະທຳຮ່ວມກັນກັບເວລາມີການນະມັສການ ຫຼືຈະແຍກທຳໃນເວລາຕ່າງຫາກກໍຕາມ.

ຂໍ້ແນະນຳໃນການທຳພິທີ:

1. ເລືອກເພງຮ້ອງໃຫ້ເໝາະສົມກັບພິທີສິນນັ້ນ
2. ເລືອກອ່ານ ຫຼືທ່ອງຈຳເອົາຂໍ້ພຣະທັມດັ່ງຕໍ່ໄປນີ້:
   - ມັດທາຍ 3: 13-17 ກິຈການ 8: 35-30
   - ມັດທາຍ 28: 16-20 ໂຣມ 6: 1-5
   - ມາຣະໂກ 16: 14-17 ໂກໂລຊາຍ 2: 12-14
3. ອະທິບາຍຄວາມໝາຍຂອງພິທີສິນບັບຕິສມານັ້ນຢ່າງສັ້ນໆ
4. ອາຈານ ແລະຜູ້ຮັບສິນຈະລົງໄປໃນນ້ຳຫາກທຳແບບສິນຈຸ່ມ
   ຖ້າທຳແບບສິນພົມ ໃຫ້ຜູ້ຮັບສິນຂຸເຂົ່າລົງປິ່ນໜ້າສູ່ທີ່ປະຊຸມ

ຈາກນັ້ນ ອາຈານຈະຖາມຜູ້ຮັບສິນບັບຕິສມາແຕ່ລະຄົນ ຫຼືອາດຖາມພ້ອມກັນເພື່ອ ໃຫ້ ຜູ້ຮັບສິນຕອບພ້ອມກັນ. ສຸດແລ້ວແຕ່ຄວາມເໝາະສົມ. ອາຈານຈະຖາມດັ່ງນີ້:

ອາຈານ: *"ທ່ານຍອມຮັບວ່າທ່ານເປັນຄົນຜິດບາບ ແລະມີແຕ່ພຣະເຢຊູຄຣິສອົງດຽວເທົ່ານັ້ນທີ່ ສາມາດ ຊ່ວຍທ່ານໃຫ້ລອດພົ້ນຈາກບາບກັມຂອງທ່ານໄດ້ ທ່ານແນ່ໃຈໃນຂໍ້ນີ້ຫຼື?"*

ຜູ້ຮັບສິນ: *"ຂ້າພະເຈົ້າແນ່ໃຈ"*

ອາຈານ: *"ທ່ານຍິນດີຮັບເອົາພຣະເຢຊູຄຣິສ ເປັນພຣະຜູ້ເປັນເຈົ້າ ແລະເປັນພຣະຜູ້ຊ່ວຍໃຫ້ລອດຂອງທ່ານ ແລະຈະນະມັສການພຣະອົງຜູ້ດຽວ, ທ່ານຍິນດີໃນຂໍ້ນີ້ຫຼື?"*

ຜູ້ຮັບສິນ: *"ຂ້າພະເຈົ້າຍິນດີ"*

ອາຈານ: *"ທ່ານມີຄວາມຈິງໃຈທີ່ຈະລະຖິ້ມຊີວິດເກົ່າຂອງທ່ານ ແລະຕິດຕາມພຣະເຢຊູຄຣິສ ແລະຮັບເອົາ ຊີວິດໃໝ່ຈາກພຣະອົງ ທ່ານຈິງໃຈຫຼື?"*

ຜູ້ັບສິນ: *"ຂ້າພະເຈົ້າຈິງໃຈ"*

ອາຈານ: *ທ່ານຍິນດີ ຈະໃຊ້ຊີວິດເດີນຕາມພຣະຄຳຂອງພຣະອົງ, ຮັກພຣະອົງ, ແລະນະມັສການ ໃນຕລອດຊົ່ວ ຊີວິດຂອງທ່ານ, ທ່ານຍິນດີຫຼື?"*

ຜູ້ຮັບສິນ *"ຂ້າພະເຈົ້າຍິນດີ"*

ອາຈານ: *"ທ່ານຍິນດີທີ່ຈະຮັບໃຊ້ ນິອຣະບັດພຣະອົງ ແລະເປັນແບບຢ່າງໃນການນະ ມັສການພຣະອົງ ໃນທຸກທີ່ທຸກ ບ່ອນທີ່ທ່ານອາສັຍຢູ່, ທ່ານຍິນດີຫຼື ?"*

ຜູ້ຮັບສິນ: *"ຂ້າພະເຈົ້າຍິນດີ"*

ກ່ອນທຳພິທີ ອາຈານ ຄວນກ່າວຢ້ຳ ແລະປະກາດການຢືນຢັນຂອງຜູ້ຮັບສິນໂດຍກ່າວ ດັ່ງນີ້: *"ທ່ານ, ຫຼື ນາງ......... ທ່ານໄດ້ຮັບດ້ວຍປາກຂອງທ່ານເອງ ວ່າທ່ານມີ ຄວາມເຊື່ອໃນອົງພຣະເຢຊູຄຣິສ ແລະຍິນດີໃຫ້ພຣະອົງເປັນພຣະເຈົ້າຂອງທ່ານ ເປັນພຣະຜູ້ຊ່ວຍໃຫ້ລອດຂອງທ່ານ ແລະທ່ານຈະຍອມເຊື່ອຟັງພຣະອົງ ຈະຕິດຕາມ ພຣະອົງໄປຕລອດຊົ່ວຊີວິດຂອງທ່ານ. ດັ່ງນັ້ນ ຂ້າພະເຈົ້າຈຶ່ງໃຫ້ບັບຕິສມາທ່ານ ໃນພຣະນາມແຫ່ງ ພຣະບິດາ ພຣະບຸດ ແລະພຣະວິນຍານບໍຣິສຸດ... ອາແມນ"*

ພ້ອມດຽວກັນນັ້ນ ອາຈານ ກໍຈຸ່ມຫົວຂອງຜູ້ຮັບສິນລົງໃນນ້ຳ ແລະຊ່ວຍພະຍຸງຂຶ້ນມາ ແຕ່ຖ້າທຳແບບພິທີຈຸ່ມ ກໍໃຫ້ເອົາມືກອບນ້ຳຕາມສົມຄວນ ປົກໃສ່ຫົວຂອງຜູ້ຮັບສິນ ແລ້ວໃຊ້ແພເຊັດໜ້າສະອາດ ຊັບນ້ຳນັ້ນ.

5. ຮ້ອງເພັງຈັກຂໍ້ນຶ່ງສັ້ນໆ ທີ່ມີຄວາມໝາຍ ຫຼືອາດທຳການຮ້ອງສຳຮັບແຕ່ລະຄົນກໍໄດ້.

*ຫາກມີການມອບໃບປະກາດຮັບສິນ ກໍຄວນມອບໃນເວລນັ້ນເລີຍ ຫຼືອາດສົ່ງໃຫ້ນຳຫຼັງ*

# ພິທີສິນມະຫາສະໜິດ

## ວ່າດ້ວຍ ພິທີສິນມະຫາສະໜິດ ແລະການຈັດຕຽມ:

ທີ່ປະຊຸມຄວນມີການຕຽມພ້ອມໃນການປະກອບສ່ວນໃນພິທີສິນມະຫາສະໜິດ. ຫາກພິທີນີ້ບໍ່ໄດ້ທຳເລື້ອຍໆ ໃນວັນສັກສິດຂອງພຣະເຈົ້າ, ການປະກາດໃຫ້ມະຫາຊົນ ຮັບຮູ້ ຄວນມີກ່ອນນຶ່ງອາທິດ. ໃນເວລາສເລີມສລອງ ພິທີສິນນີ້, ຄວນມີການ ຈັດຕຽມໂຕະກ່ອນການນະມັສການຈະເລີ່ມຕົ້ນຫຼືເຮັດໃນເວລາມີການຖວາຍຊັພ

## ວ່າດ້ວຍ ເຂົ້າຈີ່ທີ່ໃຊ້ໃນພິທີ:

ເຂົ້າຈີ່ ທີ່ນິຍົມໃຊ້ໃນກຸ່ມຊົນນັ້ນໆ ຄວນນຳມາໃຊ້ໂດຍບຸກຄົນຜູ້ທີ່ນຳໃນ ພິທີການນັ້ນ. ການໃຊ້ເຂົ້າຈີ່ກ້ອນດຽວ ໝາຍເຖິງການເປັນອັນນຶ່ງອັນດຽວກັນ ໃນພຣະກາຍຂອງພຣະຄຣິສ. ການຮັບເຂົ້າຈີ່ ທີ່ປະຊຸມອາດບິເອົາຈາກເຂົ້າຈີ່ ກ້ອນດຽວກັນ ຫຼືອາດຈັດຕຽມ ເປັນຊິ້ນເລັກຊິ້ນນ້ອຍກ່ອນເພື່ອການສະດວກໃນການ ແຈກຢາຍ.

## ວ່າດ້ວຍ ຈອກ:

ຈອກ ແລະຂັນ (ໄຫ)ຄວນຈັດຫາມາໃຫ້ຜູ້ນຳພິທີ ເພື່ອການສະເໜີ ໃນເວລາ ຮັບສິນ. ຈອກທີ່ໃຊ້ກັນທົ່ວໄປ ສະແດງເຖິງລັກສະນະທັມມະຊາດຂອງພິທີສິນ ແລະມີຜົນ ສະທ້ອນເຖິງການສອດຄ້ອງກັນກັບພຣະຄຳພີໃໝ່ທີ່ກ່າວ ເຖິງການໃຊ້ຈອກດຽວກັນ. ການຖອກນ້ຳອະງຸ່ນ ໃສ່ຈອກ ປຽບເໝືອນເລືອດຂອງພຣະຄຣິສ ທີ່ຫຼັ່ງໄຫຼເພື່ອມະນຸດ. ການແຈກຢາຍນີ້ອາດອີງໃສ່ຄວາມສະດວກຂອງຄຣິສຕະຈັກທ້ອງຖິ່ນອາດໃຊ້ ຈອກດຽວຫຼືຫຼາຍຈອກກໍໄດ້. ຄະນະປົກຄອງ ຈະເປັນຜູ້ຊີ້ຂາດວ່າ ຈະໃຊ້ນ້ຳອະງຸ່ນ ແບບໃດ. ໃນການຕັດສິນນີ້ ຄະນະປົກຄອງຄວນອີງໃສ່ພຣະຄຳພີ ເປັນຫຼັກ, ອີງໃສ່ ປະວັດສາດຂອງຄຣິສຕະຈັກ, ການນິຍົມໃຊ້ໂດຍທົ່ວໆໄປ, ປະເພນີວັທນະທັມຂອງ ທ້ອງຖິ່ນ,

ແລະຄວນຣະວັງກ່ຽວກັບສຸຂພາບ ແລະສະຕິຮັບຜິດຊອບຂອງສະມາຊິກ ໃນຄຣິສຕະຈັກ. ເວລາໃດກໍຕາມ ຫາກມີການໃຊ້ເຫຼົ້າອະງຸ່ນໃນພິທີສິນ ນ້ຳອະງຸ່ນ ທຳມະດາ ກໍຄວນນຳມາໃຊ້ເຊັ່ນກັນ ເພື່ອພວກຄົນ ທີ່ຕ້ອງການ.

## ວ່າດ້ວຍ ການເຊີນຊວນ:

ອາຈານ ຫຼືຜູ້ທີ່ນຳໃນພິທີ ຄວນເຊີນຊວນໃຫ້ມະຫາຊົນເຂົ້າຮ່ວມໂຕະຂອງພຣະເຈົ້າ ໂດຍການໃຊ້ຂໍ້ພຣະຄຳທີ່ເໝາະສົມ. ພຣະທັມທີ່ໃຊ້ໃນການສອນ (1 ໂກຣິນໂທ 11:23-26 ຫຼືພຣະຄຳທີ່ເວົ້າແບບດຽວກັນ) ບໍ່ຄວນນຳໃຊ້ໃນເວລາຫັກເຂົ້າຈີ່ ຫຼືເອົາມາໃຊ້ໃນເວລາອະທິຖານຂອບພຣະຄຸນ, ພຣະຄຳດັ່ງກ່າວ ຄວນນຳມາໃຊ້ ໃນເວລາມີການເຊີນຊວນນັ້ນ.

## ວ່າດ້ວຍ ການອະທິຖານ:

ຜູ້ນຳໃນພິທີ ຕ້ອງເປັນຜູ້ນຳພາຝູງຊົນໃນການອະທິຖານເຊັ່ນກັນ. ການອະທິຖານ ຄວນປະກອບດ້ວຍ:

- ຂອບພຣະຄຸນພຣະເຈົ້າຜູ້ຊົງສ້າງ, ຜູ້ຊົງຈັດຕຽມ, ຜູ້ໃຫ້ສັນຍາ ແລະຜູ້ໃຫ້ພຣະພອນ ຊຶ່ງຄວນທຳດ້ວຍການຍ້ອງຍໍສັຣເສີນ
- ຈາຣຶກເຖິງກິຈການທີ່ພຣະອົງໄດ້ຊົງກະທຳໃນການໄຖ່ມະນຸດໃຫ້ພົ້ນໂດຍທາງພຣະເຢຊູຄຣິສ, ການກຳເນີດຂອງພຣະອົງ, ຊີວິດຂອງພຣະອົງ, ການວາຍພຣະຊົນ, ຄືນພຣະຊົນ, ແລະພຣະສັນຍາທີ່ພຣະອົງຈະກັບມາ ແລະການ ຊົງຕັ້ງໃຫ້ມີພິທີສິນນີ້.
- ເອີ້ນຮຽກຫາພຣະວິນຍານບໍຣິສຸດ ເພື່ອຈະນຳພາມະນຸດ ໃຫ້ມີສ່ວນໃນການຄືນພຣະຊົນຂອງພຣະຄຣິສ ເພື່ອພວກເຂົາ ຈະໄດ້ຮັບການຊົງລ້ຽງເກື້ອ, ມີສ່ວນໃນຄອບຄົວແຫ່ງໄພ່ພົນຂອງພຣະອົງ ແລະການຄືນພຣະຊົນ ຂອງພຣະອົງ, ແລະຖືກສົ່ງອອກໄປ ໃຫ້ເປັນສາວົກຜູ້ຮັບໃຊ້ຂອງພຣະອົງ ປະຕິບັດພາຣະກິດຂອງພຣະອົງ ສັຣເສີນພຣະເຈົ້າຕຣີເອກະນຸພາບ
- ໃຊ້ການອະທິຖານທີ່ພຣະເຢຊູຊົງສອນ.

## ວ່າດ້ວຍ ການຫັກເຂົ້າຈີ່:

ຜູ້ນຳ ຈະຈັບເຂົ້າຈີ່ມາ ແລ້ວກໍຫັກເຂົ້າຈີ່ນັ້ນຢູ່ຕໍ່ໜ້າຝູງຊົນ. ຫາກພຣະຄຳທີ່ ຈະໃຊ້ໃນພິທີ ບໍ່ໄດ້ໃຊ້ໃນເວລາມີການເຊີນຊວນ ຫຼືໃນເວລາອະທິຖານ ກໍຄວນນຳມາໃຊ້ໃນເວລານີ້ 1 ໂກຣິນໂທ 11:23,24.

## ວ່າດ້ວຍ ການສເນີຈອກ:

ຫຼັງຈາກຖອກນ້ຳອະງຸ່ນໃສ່ຈອກແລ້ວ, ຜູ້ນຳຕ້ອງຍົກສເນີແກ່ທີ່ປະຊຸມໃຫ້ ທຸກຄົນໄດ້ເຫັນ. ຫາກຂໍ້ພຣະຄຳທີ່ເວົ້າກ່ຽວກັບ ພິທີນີ້ ບໍ່ໄດ້ເວົ້າກ່ອນ ກໍຄວນນຳ ມາເວົ້າໃນເວລານີ້ 1ໂກຣິນໂທ 11:25-26

## ວ່າດ້ວຍການແຈກຢາຍເຂົ້າຈີ່ ແລະຈອກ:

ການແຈກຢາຍນີ້ ຄວນເຮັດໄປຕາມການເໝາະສົມຂອງໂອກາດແລະສະຖານທີ່ ໃນເວລາປະຊຸມ. ການກະທຳອາດເຮັດໄດ້ດັ່ງນີ້:

- ມາຫາຊົນ ອາດຍ່າງມາຫາໂຕະເພື່ອຮັບເຂົ້າຈີ່ ແລະນ້ຳອະງຸ່ນ ທີ່ໂຕະຊຶ່ງຜູ້ ແຈກຢາຍຈະຢືນລໍຖ້າ

ໃຊ້ຢູ່ທີ່ໂຕະນັ້ນເລີຍ.

- ເຂົ້າຈີ່ ອາດຫັກຢູ່ທີ່ໂຕະນັ້ນ ແລ້ວຈຶ່ງປັນໃສ່ມືຂອງຜູ້ທີ່ມາຮັບຢູ່ໂຕະນັ້ນ, ມະຫາຊົນອາດບິດເອົາເຂົ້າຈີ່ທີ່ຫັກ ແລ້ວນັ້ນ ດ້ວຍຕົນເອງ ຫຼືຈັບເຂົ້າຈີ່ ແບບອື່ນໆ ທີ່ຖືກຈັດຫາມາຮັບໃຊ້ໃນພິທີ.
- ຕ້ອງໃຊ້ຈອກອັນນຶ່ງຕໍ່ກັບທຸກຄົນທີ່ເຂົ້າຮ່ວມພິທີ, ອາດມີຈອກຫົກເຈັດໜ່ວຍ ແລ້ວແບ່ງປັນກັນ, ຫຼືໃຫ້ຈອກ ແຕ່ລະບຸກຄົນ. ຫາກໃຊ້ຈອກດຽວ,ແທນທີ່ຈະ ດື່ມຈາກຈອກນັ້ນ, ຜູ້ມາຮ່ວມຄວນໃຊ້ວິທີ ເອົາເຂົ້າຈີ່ ຈຸ່ມລົງນໍ້າໃນຈອກນັ້ນ.
- ເຂົ້າຈີ່ ແລະຈອກ ຄວນຖືກນໍາມາຮັບໃຊ້ ໂດຍເຈົ້າໜ້າທີ່ຄຣິສຕະຈັກທີ່ຖືກ ສະຖາປະນາແລ້ວ, ຫຼືຈາກສະມາຊິກຂອງຄຣິສຕະຈັກອື່ນໆທີ່ຖືກເຊີນມາໂດຍ ຄະນະປົກຄອງ ຫຼືຖືກອະນຸຍາດຈາກອົງການປົກຄອງ.

## ວ່າດ້ວຍ ການຮັບທານ

ໃນເວລາທີ່ເຂົ້າຈີ່ ແລະຈອກຖືກນໍາມາແຈກຢາຍແລ້ວ,

- ຝູງຊົນອາດຮ້ອງເພງສັຣເສີນ, ເພງນະມັສການ, ເພງແຫ່ງພຣະວິນຍານ, ຫຼືເພງອື່ນໆທີ່ເໝາະສົມ.
- ຄະນະນັກຮ້ອງອາດຮ້ອງເພງອ້ອນວອນ ຫຼືການເສບດົນຕຣີອື່ນໆ ທີ່ເໝາະສົມ,
- ເຄື່ອງດົນຕຣີທີ່ເໝາະສົມອາດຖືກນໍາມາໃຊ້ໃນບາງໂອກາດ.
- ຂໍ້ພຣະຄໍາພີທີ່ເໝາະສົມ ອາດນໍາມາອ່ານ ຫຼື
- ຝູງຊົນອາດໃຊ້ວິທີ ອະທິຖານແບບງຽບໆ.
- ອາຈານຈະກ່າວເຊີນຊວນຮັບທານເຂົ້າຈີ່ພ້ອມກັນ / ດື່ມນໍ້າອະງຸ່ນພ້ອມກັນ (ຖ້າໃຊ້ຈອກ)

## ວ່າດ້ວຍ ການໃຫ້ພອນ ຫຼັງຮັບທານ

ຫຼັງຈາກທຸກສິ່ງໄດ້ຖືກແຈກຢາຍ ແລະໄດ້ຮັບທານແລ້ວ ພ້ອມທັງສິ່ງທີ່ເຫຼືອກໍ ນໍາມາໄວ້ຍັງໂຕະພິທີແລ້ວ, ຜູ້ນໍາຈະທໍາການ ນໍາພາມະຫາຊົນ ອະທິຖານ, ຂອບພຣະຄຸນພຣະເຈົ້າ ສໍາຮັບການປະທານພຣະເຢຊູຄຣິສ, ຂໍພຣະຄຸນ ແລະສັນຕິສຸກ ຂອງພຣະເຈົ້າ ຢູ່ກັບຜູ້ທີ່ທໍາການຖວາຍ ໃນເວລາຮັບທານນັ້ນ, ແລະອະທິຖານ ສໍາຮັບການຈະຊົງມາປາກົດຂອງຣາຊອານາຈັກຂອງພຣະເຈົ້າ. ທີ່ປະຊຸມອາດຮ້ອງ ບົດເພງສັຣເສີນ, ເພງນະມັສການ, ເພງແຫ່ງພຣະວິນຍານ, ຫຼືເພງຟື້ນຟູຈິດວິນຍານ

# ພິທີຖວາຍເດັກ.

ພິທີການຖວາຍເດັກນີ້ບໍ່ໄດ້ມີບັນຍັດໄວ້ໃນພຣະຄໍາພີແບບສະເພາະເຈາະຈົງ. ແຕ່ກໍມີຄົນໄດ້ກະທໍາໂດຍອີງໃສ່ເລື້ອງທີ່ວ່າ ພຣະເຈົ້າຊົງອ້າງສິດທິທີ່ວ່າ ບຸດຊາຍ ກົກຂອງອິສຣາເອນຕ້ອງຖວາຍເປັນສົມບັດຂອງພຣະອົງ ແລະຕໍ່ມາກໍໄດ້ມີຜູ້ ຖວາຍບຸດຂອງຕົນເອງແກ່ພຣະເຈົ້າ ເຊັ່ນ ນາງຮັນນາ ຖວາຍຊາມູເອນເມື່ອຍັງເປັນ ເດັກຢູ່ ໂຢເຊບແລະນາງມາຣີອາ ໄດ້ຖວາຍບຸດເຢຊູແດ່ພຣະເຈົ້າຢູ່ໃນພຣະວິຫານ ເມື່ອພຣະອົງຍັງເປັນເດັກຢູ່. ເລື້ອງລາວແບບນີ້ ໄດ້ເປັນທີ່ນໍາມາເປັນຕົວຢ່າງ ແລະນໍາໃຊ້ກັນໃນຄຣິສຕະຈັກ.

**ໃຜແດ່ທີ່ຄວນຖວາຍເດັກຂອງຕົນແກ່ພຣະເຈົ້າ ?** ຖ້າຫາກພໍ່ແລະແມ່ເປັນຄຣິສຕຽນ ກໍຈະເປັນການດີທີ່ສຸດ ແຕ່ຖ້າພໍ່ບໍ່ເປັນ ແຕ່ແມ່ ເປັນຄຣິສຕຽນ ແມ່ນັ້ນຈະນຳເດັກມາ ຖວາຍກໍໄດ້.

ເມື່ອອາຈານຊາບວ່າ ພໍ່ແມ່ມີເຈດຕະນາທີ່ຈະທຳການຖວາຍເດັກ ອາຈານຄວນໄປຢ້ຽມຢາມພໍ່ແມ່ຂອງເດັກນັ້ນ ທີ່ບ້ານ ແລະໂອ້ລົມກ່ຽວກັບການທຳພິທີການນັ້ນ ອະທິບາຍໃຫ້ຊາບເຖິງຄວາມສຳຄັນຂອງພິທີ. ພໍ່ແມ່ນັ້ນ ບໍ່ຄວນ ຈະນຳເດັກມາ ຖວາຍ ຢ່າງບໍ່ເຂົ້າໃຈ ໂດຍຄິດວ່າ ເປັນທຳນຽມທີ່ຕ້ອງປະຕິບັດ. ອາຈານຄວນ ອະທິບາຍ ເຖິງຄວາມ ໝາຍແລະຄວາມສຳຄັນ ແລະອົງປະກອບໃນການທຳພິທີນັ້ນ ແລະອະທິບາຍ ເຖິງເວລາທີ່ຈະທຳພິທີນັ້ນ. ອາຈານຕ້ອງຮູ້ຈັກຊື່ຂອງເດັກນັ້ນ ແລະໃຊ້ຕົວອັກສອນ ຂຽນຊື່ເດັກນັ້ນໃຫ້ຖືກ ທັງຊື່ແລະນາມສະກຸນ. ຊື່ພໍ່ແມ່ຂອງ ເດັກ ແລະວັນເດືອນປີເກີດ ເພາະລາຍການເຫຼົ່ານີ້ຈະຕ້ອງຖືກບັນທຶກໄວ້ໃນປຶ້ມ ບັນທຶກລາຍງານຂອງຄຣິສຕະຈັກ ແລະເປັນການສົມຄວນທີ່ຕ້ອງມອບໃບປະກາດ ການມອບເດັກນີ້ ໃຫ້ພໍ່ແມ່ເພື່ອ ເກັບໄວ້ເປັນຫຼັກຖານ.

## ການທຳພິທີຖວາຍເດັກ:

ທີ່ປະຊຸມ: ຮ້ອງເພງຮ້ອງບົດເພງທີ່ເໝາະສົມກັບເດັກນັ້ນ. ໃຫ້ພໍ່ ຫຼືແມ່ ອູ້ມເດັກ (ໃນກໍຣະນີທີ່ເດັກນັ້ນຍັງນ້ອຍ) ຢືນຢູ່ຕໍ່ໜ້າອາຈານ.

ອາຈານ: ອ່ານຂໍ້ພຣະຄຳພີ

*"ອິສຣາເອນເອີຍ ຈົ່ງຟັງເຖີ້ນ ພຣະຜູ້ເປັນເຈົ້າອົງດຽວເທົ່ານັ້ນທີ່ເປັນພຣະເຈົ້າ ຂອງເຮົາ ຈົ່ງຮັກພຣະເຈົ້າຂອງເຈົ້າ ຢ່າງສຸດຈິດສຸດໃຈ ແລະສຸດສະຕິກຳລັງຂອງ ທ່ານ ຢ່າລືມສິ່ງທີ່ຂ້າພະເຈົ້າໄດ້ສັ່ງພວກທ່ານ ໃນມື້ນີ້ ໃຫ້ບອກສອນ ລູກຫຼານດ້ວຍ ເມື່ອພວກທ່ານຢູ່ໃນເຮືອນ ຫຼືໜີອອກໄປກໍດີ ເມື່ອທຳງານຫຼືພັກຢູ່ກໍດີ ໃຫ້ທ່ອງຈຳ ຄຳສັ່ງນີ້ ໃຫ້ຕິດ ມັດໄວ້ໃນແຂນ ແລະເທິງໜ້າຜາກ ພ້ອມທັງຂຽນມັນໄວ້ຕາມປະຕູ ເຮືອນຂອງທ່ານດ້ວຍ ເພື່ອເປັນສິ່ງເຕືອນໃຈ" ພະບັນຍັດສອງ 6: 4-9*

ຫຼືອ່ານພຣະທັມ:

*"ແຕ່ຄວາມຮັກພຣະຜູ້ເປັນເຈົ້າ ຊົງມີແກ່ຜູ້ທີ່ຖວາຍກຽດແດ່ພຣະອົງຕລອດໄປ ແລະ ຄວາມຊອບທັມຂອງພຣະອົງຊົງ ໝັ້ນຄົງຢູ່ທຸກຊົ່ວຊາດອາຍຸຄົນ ແລະແກ່ຜູ້ປະຕິບັດ ຕາມ ຂໍ້ຄຳສັນຍາຂອງພຣະອົງ ຄືຜູ້ທີ່ເຊື່ອຟັງຢ່າງຈິງໃຈຕໍ່ຂໍ້ຄຳສັ່ງ ຂອງພຣະອົງ."*

ຫຼືອ່ານພຣະທັມ:

*"ພຣະເຢຊູຊົງເອີ້ນເອົາເດັກຄົນໜຶ່ງມາຢືນຖ້າມກາງເຂົາ ແລ້ວຊົງກ່າວວ່າ "ເຮົາບອກ ພວກທ່ານຕາມຄວາມຈິງວ່າ ຖ້າພວກທ່ານບໍ່ກັບໃຈ ແລະກາຍເປັນເໝືອນເດັກ ນ້ອຍ ທ່ານຈະເຂົ້າໃນຣາຊແຜ່ນດິນສວັນບໍ່ໄດ້ຈັກເທື່ອເຫດສັນນັ້ນ ຖ້າຜູ້ໃດຖ່ອມ ຕົວລົງ ເໝືອນເດັກນ້ອຍຄົນນີ້ ຜູ້ນັ້ນແຫຼະເປັນໃຫຍ່ໃນຣາຊອານາຈັກສວັນ. ຖ້າຜູ້ໃດຈະຮັບ ເດັກນ້ອຍຜູ້ໜຶ່ງຢ່າງນີ້ໄວ້ໃນນາມຂອງເຮົາ ຜູ້ນັ້ນກໍໄດ້ຮັບເຮົາ. "ຖ້າຜູ້ໃດເຮັດໃຫ້ຄົນ ໜຶ່ງ ໃນໝູ່ເດັກນ້ອຍ ເຫຼົ່ານີ້ຫຼົງຜິດ ຖ້າເອົາຫີນໂມ້ກ້ອນໃຫຍ່ ຜູກຄໍຜູ້ນັ້ນ ຈົມລົງ ໃນທະເລເລິກກໍດີກວ່າ" ມັດທາຍ 18: 2-7*

ອາຈານອະທິຖານຂອບພຣະຄຸນພຣະເຈົ້າ ແລະຂໍພຣະເຈົ້າອວຍພອນແກ່ເດັກນັ້ນ ແລະຄອບຄົວ.
ແລ້ວກ່າວຄຳໂອວາດດັ່ງນີ້:

*ທ່ານຜູ້ເປັນບິດາມານດາຂອງເດັກ. ໃນການທີ່ທ່ານນຳເອົາລູກຂອງທ່ານມາ ຖວາຍແດ່ ພຣະເຈົ້າໃນວັນນີ້ ນັບວ່າທ່ານໄດ້ສ້າງສຳພັນອັນສັກສິດຣະຫວ່າງຕົວທ່ານ ກັບພຣະເຈົ້າ ຜູ້ຊົງຮັກສາຄຳສັນຍາຂອງພຣະອົງ. ນັບເປັນວລາຫຼາຍຍຸກຫຼາຍສະໄໝທີ່ພໍ່ແມ່ ທີ່ນັບຖືແລະຢໍາເກງພຣະເຈົ້າໄດ້ນຳເອົາລູກຂອງຕົນມາຖວາຍ ແດ່ພຣະອົງ ທັ້ງນີ້ກໍນັບວ່າທ່ານໄດ້ທຳການສືບທອດນໍຣະດົກອັນດີງາມນີ້ແລ້ວ ຊຶ່ງເປັນໜ້າສັຣເສີນ. ເພາະທ່ານເຊື່ອວ່າເດັກນີ້ ເປັນຂອງພຣະຣາຊທານມາແຕ່ພຣະເຈົ້າ ແລະທ່ານຈະຕ້ອງ ຮັບຜິດຊອບຕໍ່ຊີວິດຂອງເດັກ ທ່ານມີຄວາມປະສົງທີ່ ຈະຖວາຍເດັກນີ້ແດ່ພຣະເຈົ້າ ເພື່ອໃຫ້ເຂົາບົວຣະບັດພຣະອົງ ແລະຈະອະທິຖານເພື່ອ ເຂົາ ທັ້ງສັນຍາວ່າຈະສັ່ງສອນເຂົາ ໃຫ້ຮູ້ຈັກພຣະທັມໂອວາດຂອງພຣະເຢຊູຄຣິສ ແລະສອນເຂົາໃຫ້ຮູ້ອ່ານພຣະຄຳພີ ສອນໃຫ້ຮູ້ຈັກອະທິຖານສ່ວນຕົວ ເພື່ອນຳໄປ ສູ່ຊີວິດອັນບໍຣິສຸດ ແລະຈະພາເຂົາໄປ ນະມັສການພຣະເຈົ້າທີ່ໂບດ ຫຼືວິຫານຂອງ ພຣະອົງຢ່າງສມ່ຳສເມີ ແລະຈະພະຍາຍາມເຮັດໃຫ້ເຂົາຮູ້ຈັກວ່າ ພຣະເຢຊູຄຣິສ ເປັນພຣະຜູ້ຊ່ວຍໃຫ້ລອດ ແລະເປັນພຣະເຈົ້າຂອງເຂົາ ທ່ານສັນຍາດັ່ງນີ້ຫຼື ?*

ພໍ່ແມ່ຂອງເດັກຈະຕ້ອງຮັບຄຳວ່າ: *"ຂ້າພະເຈົ້າຂໍສັນຍາດັ່ງນັ້ນ"*

## ການທຳພິທີການຖວາຍເດັກ

ອາຈານອູ້ມເດັກໄວ້ ປິ່ນໜ້າຫາທີ່ປະຊຸມ ແລ້ວກ່າວວ່າ:

*"ພີ່ນ້ອງ ວັນນີ້ ພໍ່ແມ່ຂອງເດັກນີ້ ໄດ້ຍິນດີຖວາຍເດັກນີ້ໃຫ້ກັບພຣະເຈົ້າແລ້ວ ແຕ່ຖານະທີ່ພວກທ່ານເປັນຄຣິສຕຽນເປັນຄອບຄົວທີ່ໃຫຍ່ ພວກທ່ານຍິນດີຮັບ ເດັກນີ້ ແລະສັນຍາວ່າ ຈະຊ່ວຍເຫຼືອພໍ່ແມ່ຂອງເດັກນີ້ ໃຫ້ການເບິ່ງແຍງບົວຣະບັດ ໃຫ້ເດັກນີ້ເປັນຄຣິສຕຽນທີ່ດີໃນອານາຄົດ ພວກທ່ານຍິນດີຫຼື ?*

ທີ່ປະຊຸມກ່າວວ່າ: *"ຍິນດີ"*

ຈາກນັ້ນອາຈານເອົາມືນຶ່ງຈຸ່ມນ້ຳ (ບໍ່ຈຳເປັນຕ້ອງໃຫ້ປຽກຈົນເກີນໄປ) ແລ້ວວາງ ລົງເທິງຫົວຂອງເດັກພ້ອມກ່າວວ່າ "ທ່ານ:......... (ຊື່ເດັກ)ບັດນີ້ ຂ້າພະເຈົ້າຂໍຖວາຍຕົວທ່ານ (ໃຫ້ບັບຕິສມາທ່ານ)ຕໍ່ພຣະເຈົ້າ ໃນພຣະນາມແຫ່ງພຣະບິດາ ພຣະບຸດ ແລະພຣະວິນຍານບໍຣິສຸດ. ອາແມນ.

### ອາຈານນຳອະທິຖານ:

*"ຂໍໃຫ້ພຣະເຈົ້າ ຊົງປົກປ້ອງຄຸ້ມຄອງ ພິທັກຮັກສາ ໃຫ້ພົ້ນຈາກມານຮ້າຍຕ່າງໆ ຂໍອະທິຖານໃຫ້ເດັກນີ້ ໄດ້ຮູ້ຈັກພຣະເຢຊູຄຣິສຢ່າງແທ້ຈິງເມື່ອເຕີບໂຕຂຶ້ນ"*

ອາຈານ ມອບເດັກນັ້ນ ໃຫ້ພໍ່ແມ່ຄືນ. ຂໍພຣະພອນ ແລ້ວໃຫ້ພໍ່ແມ່ໄປນັ່ງທີ່ເດີມ.

# ການຮັບສະມາຊິກໃໝ່

ອາຈານ ຄວນອະທິບາຍເຖິງຄວາມສຳຄັນຂອງການເປັນສະມາຊິກໃໝ່ ເພາະບາງຄົນ ອາດເຂົ້າໃຈຜິດໄປວ່າ ການເປັນສະມາຊິກຂອງຄຣິສຕະຈັກ ເປັນສິ່ງຈຳເປັນເພື່ອຄວາມ ລອດພົ້ນຈາກບາບ. ຖ້າບໍ່ເປັນສະມາຊິກແລ້ວ ອາດບໍ່ສາມາດພົ້ນບາບໄດ້. ໃນທຳ ນອງດຽວກັນ ບາງຄົນກໍອາດເຂົ້າໃຈຜິດ ໂດຍການທຳເມີນເສີຍຕໍ່ການເປັນສະມາຊິກ ບໍ່ໃຫ້ການ

ຮ່ວມແຮງຮ່ວມໃຈກັນໃນ ການທຳງານຮັບໃຊ້ພຣະເຈົ້າ. ຄວາມສຳຄັນໃນການເປັນສະມາຊິກ ກໍເພື່ອເຮົາຈະ ມີສ່ວນໃນການປະກອບວຽກງານຮັບໃຊ້ພຣະເຈົ້າ ຢ່າງຈິງຈັງ ແລະເຕັມເມັດເຕັມ ໜ່ວຍ. ແລະການເປັນສະມາຊິກນັ້ນຕ້ອງເປັນ ຄຣິສຕຽນທີ່ເຊື່ອຟັງຄຳສັ່ງສອນ ຂອງອົງພຣະເຢຊູຄຣິສ.

ຊາວເພຣັສໄບທີຣຽນ ມີການຮັບສະມາຊິກຢູ່ສາມແບບ. ຄືຮັບເອົາໂດຍການໃຫ້ສິນ ບັບຕິສມາຫາກຜູ້ກ່ຽວຍັງບໍ່ໄດ້ຮັບສິນມາກ່ອນ. ຮັບເອົາໂດຍການ ໂອນມາຈາກໂບດອື່ນ ໂດຍຜູ້ກ່ຽວມີໜັງສືຍົກຍ້າຍມາຢ່າງຖືກຕ້ອງ. ຮັບເອົາໂດຍການປະກາດຢືນຢັນຄືນເຖິງຄວາມເຊື່ອຂອງຕົນເອງ ໃນກໍຣະນີທີ່ຜູ້ກ່ຽວຮັບສິນບັບຕິສມາ ມາກ່ອນແລ້ວ ແຕ່ບໍ່ສາມາດເອົາໜັງສືໂອນຍ້າຍມາຈາກຄຣິສຕະຈັກທີ່ຕົນເອງຍ້າຍມານັ້ນໄດ້. ການຮັບເອົາສະມາຊິກໃໝ່ຂອງ ຄະນະເພຣັສໄບທີຣຽນ ແມ່ນໜ້າທີ່ຂອງ ຄະນະປົກຄອງທີ່ທຳການຮັບເອົາ ຫຼັງຈາກນັ້ນຈະປະກາດເປັນທາງການໂດຍການປະກາດຮັບເອົາຊ້ອງໜ້າສະມາຊິກທັງມວນ.

ກ່ອນທີ່ຈະຮັບເປັນສະມາຊິກ ອາຈານໄດ້ມີການໂອ້ລົມເຖິງຄວາມສຳຄັນໃນການ ເປັນສະມາຊິກ ແລະບຸກຄົນດັ່ງກ່າວໄດ້ທຳການຕັດສິນໃຈເປັນຄັ້ງສຸດທ້າຍ. ຈາກນັ້ນ ອາຈານ ຈະນຳສເນີຜູ້ກ່ຽວຕໍ່ຄະນະປົກຄອງ ເວລາມີກອງປະຊຸມເພື່ອທຳການຮັບເອົາ ຜູ້ກ່ຽວຢ່າງເປັນທາງການ.

## ຄຳຖາມທີ່ນຳມາໃຊ້ໃນເວລາປະຊຸມຄະນະປົກຄອງເພື່ອຮັບສະມາຊິກໃໝ່:

1/ ອາຈານ: *ດ້ວຍຄວາມເຊື່ອໝັ້ນໃນພຣະກະຣຸນາຄຸນຂອງພຣະເຢຊູຄຣິສເຈົ້າ, ທ່ານຍິນດີ ທີ່ຈະຫັນຫຼັງໃຫ້ກັບຄວາມຜິດບາບ ແລະປະຕິເສດຕໍ່ອຳນາດສິ່ງຊົ່ວຮ້າຍຂອງໂລກ ແລະຈັກກະວານນີ້. ທ່ານຍິນດີຫຼື?*

ສະມາຊິກໃໝ່ຕອບວ່າ: *ຍິນດີ*

2 / ອາຈານ: *ທ່ານຍິນດີທີ່ຈະຮັບເອົາພຣະເຢຊູຄຣິສເປັນພຣະຜູ້ຊ່ວຍໃຫ້ລອດຂອງທ່ານ ເຊື່ອໝັ້ນໃນຄວາມຮັກແລະການຊົງໄຖ່ຂອງພຣະອົງ. ທ່ານຍິນດີຫຼື ?*

ສະມາຊິກໃໝ່ຕອບວ່າ: *ຍິນດີ*

3 / ອາຈານ: *ທ່ານຍິນດີປະຕິຍານວ່າຈະເປັນຄຣິສຕຽນທີ່ຊື່ສັດ, ຂັບຕາມພຣະທັມ ແລະສະແດງ ຄວາມຮັກຂອງພຣະອົງຕໍ່ໂລກ, ນະມັສການພຣະອົງໃນທຸກບ່ອນທີ່ທ່ານອາສັຍຢູ່ ແລະຍິນດີຖວາຍສິ່ງທີ່ທ່ານມີຕໍ່ພຣະອົງເພື່ອພຣະອົງຈະຊົງອວຍພຣະພອນແດ່ທ່ານ ແລະເພື່ອວຽກງານຂອງພຣະອົງຈະຂະຫຍາຍກວ້າງອອກໄປ. ທ່ານຍິນດີຫຼື ?*

ສະມາຊິກໃໝ່ຕອບວ່າ: *ຍິນດີ*

ຫຼັງຈາກນັ້ນ ກໍມີການລົງຄະແນນສຽງຮັບເອົາ ແລະກຳໜົດວັນ ເວລາທີ່ຈະທຳພິທີຮັບເອົາ ຊຶ່ງຄວນເປັນວັນອາທິດໃນເວລາ ນະມັສການພຣະເຈົ້າ. ການຮັບເອົາຕໍ່ໜ້າຄຣິສຕະຈັກເປັນສິ່ງຈຳເປັນເພື່ອການປະກາດອີກຄັ້ງນຶ່ງ.

## ການຕ້ອນຮັບຕໍ່ໜ້າທີ່ປະຊຸມເວລານະມັສການ

ອາຈານ ນຳພຣະຄຳທີ່ວ່າ *"ເຫດດັ່ງນັ້ນ ທຸກຄົນທີ່ຮັບເຮົາຕໍ່ໜ້າມະນຸດ ເຮົາກໍຈະຮັບ ຜູ້ນັ້ນຕໍ່ໜ້າພຣະບິດາຂອງເຮົາຜູ້ຊົງສະຖິດໃສວັນເຊັ່ນກັນ" ມັດທາຍ 10: 32*

ອາຈານປະກາດພິທີການ ແລະເຊີນສມຽນຂອງຄຣິສຕະຈັກ ຂຶ້ນມາສເນີ ອ່ານຊື່ຂອງຜູ້ທີ່ ຈະເປັນສະມາຊິກໃໝ່ຕໍ່ສະມາຊິກທັງມວນ. ຈາກນັ້ນ ອາຈານເອີ້ຍຖາມສະມາຊິກໃນທີ່ປະຊຸມວ່າ:

*"ພີ່ນ້ອງທີ່ຮັກແພງ ພວກທ່ານຍິນດີຮັບເອົາ ທ່ານ:............ ເປັນສະມາຊິກ ຂອງຄຣິສຕະຈັກ ແລະຍິນດີທີ່ຈະ ໃຫ້ການຊ່ວຍເຫຼືອ ເປັນແບບຢ່າງ ຊຸກຍູ້ ຊີວິດ ໃນ ການຮັບ ໃຊ້ພຣະເຈົ້າ ພວກທ່ານຍິນດີຫຼື ?*

ສະມາຊິກທັງໝົດຕອບວ່າ: *ຍິນດີ*

ຄຳຖາມ ສາມຂໍ້ ຂ້າງເທິງຈະຕ້ອງຖືກນຳມາອ່ານ ແລະສະມາຊິກໃໝ່ກໍຕ້ອງຕອບ ຢ່າງດຽວກັນ.

ຈາກນັ້ນ ອາຈານກໍອະທິຖານຂໍພຣະພອນ ແລະມອບໝາຍ.

ວັນເດືອນປີ ແຫ່ງພິທີການນີ້ ຕ້ອງຖືກບັນທຶກໄວ້ໃນປຶ້ມຣາຍງານຂອງຄຣິສຕະຈັກ.

## ພິທີການແຕ່ງຕັ້ງເຈົ້າໜ້າທີ່ຄຣິສຕະຈັກ (ຜູ້ນຳ)

ວຽກງານທຸກຢ່າງທີ່ທຳໃນພຣະນາມຂອງອົງພຣະເຢຊູຄຣິສເຈົ້າ ຍ່ອມເປັນງານທີ່ ສຳຄັນ. ເປັນງານສ່ວນຮວມຂອງຄຣິສຕະຈັກ ເພາະເຮົາທັງຫຼາຍເປັນຜູ້ທຳງານ ຂອງພຣະອົງ ດັ່ງນັ້ນ ວຽກງານທຸກຢ່າງຂອງຄຣິສຕະຈັກ ຈຶ່ງບໍ່ແມ່ນເປັນຂອງອາຈານ ແຕ່ພຽງຜູ້ດຽວ ແຕ່ຫາກເປັນຂອງສະມາຊິກທຸກຄົນ. ການກະກຽມຄວນໃຫ້ເໝາະສົມ ແລະເປັນໜ້ານັບຖື. ອາຈານຄວນກະກຽມບົດເທສ ໃຫ້ຖືກຕ້ອງ ແລະແທດເໝາະກັບ ພິທີການນັ້ນ ຊຶ່ງຈະທຳໃຫ້ຄຣິສຕະຈັກຮູ້ສຶກໃນຄວາມສັກສິດຂອງງານນັ້ນ.

## ຣະບຽບໃນການແຕ່ງຕັ້ງ

ຂໍ້ພຣະທັມທີ່ຄວນນຳມາອ່ານຄື: ກິຈການ 6:1-6 ຫຼື 1 ຕີໂມທຽວ 3:1-7 ຫຼື 1 ຕີໂມທຽວ 3: 8 -17 ຫຼື 1 ຕີໂມທຽວ 5:1,2, 17 -22 ຫຼື ຕີໂຕ 1:5 -7.

ອາຈານເຊີນສມຽນອອກມາ ອ່ານຊື່ຂອງຜູ້ທີ່ຈະຖືກແຕ່ງຕັ້ງໃຫ້ຂຶ້ນມາຢືນຢູ່ຕໍ່ໜ້າ ທີ່ປະຊຸມ. ອາຈານຈະກ່າວຕໍ່ພວກເຂົາວ່າ *"ພີ່ນ້ອງທີ່ຮັກແພງແລະນັບຖື ໂດຍມະຕິ ຂອງສະມາຊິກ ໃນຄຣິສຕະຈັກແຫ່ງນີ້ ຂ້າພະເຈົ້າຈຶ່ງຢາກຂໍຢ້ຳເຕືອນເຖິງຄວາມ ສັກສິດ ແລະຄວາມສຳຄັນຂອງພິທີການນີ້. ທ່ານທີ່ຖືກເລືອກມາຮັບເອົາໜ້າທີ່ນີ້ ທ່ານຈະຕ້ອງຣະມັດຣະວັງ ແລະສັງວອນເຖິງຕົວເອງສເມີວ່າ ທ່ານຈະຕ້ອງເປັນ ແບບຢ່າງທີ່ດີແກ່ ສະມາຊິກທັງຫຼາຍ ໃນຊີວິດປະຈຳວັນຂອງທ່ານ ຈົ່ງເອົາໃຈໃສ່ ຝູງແກະຂອງພຣະເຈົ້າ ຊຶ່ງພຣະວິນຍານບໍຣິສຸດໄດ້ຊົງມອບ ໃຫ້ທ່ານເປັນຜູ້ດູແລ. ຈົ່ງທຳງານນີ້ເພື່ອອົງພຣະ ເຢຊູຄຣິສເຈົ້າ ການຍອມຮັບໜ້າທີ່ນີ້ ມັນໄດ້ໝາຍເຖິງ ການຍອມອຸທິດຕົວຂອງທ່ານທຳງານທີ່ພຣະເຈົ້າໄດ້ຊົງມອບໝາຍ ໃຫ້. ສະນັ້ນ ຈົ່ງຊື່ສັດຕໍ່ໜ້າທີ່ຂອງທ່ານ. ບັນດາທ່ານທີ່ຮັກ ບັດນີ້ ທ່ານຈະຍອມຮັບໜ້າທີ່ອັນ ສັກສິດ ແລະສຳຄັນນີ້ ທີ່ພຣະເຈົ້າໄດ້ຊົງມອບໝາຍ ໃຫ້ແກ່ທ່ານ ໃນພຣະນາມຂອງ ອົງພຣະເຢຊູຄຣິສເຈົ້າ ແລະສັນຍາຕໍ່ພຣະເຈົ້າ ແລະຕໍ່ຄຣິສຕະຈັກວ່າ ທ່ານຍິນດີ ແລະເຕັມ ໃຈຮັບໜ້າທີ່ນີ້ ດ້ວຍສຸດຈິດສຸດ ໃຈ ແລະສຸດຄວາມສາມາດຂອງທ່ານ. ທ່ານຍິນດີຫຼື ?*

ຜູ້ຖືແຕ່ງຕັ້ງ: *ຂ້າພະເຈົ້າຍິນດີ*

ອາຈານ: *ທ່ານຍິນດີທີ່ຈະປະພຶດຕົນເປັນຕົວຢ່າງທີ່ດີແກ່ສະມາຊິກຂອງຄຣິສຕະຈັກ ນີ້ ແລະສັນຍາວ່າ ຈະຍຶດໝັ້ນ ໃນຄວາມເຊື່ອ ດ້ວຍມະໂນທັມສຳນຶກທີ່ສຸດຈະຣິດ ໃຈ ຂອງທ່ານ. ທ່ານຍິນດີດັ່ງນີ້ຫຼື ?*

ອາຈານກ່າວຕໍ່ສະມາຊິກທີ່ປະຊຸມ: *ທ່ານສມາຊິກທັງຫຼາຍ ທ່ານຍອມຮັບເອົາ ເຈົ້າໜ້າທີ່ ເຫຼົ່ານີ້ ແລະຍິນດີຮ່ວມ ໃຈ ໃນຄຳສັນຍາວ່າຈະ ໃຫ້ກຽດແກ່ພວກເຂົາ ຈະໜູນ ໃຈເຂົາ ແລະຈະຮ່ວມມືກັບເຂົາ ຈະອະທິຖານເພື່ອເຂົາ ໂດຍເດີນຕາມກົດຣະບຽບຂອງ ຄຣິສຕະຈັກ ແລະພຣະທັມຂອງພຣະເຈົ້າ. ພວກທ່ານຍິນດີຫຼື ?*

ທີ່ປະຊຸມ ອາດພ້ອມກັນຢືນຂຶ້ນ ຫຼືກ່າວວ່າ : *ຍິນດີ*

ອາຈານ ເຊີນໃຫ້ເຈົ້າໜ້າທີ່ໃໝ່ ທີ່ຈະຕ້ອງຖືກສະຖາປະນານັ້ນຊຸເຄົ່າລົງ ແຕ່ພວກທີ່ ຖືກສະຖາປະນາມາແລ້ວນັ້ນ ບໍ່ຈຳເປັນຕ້ອງຊຸເຄົ່າ. ຈາກນັ້ນ ອາຈານເຊີນ ຊວນໃຫ້ ຜູ້ທີ່ຖືກສະຖາປະນາແລ້ວ ພ້ອມກັນອອກມາວາງມືອະທິຖານ ເພື່ອເຈົ້າໜ້າ ທີ່ໃໝ່ນີ້. ຈາກນັ້ນກໍສະແດງຄວາມຍິນດີ ແລ້ວເຊີນເຂົ້ານັ່ງບ່ອນເດີມ.

(ສ່ວນມາກແລ້ວ ຄຳຖາມສາມຂໍ້ທີ່ໃຊ້ຖາມໃນການຮັບສະມາຊິກໃໝ່ນັ້ນຈະຖືກ ນຳມາຖາມອີກເທື່ອນຶ່ງ ກ່ອນທີ່ຈະຖາມທີ່ປະຊຸມ)

## ການສະຖາປະນາອາຈານ:

ວຽກງານທີ່ສຳຄັນນີ້ ສ່ວນມາກແມ່ນຈະມອບໃຫ້ແກ່ປະທານພາກ ຫຼືຜູ້ຕາງໜ້າພາກ ເປັນຜູ້ດຳເນີນງານ ໂດຍການຮ່ວມໄມ້ຮ່ວມມືຈາກຄຣິສຕະຈັກທີ່ຮັບເອົາອາຈານນັ້ນ ພ້ອມນັ້ນ ອາຈານຈາກ ຄຣິສຕະຈັກອື່ນໆ ກໍຄວນຖືກເຊື້ອເຊີນມາຮ່ວມກິຈການອັນ ສັກສິດອັນນີ້. ຄວນມີການກະຕຽມ ລ່ວງໜ້າໃນການທີ່ຈະໃຫ້ ອາຈານຂອງຄຣິສ ຕະຈັກໃດນຶ່ງ ມີສ່ວນປະກອບໃນພິທີນັ້ນ. ການທຳພິທີນີ້ ຄວນທຳໂດຍໄວຫຼັງຈາກທີ່ ອາຈານຄົນນັ້ນໄດ້ຜ່ານການເຫັນດີ ແລະຖືກຮັບເອົາ ຈາກຄຣິສຕະຈັກ ແລະຈາກທາງພາກ ເພັຣສໄບເທີຣີແລ້ວ.

## ພິທີການຄວນທຳໄດ້ດັ່ງນີ້:

ການທຳພິທີສຖາປະນາອາຈານ:

- ⋆ ຖວາຍບົດເພັງທີ່ເໝາະສົມ
- ⋆ ອະທິຖານເປີດກອງປະຊຸມ
- ⋆ ອ່ານພຣະຄຳພີທີ່ເໝາະສົມ
- ⋆ ຖວາຍເພັງພິເສດ ຖ້າຫາກມີ
- ⋆ ຜູ້ປົກຄອງກ່າວຕ້ອນຮັບແຂກທີ່ມາຮ່ວມ
- ⋆ ຜູ້ຕາງໜ້າດຳເນີນພິທີນັ້ນຈະເຊີນອາຈານມາຢືນຢູ່ຕໍ່ໜ້າສະມາຊິກ ແລ້ວກ່າວຄຳ ຖາມດັ່ງຕໍ່ໄປນີ້:

*1. ທ່ານເຊື່ອວ່າພຣະເຢຊູຄຣິສເປັນພຣະຜູ້ຊ່ວຍຂອງທ່ານ ຍອມຮັບຮູ້ວ່າພຣະອົງ ຊຶ່ງເປັນພຣະຜູ້ເປັນເຈົ້າ ເປັນສີສະຂອງຄຣິສຕະຈັກ ແລະໂດຍທາງພຣະອົງນັ້ນ ທ່ານຍອມເຊື່ອວ່າມີ ພຣະເຈົ້າແຕ່ອົງດຽວ ຊຶ່ງປະກອບດ້ວຍ ສາມພຣະພາກຄື: ພຣະບິດາ ພຣະບຸດ ແລະພຣະວິນຍານບໍຣິສຸດ ທ່ານເຊື່ອດັ່ງນີ້ຫຼື?*

*2. ທ່ານຍອມຮັບວ່າ ພຣະຄຳພີເດີມ ແລະພຣະຄຳພີໃໝ່, ໄດ້ຖືການຊົງນຳຂອງພຣະວິນຍານບໍຣິສຸດໃຫ້ເປັນພຣະຄຳ ອັນນຶ່ງອັນດຽວກັນ ແລະມີອຳນາດໃນການເປັນພະຍານກ່ຽວກັບພຣະເຢຊູຄຣິສຕໍ່ບັນດາຄຣິສຕະຈັກຕ່າງໆ ແລະ ໃນໂລກ ພ້ອມທັງເປັນພຣະຄຳ ຂອງພຣະເຈົ້າທີ່ຂຽນມາເຖິງທ່ານ, ທ່ານເຊື່ອດັ່ງນີ້ຫຼື?*

*3. ທ່ານມີຄວາມຈິງໃຈໃນການຍອມຮັບເອົາຣະບຽບການແຫ່ງການປະຕິຮູບ ຊຶ່ງສະແດງ ອອກໃນປຶ້ມຫຼັກແຫ່ງຄວາມ ເຊື່ອຂອງຄຣິສຕະຈັກ ວ່າເປັນສິ່ງທ່ຽງແທ້ ແລະສາມາດ ຖືເປັນສິ່ງເອື່ອຍອີງໄດ້ເຖິງພຣະຄຳພີ ທີ່ໄດ້ນຳພາໃຫ້ເຮົາມີ ຄວາມເຊື່ອແລະມີການປະຕິບັດ, ແລະທ່ານຍິນດີຈະຮັບການສຶກສາ ແລະເຮັດຕາມຄຳແນະນຳຈາກປຶ້ມຫຼັກແຫ່ງຄວາມ ເຊື່ອນີ້ ໃນເວລາທີ່ທ່ານນຳຄົນໃຫ້ຮູ້ຈັກພຣະເຈົ້າ, ທ່ານຈິງໃຈຢ່າງນັ້ນຫຼື?*

*4. ທ່າຍຍິນດີຈະເປັນອາຈານທີ່ເຊື່ອຟັງພຣະເຢຊູຄຣິສ ພາຍໃຕ້ການນຳພາຂອງ ພຣະຄຳພີ ແລະໂດຍການນຳຂອງປຶ້ມ ຫຼັກແຫ່ງຄວາມເຊື່ອຂອງພວກເຮົາ, ທ່ານຍິນດີຫຼື?*

5. *ທ່ານຍິນດີຈະຢູ່ໃຕ້ການປົກຄອງຂອງກົດຣະບຽບຂອງຄຣິສຕະຈັກ, ຍິນດີເຮັດ ຕາມກົດວິນັຍຂອງຄຣິສຕະຈັກ, ຍິນດີຈະເປັນເພື່ອນນິດກັບບັນດາອາຈານດ້ວຍກັນ ຮ່ວມໄມ້ຮ່ວມມືກັບພວກເຂົາເຫຼົ່ານັ້ນ ດ້ວຍອີງຕາມພຣະມະຫາປັນຊາ ແຫ່ງພຣະຄຳຂອງພຣະເຈົ້າແລະດ້ວຍການຊົງນຳຂອງ ພຣະວິນຍານບໍຣິສຸດ. ທ່ານຍິນດີດັ່ງນັ້ນຫຼື ?*

໖. *ໃນຊີວິດຂອງທ່ານ ທ່ານຍິນດີຈະຊອກສແວງແລະຕິດຕາມພຣະເຢຊູຄຣິສເຈົ້າ, ຮັກເພື່ອນບ້ານ, ແລະຍິນດີທຳງານ ໃນການນຳໂລກໃຫ້ຄືນດີກັນກັບພຣະເຈົ້າ, ທ່ານຍິນດີດັ່ງນັ້ນຫຼື ?*

7. *ທ່ານຍິນດີຈະສ້າງຄວາມສງົບສຸກ, ຄວາມເປັນອັນນຶ່ງອັນດຽວກັນ, ແລະຮັກສາຊື່ງຄວາມ ບໍຣິສຸດຂອງ ຄຣິສຕະຈັກ, ທ່ານຍິນດີຫຼື ?*

8. *ທ່ານຍິນດີຈະຊອກສແວງຫາການຮັບໃຊ້ມວນຊົນດ້ວຍຄວາມຫ້າວຫັນ, ດ້ວຍ ຄວາມສລາດ, ດ້ວຍຈິນຕະນາການ, ແລະດ້ວຍຄວາມຮັກ. ທ່ານຍິນດີຫຼື ?*

໙. *ທ່ານຍິນດີຈະເປັນ ອາຈານທີ່ຊື່ສັດ, ເບິ່ງແຍງດູແລສະມາຊິກ, ນຳພາຈັດຕຽມ ການນະມັສການຂອງພວກເຂົາ. ໃນການຮັບໃຊ້ພຣະເຈົ້າຂອງທ່ານ ທ່ານຍິນດີຈະ ສະແດງຄວາມຮັກ ແລະຄວາມຍຸຕິທັມຂອງພຣະເຢຊູຄຣິສ, ທ່ານຍິນດີຫຼື ?*

ຜູ້ເປັນອາຈານຕອບຮັບຄຳຖາມຕ່າງໆໃນທາງສົມ "*ຍິນດີ*" ແລະຈາກນັ້ນ ທາງຜູ້ບໍຣິຫານ ຣາຍການຈະຕ້ອງທຳການອະທິຖານ ແລະກ່າວຕໍ່ອາຈານໃໝ່ນັ້ນວ່າ:

*ທ່ານ:............ ນັບແຕ່ນີ້ໄປ ທ່ານເປັນອາຈານ ເພື່ອຈະນຳພາການນະມັສການ ແລະການເທສນາຕາມກຳໜົດເວລາທີ່ທາງພາກເພຣັສໄບເທີຣີໄດ້ບົ່ງໄວ້. ຂໍພຣະຄຸນ ແລະສັນຕະສຸກທີ່ມາແຕ່ພຣະເຈົ້າໄດ້ຢູ່ກັບທ່ານຕລອດໄປ. ອາແມນ.*

ຈາກນັ້ນ ກໍຄວນມີການສະແດງຄວາມຕ້ອນຮັບແກ່ອາຈານ ແລະສເລີມສລອງ ພິທີການ ນັ້ນໃຫ້ເໝາະສົມ ແລະມີຄວາມໝາຍສຳຣັບຜູ້ທີ່ມາທຳງານຮັບໃຊ້ພຣະເຈົ້າ ທີ່ທາງ ຄຣິສຕະຈັກໄດ້ເລືອກສັນມາ.

# ພິທີການຖວາຍບ້ານ

ຄາມສຳພັນຣະຫວ່າງມະນຸດກັບພຣະເຈົ້າ ເປັນຄວາມສຳພັນທີ່ຊາບຊຶ້ງທີ່ສຸດ ຜູ້ທີ່ ເຊື່ອໃນພຣະເຈົ້າ ໄດ້ທຳການຖວາຍບ້ານເຮືອນ ຄອບຄົວ ໄຮ່ນາ ຝູງສັດ ແລະສິ່ງອື່ນໆ ຊຶ່ງພຣະເຈົ້າໄດ້ຊົງປະທານໃຫ້ແກ່ເຂົານັ້ນກັບຄືນໃຫ້ພຣະອົງ. ຜູ້ທີ່ເຊື່ອໃນພຣະເຈົ້າ ຄິດສເມີວ່າ ທຸກສິ່ງທີ່ຕົນເອງໄດ້ມານັ້ນ ແມ່ນການປະທານ ພຣະພອນມາແຕ່ພຣະເຈົ້າ ເພາະກ່ອນຈະໄດ້ສິ່ງໃດນຶ່ງມາ ຄຣິສຕຽນໄດ້ມີການ ອະທິຖານ ແລະຫຼັງຈາກໄດ້ມາແລ້ວ ກໍຖືວ່າ ເປັນການສົມຄວນທີ່ຕ້ອງຖວາຍແກ່ ພຣະເຈົ້າ ເພື່ອຂໍການປົກປ້ອງຄຸ້ມຄອງ ຂໍການດູແລເບິ່ງແຍງ ແລະສືບຕໍ່ຂໍພຣະ ພອນຈາກພຣະອົງ. ອາຈານຄວນຈັດຕຽມ ຣາຍການໃຫ້ຮຽບຮ້ອຍ.

## ຣະບຽບໃນການຖວາຍບ້ານ:

ເມື່ອຜູ້ຮັບເຊີນໄດ້ມາກັນຄົບແລ້ວ ພິທີຄວນເລີ້ມດ້ວຍດັ່ງນີ້:

1. ຖວາຍເພັງ
2. ອະທິຖານເປີດປະຊຸມ

### ໓. ເພັງພິເສດ (ຖ້າມີ)

### 4. ອາຈານຈະກ່າວດັ່ງນີ້

*"ທ່ານ ຜູ້ເປັນສະມາຊິກຂອງຄອບຄົວນີ້ ແລະທ່ານທີ່ຮັບເຊີນທີ່ເຄົາຣົບ ແລະນັບຖື, ການທີ່ເຮົາມາຊຸມນຸມກັນອັນນີ້ ກໍເພື່ອທຳພິທີການຖວາຍບ້ານຫຼັງນີ້ ໄວ້ໃນຄວາມພິທັກຮັກສາຂອງພຣະເຈົ້າ ໃນຖານະທີ່ເຮົາ ເປັນຄຣິສຕຽນ ເຮົາມີຄວາມຫວັງໃຈ ແລະເຊື່ອວ່າ ບ້ານຫຼັງນີ້ ເປັນສະຖານທີ່ ທີ່ໃຫ້ຄວາມສຸກ ແລະຄວາມ ຈະເຣີນກ້າວໜ້າຢ່າງແທ້ຈິງ. ຄຳວ່າ "ບ້ານ" ເປັນສະຖາບັນອັນທຳອິດ ຊຶ່ງພຣະເຈົ້າໄດ້ຊົງສະຖາປະນາຂຶ້ນໄວ້ ສຳຣັບບັນດາລູກໆຂອງພຣະອົງ. ກ່ອນທີ່ຈະເກີດມີຕຶກອາຄານທີ່ເປັນຄຣິສຕະຈັກ ແລະກ່ອນ ທີ່ຈະເກີດມີຣັຖບານ ໃດໆ ໃນໂລກ ຊຶ່ງສາມາດປົກຄອງປະເທດໄດ້ "ບ້ານ" ກໍເປັນສະຖາບັນ ຢ່າງນຶ່ງຊຶ່ງພຣະເຈົ້າຊົງພຣະຣາຊທານແກ່ມະນຸດ. ຄວາມຮັກ ໄດ້ເປັນເຄື່ອງຜູກພັນ ອັນດັບແຣກ ຊຶ່ງຮ້ອຍຊີວິດຂອງມະນຸດຊາດເຂົ້າ ດ້ວຍກັນ ໃຫ້ປະສານສຳພັນກັນ ແລະບ້ານ ກໍເປັນສະຖານທີ່ທຳອິດທີ່ມະນຸດຈະສະແດງຄວາມຮັກຂອງຕົນ. "ບ້ານ" ກາຍເປັນສະຖານທີ່ໃຫ້ຄວາມປະຄັບປະຄອງ ແລະຖະນຸຖນອມບຳຣຸງຮັກສາທີ່ແທ້ຈິງ. ເປັນສະຖານທີ່ໃຫ້ການສຶກສາ ເປັນແຫຼ່ງ ອົບຮົມວັທນະທັມ ຊຶ່ງສລຸບແລ້ວ "ບ້ານ" ເປັນແຫຼ່ງກຳເນີດຂອງຄວາມຈະເຣີນ ທຸກຢ່າງ ໃນໂລກ. "ບ້ານ" ເປັນສະຖານທີ່ ຍິ່ງໃຫຍ່ທີ່ສຸດສຳຣັບມະນຸດ ແລະເປັນສະຖານທີ່ສຳແດງຄວາມຈິງແຫ່ງພຣະເຈົ້າ.*

*"ບ້ານ" ເປັນສະຖານທີ່ປ້ອງກັນໃຫ້ເຮົາພົ້ນຈາກຄວາມຮ້ອນຂອງອາກາດ ໃນຍາມ ຮ້ອນ ແລະ ໃຫ້ຄວາມອົບອຸ່ນແກ່ເຮົາ ໃນຍາມໜາວ ເປັນສະຖານທີ່ສຳຣັບການ ຈັດຕຽມ ອາຫານເພື່ອການລ້ຽງດູ ເປັນທີ່ພຳນັກພັກຜ່ອນຈາກຄວາມອິດເມື່ອຍຈາກການ ທຳງານ. "ບ້ານ" ປຽບສະເໝືອນລັກສະນະຂອງແຜ່ນດິນສວັນ ຊຶ່ງພຣະ ເຢຊູຄຣິສເຈົ້າ ໄດ້ສະເດັດໄປຈັດຕຽມໄວ້ສຳຣັບເຮົາທັງຫຼາຍ. ເຮົາມີບ້ານແຫ່ງນຶ່ງ ທີ່ບໍ່ໄດ້ສ້າງດ້ວຍມື ມະນຸດ ແລະຢູ່ໃນແຜ່ນດິນສວັນທີ່ພຣະເຈົ້າໄດ້ຊົງຈັດຕຽມໃຫ້ ແກ່ເຮົາ.*

*ໃນການນະມັສການພຣະເຈົ້າອັນນີ້ ພວກເຮົາຂໍມອບບ້ານຫຼັງນີ້ໄວ້ແກ່ພຣະອົງ ຕາມອຸດົມຄະຕິຂອງຊາວຄຣິສຕຽນ ຊຶ່ງເຮົາຂໍພຣະເຈົ້າຊົງພິທັກຮັກສາ ຄຸ້ມຄອງ ສະມາຊິກຂອງບ້ານນີ້ ໃຫ້ຢູ່ໃນສັນຕິສຸກຂອງພຣະອົງ ໂດຍອາສັຍຄວາມເຊື່ອທີ່ໝັ້ນຄົງ ໃນພຣະອົງ"*

ອາຈານອາດຈັບເອົາກ່ອງເຂົ້ານ້ອຍ ເປີດຝາອອກແລ້ວຍື່ນໃຫ້ເຈົ້າຂອງບ້ານ ຫຼືອາຈານ ຈະຈັບກ່ອງເຂົ້ານັ້ນໄວ້ເອງ ແລ້ວກ່າວວ່າ *"ຕາມທຳນຽມ ຮີດຄອງ ປະເພນີແຕ່ບູຮານມາ ເຈົ້າຂອງບ້ານຈະຕ້ອງເປັນຜູ້ທີ່ມີຄວາມເອື້ອເຟື້ອໂອບອ້ອມ ອາຣີ ໃນການແບ່ງປັນ ອາຫານ ໃຫ້ຄົນອື່ນ ການຮັບປະທານເຂົ້າຕົບດຽວກັນ ຫຼືເຂົ້າຈີ່ກ້ອນດຽວກັນນີ້ ນັບໄດ້ ເປັນສັນຍາລັກ ແຫ່ງການແບ່ງປັນສິ່ງທີ່ເຮົາມີຢູ່ໃຫ້ ແກ່ກັນແລະກັນດ້ວຍຄວາມເຕັມ ແລະພໍໃຈ. ນີ້ຄືນ້ຳໃຈທີ່ຄວນເກີດຂຶ້ນສເມີຕໍ່ຊາວຄຣິສຕຽນທີ່ເຊື່ອພຣະເຈົ້າ.*

### 5. ຂໍ້ຄວາມທີ່ຈະອ່ານຕໍ່ໄປນີ້ ເປັນການກ່າວຕອບຮັບະ

ອາຈານ: *ຄອບຄົວນີ້ໄດ້ສ້າງບ້ານຫຼັງນີ້ ໂດຍພຣະຄຸນອັນລ້ຳເລີດຂອງພຣະເຈົ້າ*

ທີ່ປະຊຸມ: ເຮົາຂໍຖວາຍບ້ານຫຼັງນີ້ແແກ່ພຣະເຈົ້າອົງສູງສຸດ

ອາຈານ: *ດ້ວຍຄຳອະທິຖານຕໍ່ພຣະເຈົ້າ ເພື່ອຂໍການພິທັກຮັກສາຈາກ ພຣະອົງ ໃຫ້ລອດ ພົ້ນຈາກໄພຍພັຍນາໆປະການ*

ທີ່ປະຊຸມ: ເຮົາຂໍຖວາຍບ້ານຫຼັງນີ້ແກ່ພຣະເຈົ້າອົງສູງສຸດ

ອາຈານ: *ດ້ວຍຄວາມຂອບພຣະຄຸນພຣະເຈົ້າ ເພື່ອຄວາມສວຍງາມຂອງຕົ້ນໄມ້ ແລະທຸກສິ່ງທີ່ຢູ່ອ້ອມຮອບບ້ານຫຼັງນີ້*

ທີ່ປະຊຸມ: ເຮົາຂໍມອບບ້ານຫຼັງນີ້ແກ່ພຣະເຈົ້າອົງສູງສຸດ

ອາຈານ: *ດ້ວຍຄວາມຊື່ນຊົມຍິນດີ ໃນການຕ້ອນຮັບມິດສະຫາຍ ແລະຜູ້ທີ່ຂັດສົນ ເພື່ອຮ່ວມສຸກຮ່ວມທຸກກັບບ້ານຫຼັງນີ້*

ທີ່ປະຊຸມ: ເຮົາຂໍຖວາຍບ້ານຫຼັງນີ້ແກ່ພຣະເຈົ້າອົງສູງສຸດ

ອາຈານ: *ເພື່ອຄວາມສຸກສະບາຍຂອງທຸກຄົນທີ່ອາສັຍຢູ່ບ້ານຫຼັງນີ້ ແລະເພື່ອພຣະເຈົ້າຈະປະທານຄວາມສຸກແກ່ບ້ານຫຼັງນີ້ຕລອດໄປ*

ທີ່ປະຊຸມ: ເຮົາຂໍຖວາຍບ້ານຫຼັງນີ້ແກ່ພຣະເຈົ້າອົງສູງສຸດ

ອາຈານ: *ເພື່ອການເຊີດຊູພຣະກຽດຕິຍົດ ແລະສະງ່າຣາສີຂອງອົງພຣະເຢຊູຄຣິສເຈົ້າ ຊຶ່ງເປັນພຣະຜູ້ຊ່ວຍໃຫ້ລອດຂອງເຮົາ ແລະເພື່ອຖວາຍກຽດແດ່ພຣະອົງ ຊຶ່ງຊົງເປັນ ພຣະປະມຸກແຫ່ງບ້ານຫຼັງນີ້*

ທີ່ປະຊຸມ: ເຮົາຂໍຖວາຍບ້ານຫຼັງນີ້ແດ່ພຣະເຈົ້າອົງສູງສຸດ

### ໖. ອາຈານ ອະທິຖານຂໍພຣະພອນ

*"ຂໍພຣະເຈົ້າຜູ້ສູງສຸດ ໄດ້ຊົງອວຍພຣະພອນແກ່ທ່ານ ປົກປັກຮັກສາທ່ານ ແລະເປັນແສງສວ່າງສ່ອງແຈ້ງຊີວິດຂອງທ່ານ. ຂໍພຣະອົງຊົງປະທານຄວາມສຸກ ສັນຕິ ແລະຄວາມຍຸຕິທັມແກ່ທ່ານ ແຕ່ວັນນີ້ແລະສືບໆໄປເປັນນິດເຖີດ. ອາແມນ.*

## ຕົວຢ່າງອີກແບບນຶ່ງ:

ການບັງຄົມທູນ ນຳໂດຍ ອາຈານ

ຖວາຍເພັງ ບົດທີ ໖ "ສາທຸ ສາທຸ ສາທຸ"

ອະທິຖານໄຂພິທີການ

*** ຮຽນທ່ານ ຜູ້ເປັນສະມາຂອງຄອບຄົວນີ້, ແຂກ, ເພື່ອນມິດສະຫາຍທີ່ມາຮ່ວມໃນ ວັນນີ້ ທີ່ນັບຖືແລະຮັກແພງ, ການທີ່ພວກເຮົາມາຊຸມນຸມກັນວັນນີ້ ກໍເພື່ອການ ຖວາຍບ້ານຫຼັງນີ້ ໄວ້ໃນການພິທັກຮັກສາ ໄວ້ໃນການດູແລເບິ່ງແຍງຂອງພຣະເຈົ້າ. ໃນຖານະທີ່ພວກເຮົາເປັນຄຣິສຕຽນ ພວກເຮົາມີຄວາມຫວັງໃຈແລະເຊື່ອໝັ້ນວ່າ ບ້ານຫຼັງນີ້ຈະເປັນສະຖານທີ່ ທີ່ມີຄວາມສຸກ ຄວາມຈະເຣີນ ແລະມີຄວາມກ້າວໜ້າ ຢ່າງແທ້ຈິງ.*

*ພີ່ນ້ອງທີ່ຮັກແພງ ຄຳວ່າບ້ານເປັນສະຖານທີ່ແຫ່ງນຶ່ງທີ່ເປັນຈຸດເລີ່ມຕົ້ນ ຂອງການມີປະເທດ. ບ້ານເຮືອນພຣະເຈົ້າໄດ້ຊົງປະທານໃຫ້ແກ່ມະນຸດ ເພື່ອໃຫ້ ມີຄວາມຮັກແລະການປົກຄອງ ເປັນສາຍຜູກພັນອັນດັບແຣກ ຊຶ່ງຮ້ອຍຊີວິດຂອງ ມະນຸດໃຫ້ ມີການປະສານສຳພັນການເປັນອັນນຶ່ງອັນດຽວກັນຂອງຄອບຄົວ. ບ້ານເປັນສະຖານທີ່ ສຶກສາ ເປັນແຫຼ່ງອົບຮົມວັທນະທັມ ແລະເປັນບ່ອນກຳເນີດ ຂອງຄວາມຈະເຣີນ ທຸກຢ່າງໃນໂລກ. ບ້ານ ໄດ້ກາຍເປັນສະຖານບັນອັນສຳຄັນ ສຳຣັບຊີວິດຂອງມະນຸດ ແລະຍັງເປັນສະຖານທີ່ສຳແດງຄວາມຈິງໃນພຣະເຈົ້າ ອີກດ້ວຍ. ບ້ານ ເປັນສະຖານທີ່ປ້ອງກັນໃຫ້ເຮົາພົ້ນຈາກຄວາມຮ້ອນ ຄວາມ ໜາວຂອງອາກາດ. ເປັນສະຖານທີ່ສຳຣັບ ຈັດຕຽມອາຫານເພື່ອລ້ຽງດູ ເປັນທີ່ພຳ ນັກພັກຜ່ອນຈາກການອິດເມື່ອຍຫຼັງຈາກການ ທຳງານຂອງເຮົາ. ບ້ານ ປຽບເໝືອນ ນຶ່ງສັນຍາລັກແຫ່ງເມືອງສວັນ ຊຶ່ງພຣະເຢຊູຄຣິສ ໄດ້ໄປຈັດຕຽມໄວ້ສຳຣັບເຮົາ.*

*ໃນການມາຊຸມນຸມກັນວັນນີ້ ພວກເຮົາໄດ້ພາກັນສເລີມສລອງມອບ ຖວາຍ ບ້ານຫຼັງນີ້ໃຫ້ແກ່ພຣະເຈົ້າດ້ວຍອຸດົມຄະຕິ ຂອງຊາວຄຣິສຕຽນ ຊຶ່ງພວກ ເຮົາ ຈະທູນຂໍການພິທັກຮັກສາຈາກພຣະເຈົ້າອົງສູງສຸດ ຂໍພຣະອົງຊົງປົກປ້ອງ ຄຸ້ມຄອງ ສະມາຊິກທຸກຄົນຂອງບ້ານຫຼັງນີ້ ທຸກສິ່ງທີ່ຢູ່ໃຕ້ສາຍຄາບ້ານຫຼັງນີ້ ແລະແຜ່ນ ດິນຕອນນີ້ ທີ່ບ້ານນີ້ຕັ້ງຢູ່. ໃຫ້ທຸກສິ່ງນີ້ ໄດ້ມີແຕ່ຄວາມສຸກຊື່ອ ກາລະນານ ດ້ວຍການ ຊົງນຳ ແລະພິທັກຮັກສາຂອງພຣະເຈົ້າ.*

*ພອກທ່ານ ໄດ້ຢູ່ ບ້ານຫຼັງນີ້ ດ້ວຍພຣະກະຣຸນາ ຄຸນຂອງພຣະເຈົ້າ ໂດຍການທູນຂໍຈາກພຣະອົງ. ດັ່ງນັ້ນ ວັນນີ້ ພວກເຮົາຈຶ່ງພ້ອມ ພາກັນ ຖວາຍມອບບ້ານຫຼັງນີ້ ຄືນໃຫ້ແກ່ພຣະເຈົ້າ ຂໍພຣະອົງຊົງເປັນເຈົ້າຂອງ ເພື່ອພິທັກຮັກສາ ທຸກຊີວິດທີ່ຢູ່ພາຍໃຕ້ສາຍຄາ ບ້ານຫຼັງນີ້ ແລະແຜ່ນດິນຕອນນີ້ ໃຫ້ພົ້ນຈາກພັຍພິບັດນາໆປະການ. ຂໍພຣະເຈົ້າຊົງເປັນພຣະປະມຸກຂອງບ້ານນີ້ ນັບແຕ່ວັນນີ້ສືບໄປເປັນນິດ*

ອ່ານພຣະທັມຄຳພີເດີມ ປະຖົມການ 1:1-31 ໜ້າ 1

ຖວາຍເພັງ ບົດທີ 72 "ຂ້າມອບທຸກສິ່ງແກ່ພຣະເຢຊູ"

ອ່ານພຣະທັມ ເພັງສັຣເສີນ 1:1-6 ໜ້າ 676

ອະທິຖານ ຖວາຍບ້ານ *"ຂ້ານແດ່ພຣະເຈົ້າອົງສູງສຸດ ເປັນເວລາດົນນານ ທີ່ພວກຂ້າພະອົງໄດ້ອະທິຖານ ກັບພຣະອົງ ຂໍຊົງໂຜດປະທານ ບ້ານແກ່ຄອບຄົວນີ້ ເພື່ອໃຫ້ເປັນທີ່ຢູ່ອາສັຍ ແລະເວລານີ້ ພຣະອົງກໍຊົງປະທານແລ້ວ ວັນນີ້ ຝູງຂ້າ ທັງຫຼາຍ ຈຶ່ງພ້ອມພາກັນມອບຖວາຍບ້ານຫຼັງນີ້ໃຫ້ກັບພຣະອົງ ຂໍພຣະອົງ ຊົງ ເປັນເຈົ້າຂອງ ຂໍຊົງເປັນປະທານ ເປັນຜູ້ປົກປັກ ຮັກສາ ເປັນຜູ້ເບິ່ງແຍງ ດູແລ ຂໍໃຫ້ປາສຈາກໂລກພັຍໄຂ້ເຈັບ ປາສຈາກເຫດຮ້າຍທັງປວງ ຂໍບ້ານນີ້ໄດ້ພົບ ແຕ່ຄວາມສຸກຄວາມຈະເຣີນ ພົບກັບຄວາມສົມຫວັງແລະສັນຕິສຸກຕລອດການ. ຫາກບ້ານຫຼັງນີ້ຖືກຕັ້ງຢູ່ບ່ອນຮ້າຍ ວັນນີ້ ຂໍພຣະອົງຊົງປ່ຽນປິ້ນໃຫ້ກາຍເປັນ ບ່ອນດີ ຫາກຕັ້ງຢູ່ບ່ອນດີແລ້ວ ກໍຂໍໃຫ້ດີກ່ອນເກົ່າໝື່ນເທົ່າແສນທີ. ຂໍພຣະອົງຊົງໃຫ້ເຫຼົ່າທູດສວັນຂອງພຣະອົງ ລົງມາປົກປັກຮັກສາບ້ານຫຼັງນີ້. ວັນນີ້ ໃນພຣະນາມແຫ່ງພຣະມະຫາເຢຊູຄຣິສ ໄທນາຊາເຣັດ ຂໍສັ່ງໃຫ້ອຳນາດມືດ ຜີມານຊາຕານສິ່ງຊົ່ວຮ້າຍ ສາຣະພັດທີ່ເປັນພັຍຕໍ່ບ້ານຫຼັງນີ້ ຈົ່ງອອກຈາກບ້ານຫຼັງນີ້ ເພາະບ້ານນີ້ ເປັນຂອງພຣະເຈົ້າແລ້ວນັບແຕ່ເວລານີ້ສືບໄປ. ແຕ່ນີ້ໄປ ບ້ານນີ້ຈະມີແຕ່ໂຊກຊັຍ ລາບຍົດສັຣເສີນ ແລະຄວາມຈະເຣີນຕລອດການ.*

*ຂ້ານແດ່ພຣະເຈົ້າ ບ້ານຫຼັງນີ້ ປຽບເໝືອນວິຫານອັນນ້ອຍໆ ຊຶ່ງພວກ ຂ້າພະອົງ ໄດ້ຈິງໃຈມອບຖວາຍແດ່ພຣະອົງ. ຂໍພຣະອົງຊົງເຝົ້າເບິ່ງແຍງຮັກສາ ບ້ານຫຼັງນີ້ຕລອດວັນຄືນ ເພາະບ້ານຫຼັງນີ້ ແຜ່ນດິນຕອນນີ້ ພຣະເຈົ້າໄດ້ຊົງເລືອກ ແລະຈັດສັນໃຫ້ແກ່ ຄອບຄົວນີ້ແລ້ວ. ຍາມທຸກຂໍພຣະອົງຊົງເລົ້າໂລມຈິດໃຈ ຍາມສະໜຸກຂໍພຣະອົງຊົງຮັບກຽດຕິຍົດ ຂໍພຣະຄຸນແລະຄວາມຮັກຂອງພຣະອົງ ຢູ່ກັບບ້ານຫຼັງນີ້ ຢູ່ກັບທຸກຊີວິດ ທີ່ອາສັຍຢູ່ໃຕ້ສາຍຄາບ້ານຫຼັງນີ້. ໃນນາມ ແຫ່ງພຣະມະຫາເຢຊູຄຣິສ ໂລກພັຍ ໄຂ້ເຈັບ ຈົ່ງອອກຈາກບ້ານນີ້ໄປເສັຽໃນວັນນີ້ ໂຊກຮ້າຍນາໆປະການ ຈົ່ງຖອຍໜີ ຈາກບ້ານຫຼັງນີ້ໃນວັນນີ້. ວັນນີ້ ຂໍພຣະເຈົ້າໄດ້ ປາບມານຮ້າຍ ແລະສິ່ງຊົ່ວຮ້າຍທັງປວງ ອອກໄປຈາກບ້ານຫຼັງນີ້. ຂໍໃຫ້ທຸກຄົນ ໄດ້ຮັບແຕ່ຄວາມສຸກຄວາມຈະເຣີນປາຖນາສິ່ງ ໃດທີ່ຊອບທັມ ກໍຂໍໃຫ້ໄດ້ສິ່ງນັ້ນ ດ້ວຍເທີ້ດ.*

*ຂ້ານແດ່ພຣະເຈົ້າ ໂລກນີ້ອະນິຈັງ ສິ່ງທັງປວງເປັນຂອງພຣະອົງ ສ້ອນຄື ບ້ານຢູ່ ທີ່ຖາວອນຂອງພວກຂ້າພະອົງ ວັນນີ້ ສິ່ງທີ່ພຣະອົງປະທານໃຫ້ຄອບຄົວນີ້ ຂໍຖວາຍຄືນແດ່ພຣະອົງ ເພື່ອພຣະອົງຈະຊົງເປັນເຈົ້າຂອງຜູງຜູ້ດຽວ.*

*ຂໍໃຫ້ ບ້ານຫຼັງນີ້ກາຍເປັນ ວິຫານ ທີ່ພຣະອົງຊົງສະຖິດຢູ່ ເປັນວິຫານ ທີ່ຄອບຄົວທີ່ຈະທຳການນະມັສການພຣະອົງ ເປັນບ່ອນຍົກຍໍພຣະກຽດຂອງ ພຣະອົງເປັນບ່ອນຕ້ອນຮັບມິດສະຫາຍ ແລະເປັນບ່ອນທີ່ ພຣະເຈົ້າຊົງອວຍພຣະພອນ.*

*ຂ້ານແດ່ພຣະເຈົ້າ ຂໍພຣະອົງຊົງເປັນແສງສວ່າງແກ່ບ້ານຫຼັງນີ້ ຂໍຊົງເປັນ ເສົາຄ້ຳ ເປັນປະມຸກ ແລະເປັນຜູ້ດຽວທີ່ໃຫ້ການ ເບິ່ງແຍງແລະອວຍພຣະພອນ ໃຫ້ແກ່ບ້ານຫຼັງນີ້. ຍາມຄ່ຳຄືນ ຂໍພຣະອົງຊົງພິທັກຮັກສາ ຍາມຫຼັບນອນຂໍພຣະອົງຊົງສະຖິດຢູ່ດ້ວຍຂໍຣິດທານຸພາບຂອງພຣະອົງ ຊົງປົກປ້ອງຄຸ້ມຄອງທຸກຊີວິດ ໃນບ້ານນີ້. ເຖິງແມ່ນທຸກບ່ອນຈະເປັນບ່ອນໜ້າຢ້ານກົວກໍຕາມ ຂໍໃຫ້ທຸກຊີວິດທີ່ຢູ່ໃຕ້ສາຍຄາ ບ້ານຫຼັງນີ້ ໄດ້ນອນຫຼັບສະບາຍ ແລະຢູ່ຢ່າງປອດພັຍພາຍໃຕ້ຣິດອຳນາດ ແລະການຄຸ້ມຄອງຂອງພຣະເຈົ້າ.*

*ຂ້າແດ່ພຣະເຈົ້າ  ຂໍຊົງຢ່າໃຫ້ມີພັຍອັນຕຣາຍໃດໆເຂົ້າມາໃກ້ບ້ານຫຼັງນີ້  ຂໍຊົງໃຫ້ມານຮ້າຍຕ່າງໆເພີກໜີເສັ້ງຈາກບ້ານຫຼັງນີ້.  ຂໍຣິດອຳນາດຂອງພຣະອົງ ໄດ້ປົກປ້ອງ ຄຸ້ມຄອງ ດູແລ  ທຸກຫ້ອງ  ທຸກບ່ອນທີ່ຢູ່ໃຕ້ສາຍຄາບ້ານຫຼັງນີ້.*

*ຂ້າແດ່ພຣະເຈົ້າ ວັນນີ້ ຝູງຂ້າທັງຫຼາຍ ຈຶ່ງຂໍມອບນ້ອມຕໍ່ພຣະອົງ  ຖວາຍ ບ້ານຫຼັງນີ້ແດ່ພຣະອົງ  ຂໍພຣະອົງຊົງລົງມາຮັບເອົາບ້ານຫຼັງນີ້ ເປັນຂອງພຣະອົງ ດ້ວຍເຖີດ.  ຂໍຊົງສະຖິດຢູ່ກັບບ້ານຫຼັງນີ້  ກັບຄອບຄົວນີ້ ແລະຂໍພຣະອົງຊົງເປັນ ພຣະປະມຸກຂອງ ບ້ານຫຼັງນີ້ ແລະຂອງຄອບຄົວນີ້ ນັບແຕ່ເວລານີ້ ແລະສືບໆໄປເປັນນິດດ້ວຍເຖີ້ນ.*

*ຂໍມອບຖວາຍບ້ານຫຼັງນີ້  ໃນພຣະນາມແຫ່ງພຣະບິດາ  ພຣະບຸດ ແລະພຣະວິນຍານບໍຣິສຸດ.......ອາແມນ.*

ຖວາຍເພັງ ບົດທີ 31  "ຂໍຊົງແບ່ງເຂົ້າຊີວິດ"

ອ່ານພຣະທັມ ເພັງສັຣເສີນ ບົດທີ 23  1:1-6  ໜ້າ 692

ພຣະທັມອ່ານສລັບກັນ ເພື່ອຖວາຍບ້ານ

ຜູ້ນຳ:  *ຂ້າແດ່ພຣະຜູ້ເປັນເຈົ້າພຣະທັມຂອງພຣະອົງຊົງມີຢູ່ຕລອດໄປ ແລະຊົງໝັ້ນຄົງຢູ່ໃນສວັນຊັ້ນຟ້າ*

ທີ່ປະຊຸມ: ຄວາມສັດຈິງຂອງພຣະອົງຊົງດຳຣົງຢູ່ທຸກຍຸກທຸກສະໄໝພຣະອົງຊົງຕັ້ງໂລກນີ້ໄວ້ໃນບ່ອນຂອງມັນ ແລະມັນກໍຍັງຕັ້ງຢູ່.

ຜູ້ນຳ:  *ຍ້ອນຄຳສັ່ງຂອງພຣະອົງ ທຸກສິ່ງກໍຍັງຕັ້ງໝັ້ນຄົງຢູ່ຈັນເຖິງມື້ນີ້ ເພາະທຸກສິ່ງນີ້ເປັນທາດຮັບໃຊ້ຂອງພຣະອົງ*

ທີ່ປະຊຸມ: ຂ້ານ້ອຍຈະບໍ່ລະເລີຍຕໍ່ກົດຣະບຽບຂອງພຣະອົງຈັກເທື່ອ ເພາະຍ້ອນສິ່ງເຫຼົ່ານີ້ ພຣະອົງໄດ້ຊ່ວຍໃຫ້ຂ້ານ້ອຍມີຊີວິດຢູ່

ຜູ້ນຳ:  *ຂ້ານ້ອຍເປັນຄົນຂອງພຣະອົງ ຂໍຊົງຊ່ວຍຂ້ານ້ອຍໃຫ້ພົ້ນພັຍ.*

ທີ່ປະຊຸມ: ຂໍພຣະອົງຊົງຢູ່ກັບພວກຂ້າພະອົງຕລອດໄປເຖີດ.

ຖວາຍເພັງ ບົດທີ 18  "ຂໍພຣະພອນ"

** ທຳພິທີ ມອບບ້ານ:  ໃຊ້ນ້ຳ ເປັນເຄື່ອງໝາຍແຫ່ງການຊຳຣະລ້າງ ສິ່ງຊົ່ວຮ້າຍ ຈາຣຶກພາບໄມ້ກາງແຂນທີ່ປະຕູປ່ອງຢ້ຽມທຸກຫ້ອງເພື່ອເປັນສັນຍາລັກ ໃນການຖວາຍທຸກສິ່ງໃຫ້ແກ່ພຣະເຈົ້າ.  ເຈົ້າຂອງບ້ານໃນການຈັດຕຽມພິທີ ຄວນມີນ້ຳໃສ່ຂັນ.  ອາຈານ ຈັບຂັນ ພ້ອມທັງເຖົ້າແກ່ ຍ່າງໄປທົ່ວທຸກຫ້ອງ ແລະໝາຍກາໄມ້ກາງແຂນໃສ່ປະຕູ ປ່ອງຢ້ຽມ ດ້ວຍນ້ຳໃນຂັນນັ້ນ ແລະກ່າວວ່າ  "*ເຮົາຂໍມອບຫ້ອງນີ້ແກ່ພຣະເຈົ້າ ໃນພຣະນາມແຫ່ງພຣະບິດາ ພຣະບຸດ ແລະພຣະວິນຍານບໍຣິສຸດ... ອາແມນ*

# ຈົບປຶ້ມຄູ່ມືອາຈານໃນການທຳພິທີການ
# ໂດຍ: ດຣ. ເຈມສ໌ ອຸດົມ